ADB

ຍຸດທະສາດການຮ່ວມມື

ສິງຫາ 2017

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, 2017–2020

—

## ການຂະຫຍາຍຕົວທາງດ້ານເສດຖະກິດແບບສົມສ່ວນ ແລະ ຍືນຍົງຍິ່ງຂຶ້ນ

ເອກະສານສະບັບນີ້ໄດ້ຖືກເຜີຍແຜ່ສູ່ສາທາລະນະ ຕາມນະໂຍບາຍການສື່ສານມວນຊົນ ຂອງທະນາຄານພັດທະນາອາຊີ ສະບັບປີ 2011.

Asian Development Bank

**ອັດຕາແລກປ່ຽນ**

(ວັນທີ່ 29 ສິງຫາ 2017)

| | | |
|---|---|---|
| ຫົວໜ່ວຍສະກຸນເງິນ | – | ກີບ |
| 1,00 ກີບ | = | $0,00012 |
| $1,00 | = | 8.296 ກີບ |

**ຕົວອັກສອນຫຍໍ້**

| | | |
|---|---|---|
| ADB | – | ທະນາຄານພັດທະນາອາຊີ |
| ADF | – | ກອງທຶນພັດທະນາອາຊີ |
| AEC | – | ປະຊາຄົມເສດຖະກິດອາຊຽນ |
| ASEAN | – | ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້ |
| CKP | – | ແຜນການສ້າງ, ຄຸ້ມຄອງ ແລະ ນໍາໃຊ້ຄວາມຮູ້ຂອງປະເທດ |
| COL | – | ເງິນກູ້ຢືມຈາກແຫຼ່ງທຶນທົ່ວໄປແບບຜ່ອນຜັນ |
| CPS | – | ຍຸດທະສາດການຮ່ວມມື |
| FDI | – | ການລົງທຶນໂດຍກົງຈາກຕ່າງປະເທດ |
| GDP | – | ລວມຍອດຜະລິດຕະພັນພາຍໃນປະເທດ |
| GMS | – | ອະນຸພາກພື້ນແມ່ນໍ້າຂອງ |
| IMF | – | ກອງທຶນການເງິນສາກົນ |
| KPS | – | ຜະລິດຕະພັນ ແລະ ການບໍລິການທາງດ້ານຄວາມຮູ້ |
| Lao PDR | – | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LDC | – | ປະເທດດ້ອຍພັດທະນາ |
| MSMEs | – | ວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ |
| NSEDP | – | ແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ |
| PPP | – | ການຮ່ວມມືລະຫວ່າງພາກລັດ–ເອກະຊົນ |
| PRI | – | ພື້ນຖານໂຄງລ່າງໃນເຂດຊົນນະບົດທີ່ມີປະສິດທິຜົນ |
| RCI | – | ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ |
| SDGs | – | ເປົ້າໝາຍການພັດທະນາແບບຍືນຍົງ |
| TA | – | ຊ່ວຍເຫຼືອທາງດ້ານວິຊາການ |
| TVET | – | ອາຊີວະສຶກສາ |
| VDPEDC | – | ຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມງານເພື່ອການພັດທະນາທີ່ມີປະສິດທິຜົນ |
| WSS | – | ນໍ້າປະປາ ແລະ ສຸຂາພິບານ |

**ໝາຍເຫດ**

(i) ມາຮອດປີ 2016 ປີງົບປະມານຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສິ້ນສຸດໃນວັນທີ່ 30 ກັນຍາ. “ປີງົບປະມານ” ກ່ອນປີປະຕິທິນ ແມ່ນໃຫ້ລະບຸປີທີ່ປີງົບປະມານສິ້ນສຸດລົງ, ຕົວຢ່າງ: ປີງົບປະມານ ຂອງ 2015 ຈະສິ້ນສຸດລົງໃນວັນທີ 30 ກັນຍາ 2015. ນັບຕັ້ງແຕ່ປີ 2017 ເປັນຕົ້ນໄປ, ປີງົບປະມານ ຈະຖືກປ່ຽນໄປຕາມປີປະຕິທິນ.

(ii) ໃນບົດລາຍງານສະບັບນີ້, "$" ໝາຍເຖິງ ສະກຸນເງິນໂດລາສະຫະລັດ.

| | |
|---|---|
| ຮອງປະທານ | S. Groff, ປະຕິບັດງານ 2 |
| ຜູ້ອຳນວຍການໃຫຍ່ | R. Subramaniam, ກົມອາຊີຕາເວັນອອກສຽງໃຕ້ (SERD) |
| ຜູ້ອຳນວຍການ | Y. Negishi, ຜູ້ຕາງໜ້າທະນາຄານພັດທະນາອາຊີປະຈຳສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກົມອາຊີຕາເວັນອອກສຽງໃຕ້ |
| ຫົວໜ້າທີມງານ<br>ສະມາຊິກຂອງທີມງານ | S. Bando, ຜູ້ຊ່ຽວຊານອາວຸໂສ ສຳນັກງານເອດີບີປະຈຳ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້<br>A. Bernardo, ຜູ້ຊ່ຽວຊານດ້ານການຮ່ວມມືໃນການຈັດຫາແຫຼ່ງທຶນ, ກົມອາຊີຕາເວັນອອກສຽງໃຕ້<br>K. Chanthy, ພະນັກງານອາວຸໂສດ້ານໂຄງການ (ການພັດທະນາສັງຄົມ), ສຳນັກງານເອດີບີປະຈຳ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້<br>B. Clochard, ຜູ້ຊ່ຽວຊານດ້ານການພັດທະນາຕົວເມືອງ (ນ້ຳປະປາ ແລະ ສຸຂາພິບານ), ກົມອາຊີຕາເວັນອອກສຽງໃຕ້<br>B. J. Coloma, ຊ່ຽວຊານດ້ານການພັດທະນາຕົວເມືອງ (ນ້ຳປະປາ ແລະ ສຸຂາພິບານ), ກົມອາຊີຕາເວັນອອກສຽງໃຕ້<br>R. Elfving, ຜູ້ຊ່ຽວຊານອາວຸໂສດ້ານການຮ່ວມມືໃນການຈັດຫາແຫຼ່ງທຶນ, ສຳນັກງານປະຕິບັດການຈັດຫາແຫຼ່ງທຶນສົມທົບ<br>P. R. Flegler, ຜູ້ຊ່ຽວຊານອາວຸໂສການລົງທຶນ, ກົມປະຕິບັດການພາກເອກະຊົນ (PSOD)<br>K. Hattel, ຜູ້ຊ່ຽວຊານດ້ານຂະແໜງການເງິນ, ກົມອາຊີຕາເວັນອອກສຽງໃຕ້<br>U. Hoque, ຜູ້ຊ່ຽວຊານອາວຸໂສດ້ານຂະແໜງສັງຄົມ, ກົມອາຊີຕາເວັນອອກສຽງໃຕ້<br>S. Ishii, ຜູ້ຊ່ຽວຊານອາວຸໂສດ້ານການພັດທະນາຕົວເມືອງ, ກົມອາຊີຕາເວັນອອກສຽງໃຕ້<br>M. S. M. Ismail, ຜູ້ຊ່ຽວຊານດ້ານຂະແໜງການເງິນ (ຕະຫຼາດເງິນທຶນ), ກົມອາຊີຕາເວັນອອກສຽງໃຕ້<br>R. Kausar, ຜູ້ຊ່ຽວຊານດ້ານການຄຸ້ມຄອງໂຄງການ, ກົມອາຊີຕາເວັນອອກສຽງໃຕ້<br>K. Koiso, ຜູ້ຊ່ຽວຊານດ້ານການຈັດຊື້-ຈັດຈ້າງ, ກົມບໍລິຫານການເງິນ ແລະ ການບໍລິການດ້ານປະຕິບັດງານ<br>W. Kubitzki, ຜູ້ຊ່ຽວຊານດ້ານຂະແໜງສັງຄົມ, ກົມອາຊີຕາເວັນອອກສຽງໃຕ້<br>S. Leuangkhamsing, ພະນັກງານອາວຸໂສດ້ານເສດຖະສາດ, ສຳນັກງານເອດີບີປະຈຳ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້<br>L. S. Levaque, ຜູ້ຊ່ຽວຊານດ້ານການພັດທະນາສັງຄົມ (ເພດແລະການພັດທະນາ), ກົມອາຊີຕາເວັນອອກສຽງໃຕ້<br>R. Lockhart, ຜູ້ຊ່ຽວຊານທາງດ້ານການລົງທຶນ, ກົມປະຕິບັດການພາກເອກະຊົນ<br>P. Louangraj, ພະນັກງານອາວຸໂສດ້ານເສດຖະສາດ, ສຳນັກງານເອດີບີປະຈຳ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້<br>R. Luanglatbandith, ຜູ້ຊ່ຽວຊານດ້ານການບໍລິຫານພາກລັດ, ສຳນັກງານເອດີບີປະຈຳ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້<br>J. Mangahas, ຜູ້ຊ່ຽວຊານອາວຸໂສດ້ານຂະແໜງສັງຄົມ, ກົມອາຊີຕາເວັນອອກສຽງໃຕ້<br>J. Miller, ຜູ້ຊ່ຽວຊານທາງດ້ານການຂົນສົ່ງ, ກົມອາຊີຕາເວັນອອກສຽງໃຕ້<br>A. Musa, ຜູ້ຊ່ຽວຊານອາວຸໂສດ້ານການບໍລິຫານການເງິນ, ກົມອາຊີຕາເວັນອອກສ່ຽງໃຕ້<br>K. H. Naqvi, ນັກເສດຖະສາດ, ກົມຮ່ວມມືໃນພາກພື້ນ ແລະ ຄົ້ນຄວ້າທາງດ້ານເສດຖະສາດ (ERCD)<br>C. M. Nguyen, ຜູ້ຊ່ຽວຊານດ້ານການຮ່ວມມືໃນພາກພື້ນ, ກົມອາຊີຕາເວັນອອກສຽງໃຕ້<br>S. Phanouvong, ພະນັກງານອາວຸໂສໂຄງການ, ສຳນັກງານເອດີບີປະຈຳ ສປປ ລາວ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມອາຊີຕາເວັນອອກສຽງໃຕ້<br>P. Ramachandran, ຜູ້ຊ່ຽວຊານອາວຸໂສດ້ານສິ່ງແວດລ້ອມ, ກົມອາຊີຕາເວັນອອກສຽງໃຕ້<br>C. D. Salter, ຜູ້ຊ່ຽວຊານອາວຸໂສດ້ານກະສິກຳ ແລະ ຊັບພະຍາກອນທຳມະຊາດ, ກົມອາຊີຕາເວັນອອກ ສຽງໃຕ້ |

| | |
|---|---|
| | T. Saphakdy, ພະນັກງານພັດທະນາທາງດ້ານສັງຄົມ (ບົດບາດຍິງ–ຊາຍ), ສຳນັກງານເອດີບີ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້<br>A. Sato, ຜູ້ຊ່ຽວຊານທາງດ້ານສຸຂະພາບ, ກົມອາຊີຕາເວັນອອກສຽງໃຕ້<br>S. Schipani, ຜູ້ຊ່ຽວຊານອາວຸໂສດ້ານຄຸ້ມຄອງໂຄງການ,ສຳນັກງານເອດີບີປະຈຳ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້<br>G. Servais, ຜູ້ຊ່ຽວຊານອາວຸໂສດ້ານສຸຂະພາບ, ກົມອາຊີຕາເວັນອອກສຽງໃຕ້<br>P. Tharakan, ຜູ້ຊ່ຽວຊານດ້ານການປ່ຽນແປງດິນຟ້າອາກາດຂັ້ນອາວຸໂສ, ກົມອາຊີຕາເວັນອອກສຽງໃຕ້<br>E. Thomas, ຜູ້ຊ່ຽວຊານດ້ານການພັດທະນາສັງຄົມ (ປະຊາສັງຄົມ ແລະ ການມີສ່ວນຮ່ວມ), ກົມອາຊີຕາເວັນອອກສຽງໃຕ້<br>P. Xayyavong, ພະນັກງານອາວຸໂສດ້ານສັງຄົມ (ສາທາ), ສຳນັກງານເອດີບີປະຈຳ ສປປ ລາວ, ກົມອາຊີຕາເວັນອອກສຽງໃຕ້ |
| **ຄະນະຜູ້ທົບທວນ** | N. J. Ahmad, ຮອງຫົວໜ້າກົມ, ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແລະ ການພັດທະນາແບບຍືນຍົງ ແລະ ຍັງເປັນຫົວໜ້າພະແນກຄວບຄຸມການປະຕິບັດຕາມກົດໝາຍ<br>K. Lao-Araya, ຜູ້ຕາງໜ້າເອດີບີ ປະຈຳປະເທດພູຖານ, ກົມອາຊີຕາເວັນຕົກ ແລະ ອາຊີກາງ<br>S. Campbell, ຮອງຜູ້ຕາງໜ້າສຳນັກງານເອດີບີ ປະຈຳອັບການິດສະຖານ, ກົມອາຊີຕາເວັນຕົກ ແລະ ອາຊີກາງ<br>J. Menon, ນັກເສດຖະສາດຜູ້ທີ່ມີປະສົບການ (ການຮ່ວມມືໃນພາກພື້ນ ແລະ ການຄ້າ), ກົມຄົ້ນຄ້ວາເສດຖະກິດ ແລະ ຮ່ວມມືກັບພາກພື້ນ |

ໃນການກະກຽມຍຸດທະສາດການຮ່ວມມື, ການຈັດຫາແຫຼ່ງທຶນໃຫ້ໂຄງການ, ການກຳນົດ ຫຼື ການອ້າງອີງເຖິງພື້ນທີ່ ຫຼື ເຂດພູມສາດໃດໜຶ່ງໃນເອກະສານສະບັບນີ້ ທະນາຄານພັດທະນາອາຊີ ບໍ່ມີເຈດຕະນາໃນການຕັດສິນທາງດ້ານກົດໝາຍ ຫຼື ສະຖານະພາບອື່ນໆຂອງພື້ນທີ່ ຫຼື ເຂດພູມສາດໃດໜຶ່ງ.

**ສາລະບານ**

**ໜ້າ**


ສະພາບລວມຂອງປະເທດ

I. ສັງລວມກ່ຽວກັບຍຸດທະສາດການຮ່ວມມື 1

II. ສະພາບການພັດທະນາຂອງປະເທດ 2

ກ. ສະພາບເສດຖະກິດ ແລະ ສັງຄົມ 2

ຂ. ສິ່ງທ້າທາຍໃນການພັດທະນາ 4

III. ຂອບເຂດວຽກງານຍຸດທະສາດ 6

ກ. ບົດຮຽນທີ່ຖອດຖອນໄດ້ຈາກຍຸດທະສາດສະບັບກ່ອນ 6

ຂ. ຍຸດທະສາດການພັດທະນາແຫ່ງຊາດ 7

ຄ. ພາລະບົດບາດຂອງຄູ່ຮ່ວມພັດທະນາ 7

ງ. ຈຸດປະສົງດ້ານຍຸດທະສາດ ແລະ ຂະແໜງການທີ່ສຳຄັນ ແລະ ບູລິມະສິດຂອງການດຳເນີນງານຂອງເອດີບີ 8

ຈ. ບັນດາບູລິມະສິດໃນການສະໜັບສະໜູນດ້ານຄວາມຮູ້ 13

IV. ການຈັດຕັ້ງປະຕິບັດຍຸດທະສາດ 14

ກ. ຂະໜາດຂອງທຶນຊ່ວຍເຫລືອ 14

ຂ. ບູລິມະສິດໃນການຈັດຕັ້ງປະຕິບັດ 15

ຄ. ການຕິດຕາມຜົນໄດ້ຮັບ 15

ງ. ຄວາມສ່ຽງ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງ 15

ເອກະສານຊ້ອນທ້າຍ

1. ຂອບຜົນໄດ້ຮັບຂອງຍຸດທະສາດເພື່ອການຮ່ວມມື, 2017–2020 17

2. ແຜນການຄຸ້ມຄອງ ແລະ ນຳໃຊ້ຄວາມຮູ້ຂອງປະເທດ 20

3. ເອກະສານທີ່ກ່ຽວຂ້ອງ 26

## ສະພາບລວມຂອງປະເທດ

| ເສດຖະກິດ | 2012 | 2013 | 2014 | 2015 | 2016[a] |
|---|---|---|---|---|---|
| ລວມຍອດຜະລິດຕະພັນພາຍໃນປະເທດ (GDP) ($ ຕື້, ຕາມຕົວເລກປະຈຸບັນ) | 9,45 | 10,81 | 11,74 | 12,56 | 13,72 |
| GDP ຕໍ່ ຫົວຄົນ ($, ຕາມຕົວເລກປະຈຸບັນ) | 1.445 | 1.713 | 1.835 | 1.912 | 2.027 |
| ການຂະຫຍາຍຕົວຂອງ GDP (%, ໃນອັດຕາຄົງທີ່) | 7,9 | 7,9 | 7,4 | 6,7 | 6,8 |
| ກະສິກຳ | 3,3 | 3,5 | 2,9 | 2,0 | 2,5 |
| ອຸດສະຫະກຳ | 11,4 | 9,7 | 8,5 | 8,0 | 8,0 |
| ການບໍລິການ | 9,3 | 9,7 | 9,0 | 8,5 | 9,0 |
| ລວມຍອດມູນຄ່າລົງທຶນພາຍໃນປະເທດ (% ຂອງ ຈີດີພີ) | … | … | … | … | … |
| ລວມຍອດມູນຄ່າເງິນສະສົມພາຍໃນປະເທດ (% ຂອງ ຈີດີພີ) | … | … | … | … | … |
| ດັດສະນີລາຄາຜູ້ບໍລິໂພກ (ການປ່ຽນແປງເປັນ % ຕໍ່ປີ) | 4,3 | 6,4 | 4,2 | 1,3 | 1,6 |
| ປະລິມານເງິນ (M2) (ການປ່ຽນແປງເປັນ % ຕໍ່ປີ) | 31,0 | 18,8 | 23,4 | 14,7 | 10,9 |
| ການເກີນດຸນງົບປະມາລວມ (ການຂາດດຸນ) (% ຂອງ ຈີດີພີ)[b] | (0,5) | (5,6) | (4,5) | (2,7) | (5,9) |
| ດຸນການຄ້າ (% ຂອງ ຈີດີພີ) | (32,5) | (32,1) | (27,8) | (27,2) | (18,0) |
| ດຸນບັນຊີເດີນສະພັດ (% ຂອງ ຈີດີພີ) | (29,9) | (29,6) | (20,7) | (16,8) | (14,1) |
| ການຊຳລະໜີ້ສິນທີ່ເປັນເງິນກູ້ຕ່າງປະເທດ (% ຂອງ ການສົ່ງອອກສິນຄ້າ ແລະ ການບໍລິການ) | 9,3 | 13,6 | 12,8 | 12,3 | 20,6 |
| ໜີ້ສິນທີ່ເປັນເງິນກູ້ຕ່າງປະເທດ (% ຂອງ GDP) (Nominal) | 79,8 | 86,9 | 92,7 | 95,5 | 98,1 |

| ຄວາມທຸກຍາກ ແລະ ສັງຄົມ | Earlier Year | Latest Year |
|---|---|---|
| ປະຊາກອນ (ລ້ານຄົນ) | 5,6 [2005] | 6,49 [2015] |
| ການຂະຫຍາຍຕົວຂອງປະຊາກອນ (ການປ່ຽນແປງເປັນ % ຕໍ່ປີ) | 2,08 [2005][c] | 1,45 [2015][c] |
| ອັດຕາການຕາຍຂອງແມ່ (ຕໍ່ 100.000 ຄົນທີ່ໃຫ້ກຳເນີດລູກ) | 405,0 [2005] | 197,0 [2015] |
| ອັດຕາການຕາຍຂອງເດັກ (ຕ່ຳກວ່າ 1 ປີ/ຕໍ່ເດັກນ້ອຍ 1,000 ຄົນ) | 70,0 [2005] | 57,0 [2015] |
| ອາຍຸຄາດໝາຍສະເລ່ຍ (ປີ) | 61,0 [2005] | 63,5 [2015] |
| ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ (%) | 72,7 [2005] | 84,7 [2015] |
| ອັດຕາການເຂົ້າຮຽນຊັ້ນປະຖົມ (%) | 94,1 [2010] | 97,9 [2016] |
| ອັດຕາເດັກທີ່ຂາດສານອາຫານ (% ເດັກອາຍຸຕ່ຳກວ່າ 5 ປີ, ຢຸດຢັ້ງການຈະເລີນເຕີບໂຕ) | 40,0 [2006] | 44,0 [2012] |
| ປະຊາກອນທີ່ທຸກຍາກ (%) | 27,6 [2008] | 23,2 [2013] |
| ປະຊາກອນທີ່ເຂົ້າເຖິງນ້ຳສະອາດໃນເຂດຕົວເມືອງ (%) | 69,6 [2011] | 86,0 [2015] |
| ປະຊາກອນທີ່ເຂົ້າເຖິງສຸຂາພິບານໃນເຂດຕົວເມືອງ (%) | 61,5 [2011] | 71,0 [2015] |

| ສິ່ງແວດລ້ອມ | | |
|---|---|---|
| ການປ່ອຍອາຍກາກໂບນິກ (‘000 ໂຕນ) | 2.174 | [2013] |
| ອັດຕາການປ່ອຍອາຍກາກໂບນິກຕໍ່ຫົວຄົນ (ໂຕນຕໍ່ຫົວຄົນ) | 0,33 | [2013] |
| ພື້ນທີ່ປ່າໄມ້ (ລ້ານເຮັກຕ້າ) | 9,5 | [2010] |
| ປະຊາກອນໃນຕົວເມືອງ (% ຂອງຈຳນວນປະຊາກອນທັງໝົດ) | 33 | [2015] |

| **ຂໍ້ມູນການດຳເນີນານຂອງ ເອດີບີ** (ເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອລ້າຈາກກອງທຶນພັດທະນາອາຊີ)[d] | **ວັນທີ 31 ທັນວາ 2016** |
|---|---|
| ຈຳນວນໂຄງການເງິນກູ້ຢືມ ແລະ ໂຄງການເງິນຊ່ວຍເຫຼືອລ້າຈາກກອງທຶນພັດທະນາອາຊີ | 32 |
| **ລັດຖະບານ** | 30 |
| **ເງິນກູ້ທີ່ບໍ່ແມ່ນຂອງລັດຖະບານ** | 2 |

| | |
|---|---|
| ຈຳນວນເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອລ້າທັງໝົດຈາກກອງທຶນພັດທະນາອາຊີ ($ ລ້ານ, ສະສົມລວມ)[e] | 853,36 |
| **ລັດຖະບານ** | 709,36 |
| **ເງິນກູ້ທີ່ບໍ່ແມ່ນຂອງລັດຖະບານ** | 144,00 |
| ການເບີກຈ່າຍ | |
| ຈຳນວນທີ່ເບີກຈ່າຍ ($ ລ້ານ, 2016) | 56,12 |
| ອັດຕາການເບີກຈ່າຍ (%) | 13,73 |

… = ບໍ່ມີ, ( ) = ຜົນລົບ, [ ] = ຂໍ້ມູນປີຫຼ້າສຸດ, ADB = ທະນາຄານພັດທະນາອາຊີ, ADF = ກອງທຶນພັດທະນາອາຊີ, GDP = ລວມຍອດຜະລິດຕະພັນພາຍໃນປະເທດ, M2 = ປະລິມານເງິນ.

[a] ຄາດຄະເນ.

[b] ຄາດຄະເນ.

[c] ສະເລ່ຍ 10 ປີ ກ່ອນ ປີທີ່ໄດ້ກຳນົດ.

[d] ລວມທັງການສະໜອງເງິນຈາກແຫລ່ງທຶນທົ່ວໄປ ແລະ ແຫລ່ງທຶນພັດທະນາອາຊີສຳລັບໂຄງການ ແລະ ແຜນງານຕ່າງໆ ເຊິ່ງລວມທັງເງິນກູ້ຢືມແບບອີງໃສ່ນະໂຍບາຍ.

[e] ຈຳນວນເງິນທີ່ມີການຍົກເລີກກ່ອນການເຊັນສັນຍາ ແລະ ຫຼັງສັນຍາ.

ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ, ປີ 2017. *ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບົດລາຍງານຂອງເຈົ້າໜ້າທີ່ ຂອງກອງທຶນສາກົນຕາມມາດຕາ IV ວ່າດ້ວຍການປຶກສາຫາລື -ການວິເຄາະຄວາມຍືນຍົງຂອງໜີ້ສິນ ໃນປີ 2016.* ນະຄອນຫຼວງ ວໍຊິງຕັນດີຊີ; ກະຊວງອຸດສະຫະກຳ ແລະ ການຄ້າ, *ຂໍ້ມູນກ່ຽວກັບການນຳເຂົ້າ ແລະ ສົ່ງອອກ*; ສູນສະຖິຕິແຫ່ງຊາດ; *ປຶ້ມຂໍ້ມູນສະຖິຕິປະຈຳປີ 2015*; ການຄາດຄະເນຂອງທະນາຄານໂລກ ແລະ ທະນາຄານພັດທະນາອາຊີ.

## I. ສັງລວມກ່ຽວກັບຍຸດທະສາດການຮ່ວມມື

1. **ສິ່ງທ້າທາຍໃນການພັດທະນາ.** ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ໄດ້ນໍາໃຊ້ແຫຼ່ງຊັບພະຍາກອນທໍາມະຊາດຂອງຕົນຢ່າງເປັນປະໂຫຍດ ເພື່ອເຮັດໃຫ້ເສດຖະກິດມີການຂະຫຍາຍຕົວສູງ ແລະ ເພື່ອຫຼຸດຜ່ອນຄວາມ ທຸກຍາກ ແຕ່ໃນເມື່ອປະເທດກໍາລັງກ້າວໄປຂ້າງໜ້າ ການຂະຫຍາຍຕົວທາງດ້ານເສດຖະກິດ ຈະຕ້ອງມີຄວາມສົມສ່ວນ ແລະ ມີຄວາມຍືນຍົງຫລາຍຂຶ້ນກວ່າເກົ່າ. ເພື່ອບັນລຸເປົ້າໝາຍດັ່ງກ່າວ ສປປ ລາວ ຕ້ອງ (i) ຂະຫຍາຍຖານເສດຖະກິດ ທີ່ອີງໃສ່ແຫຼ່ງຊັບພະຍາກອນຂອງຕົນໃຫ້ມີຄວາມຫຼາກຫຼາຍ ແລະ ສ້າງເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງ; (ii) ພັດທະນາພື້ນຖານໂຄງລ່າງເພື່ອອໍານວຍຄວາມສະດວກໃຫ້ແກ່ການລົງທຶນຂອງພາກເອກະຊົນ; ປັບປຸງຜະລິດຕະພາບ ແລະ ເປີດກວ້າງການເຂົ້າເຖິງຕະຫຼາດ ແລະ ການບໍລິການທາງສັງຄົມ; (iii) ເລັ່ງການປະຕິຮູບລະບຽບ ແລະ ກົດໝາຍເພື່ອປັບປຸງສະພາບແວດລ້ອມການລົງທຶນໃຫ້ແກ່ພາກເອກະຊົນ; (iv) ປັບປຸງການບໍລິຫານລັດ ເພື່ອຍົກລະດັບ ຄຸນນະພາບ ແລະ ຂະຫຍາຍຂອບເຂດການບໍລິການສາທາລະນະໃຫ້ທົ່ວເຖິງ; (v) ພັດທະນາຊັບພະຍາກອນມະນຸດ ໃນແນວທາງທີ່ມີແຮງງານທີ່ມີສຸຂະພາບແຂງແຮງ ແລະ ມີຜະລິດຕະພາບ ໄປພ້ອມໆກັນກັບແຮງງານທີ່ມີສີມື ແລະ ຂີດຄວາມສາມາດທີ່ຕ້ອງການ; ແລະ (vi) ແກ້ໄຂບັນຫາການເສື່ອມໂຊມທາງດ້ານສິ່ງແວດລ້ອມ ແລະ ການປ່ຽນແປງ ດິນຟ້າອາກາດ.

2. **ການປະກອບສ່ວນທີ່ສອດຄ່ອງໃນການເຂົ້າມາມີສ່ວນຮ່ວມຂອງທະນາຄານພັດທະນາອາຊີ.** ເປົ້າໝາຍໂດຍລວມຂອງແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ຂອງ ສປປ ລາວ (NSEDP) (2016–2020) ທີ່ມີເປົ້າໝາຍ ໃນການຫລຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາໃນປີ 2020 (ວັກທີ 18). ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ຍັງລວມເອົາເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ (SDGs) ແລະ ກວມເອົາການກໍານົດການປະກອບສ່ວນຂອງປະເທດຕໍ່ຂໍ້ຕົກລົງປາຣີສ ພາຍໃຕ້ຂອບວຽກສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດຂອງສະຫະປະຊາຊາດ.[1] ຍຸດທະສາດການຮ່ວມມື ທີ່ສະເໜີຂອງທະນາຄານພັດທະນາອາຊີສໍາລັບ ສປປ ລາວ, 2017–2020 ແມ່ນສອດຄ່ອງກັບວາລະການຂະຫຍາຍໂຕແບບຍືນຍົງ ແລະ ສົມສົມສ່ວນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ແຜນປະຕິບັດຕາມການທົບທວນຍຸດທະສາດ 2020 ກາງສະໄໝ ຂອງ ເອດີບີ.[2] ຍຸດທະສາດນີ້ ໄດ້ລວມເອົາບົດຮຽນທີ່ຖອດຖອນໄດ້ຈາກຍຸດທະສາດການຮ່ວມມືໃນໄລຍະທີ່ຜ່ານມາ ແລະ ການປະເມີນຜົນຕ່າງໆ.[3] ຍັງໄດ້ຮັບຜົນປະໂຫຍດຈາກວຽກງານ ແລະ ການປຶກສາຫາລືກ່ຽວກັບຍຸດທະສາດ 2030 ຂອງ ເອດີບີ ທີ່ກໍາລັງດໍາເນີນການຢູ່.

3. **ຍຸດທະສາດ.** ຍຸດທະສາດເພື່ອການຮ່ວມມືໄດ້ປະສົມປະສານຄວາມຮູ້ກັບການເງິນ ເພື່ອຊ່ວຍລັດຖະບານ ໃຫ້ບັນລຸໝາກຜົນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ຕາມຈຸດໝາຍລວມຂອງການຂະຫຍາຍຕົວທາງເສດຖະກິດເສດຖະກິດແບບສົມສ່ວນ ແລະ ຍືນຍົງຂຶ້ນກວ່າເກົ່າ. ພາຍໃຕ້ຍຸດທະສາດການຮ່ວມມື ການດໍາເນີນງານຂອງເອດີບີ ຈະສຸມໃສ່ (i) ປັບປຸງການເຊື່ອມໂຍງທາງກາຍຍະພາບ ເພື່ອສົ່ງເສີມການລົງທຶນຂອງພາກເອກະຊົນ ໃນເສດຖະກິດ ເພື່ອສ້າງວຽກເຮັດງານທໍາ ແລະ ສ້າງລາຍໄດ້, (ii) ພັດທະນາສີມືແຮງງານ ທີ່ຈະສະໜັບສະໜູນການເຕີບໂຕຂອງຂະແໜງການທີ່ບໍ່ຂຶ້ນກັບຊັບພະຍາກອນທໍາມະຊາດ ແລະ ປັບປຸງການເຂົ້າເຖິງການບໍລິການສາທາລະນະສຸກ ເພື່ອຍົກລະດັບຜະລິດຕະພາບຂອງແຮງງານ

---

[1] ລັດຖະບານ ແຫ່ງ ສປປ ລາວ, ກະຊວງ ແຜນການ ແລະ ການລົງທຶນ, 2016. *ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII, 2016–2020.* ນະຄອນຫຼວງວຽງຈັນ.

[2] ເອດີບີ. 2014. *ແຜນປະຕິບັດງານຍຸດທະສາດ2020ທົບທວນກາງສະໄໝ ຂອງ ເອດີບີ 2020.* ນະຄອນຫຼວງ ມະນີລາ.

[3] ເອດີບີ. 2010. *ການປະເມີນແຜນງານຊ່ວຍເຫຼືອປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ການເຕີບໃຫຍ່ຂະຫຍາຍຕົວແບບຍືນຍົງ ແລະ ການເຊື່ອມໂຍງ.* ນະຄອນຫຼວງມະນີລາ; ເອດີບີ. 2015. *ສປປ ລາວ: ຍຸດທະສາດເພື່ອການຮ່ວມມືກັບປະເທດ, 2012–2016 ການທົບທວນຄັ້ງສຸດທ້າຍ.* ນະຄອນຫຼວງມະນີລາ; ແລະ ກົມປະເມີນຜົນອິດສະຫຼະ. 2016. ສປປ ລາວ: *ການຮັບຮອງການທົບທວນຍຸດທະສາດເພື່ອການຮ່ວມມືກັບປະເທດ ຄັ້ງສຸດທ້າຍ, 2012–2016.* ນະຄອນຫຼວງມະນີລາ: ເອດີບີ.

ແລະ (iii) ຮັບປະກັນການຄຸ້ມຄອງຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ ແລະ ການປັບຕົວກັບສະພາບດິນຟ້າອາກາດ. ຄວາມສະເໝີພາບ ບົດບາດ ຍິງ-ຊາຍ ແລະ ການປົກຄອງ ແມ່ນວຽກງານທີ່ຕິດພັນກັບຫລາຍຂະແໜງການ. ຍຸດທະສາດການຮ່ວມມື ຈະຕອບສະໜອງຢ່າງຍືດຢຸ່ນຕໍ່ກັບບູລິມະສິດຕ່າງໆ ຂອງລັດຖະບານ ໃນການຈັດຕັ້ງປະຕິບັດ. ຕາຕະລາງໃນພາກທີ III ສະແດງໃຫ້ເຫັນເຖິງ ການກຳນົດບູລິມະສິດ ຂອງຍຸດທະສາດເພື່ອການຮ່ວມມືວ່າ (i) ສອດຄ່ອງກັບບູລິມະສິດຂອງແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແນວໃດ, (ii) ຊ່ວຍແກ້ໄຂບັນດາສິ່ງທ້າທາຍດ້ານການພັດທະນາທີ່ສຳຄັນໆແນວໃດ, ແລະ (iii) ລວບລວມເອົາບົດຮຽນຕ່າງໆ ທີ່ຖອດຖອນໄດ້ຈາກການດາເນີນງານຂອງເອດີບີທີ່ຜ່ານມາໄດ້ຄືແນວໃດ. ການປະຕິບັດຕາມຂັ້ນຕອນກະກຽມຄວາມພ້ອມຂອງໂຄງການ ຢ່າງເຄັ່ງຄັດ ຈະຊ່ວຍເລັ່ງໃຫ້ການລິເລີ່ມໃນການຈັດຕັ້ງປະຕິບັດໂຄງການ ແລະ ເພີ່ມທະວີປະສິດທິພາບໃນການດຳເນີນງານ.

4. **ການເພີ່ມມູນຄ່າຂອງເອດີບີ.** ການຊ່ວຍເຫລືອຂອງເອດີບີ ຈະສືບຕໍ່ດຳເນີນໄປໂດຍອີງໃສ່ການສະໜັບສະໜູນດ້ານສະຖາບັນຂອງຕົນທີ່ຍາວນານຜ່ານແຜນງານການຮ່ວມມືດ້ານເສດຖະກິດຂອງອະນຸພາກພື້ນແມ່ນ້ຳຂອງ ໂດຍສະເພາະແມ່ນການສົ່ງເສີມການຄ້າ ແລະ ການລົງທຶນ, ຄວາມປອດໄພດ້ານສຸຂະພາບ ແລະ ການປຶກສາຫາລືດ້ານນະໂຍບາຍ ເພື່ອການບໍລິຫານຄຸ້ມຄອງສິ່ງແວດລ້ອມ ຢ່າງມີປະສິດທິພາບ. ຈຸດສຸມທາງດ້ານພູມສາດຕາມແລວທາງເສດຖະກິດອະນຸພາກພື້ນແມ່ນ້ຳຂອງ ຂອງຍຸດທະສາດເພື່ອການຮ່ວມມື ຈະຊ່ວຍເລັ່ງການເຊື່ອມໂຍງກັບພາກພື້ນ ແລະ ຊ່ວຍຫລຸດຊ່ອງວ່າງການພັດທະນາ ຢູ່ບາງເຂດຂອງແຂວງທີ່ທຸກຍາກ. ເອດີບີ ຈະຮ່ວມມືກັນລະຫວ່າງການດຳເນີນງານຂອງຕົນ ແລະ ປະກອບກັບການຊ່ວຍເຫລືອຂອງບັນດາຄູ່ຮ່ວມພັດທະນາອື່ນໆ.

## II. ສະພາບການພັດທະນາຂອງປະເທດ

### ກ. ສະພາບເສດຖະກິດ ແລະ ສັງຄົມ

5. **ປັດໃຈຂັບເຄື່ອນການຂະຫຍາຍຕົວທາງດ້ານເສດຖະກິດ.** ການຂະຫຍາຍຕົວທາງດ້ານເສດຖະກິດຢ່າງໝັ້ນທ່ຽງ ໄດ້ເພີ່ມລວມຍອດຜະລິດຕະພັນພາຍໃນປະເທດ (GDP) ຕໍ່ຫົວຄົນຈາກ 621 ໂດລາສະຫະລັດ ໃນປີ 2006 ເປັນ 2.027 ໂດລາສະຫະລັດ ໃນປີ 2016. ປັດໃຈຂັບເຄື່ອນຫລັກຂອງການຂະຫຍາຍຕົວທາງດ້ານເສດຖະກິດ ແມ່ນມາຈາກຂະແໜງການທີ່ຕິດພັນກັບຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນຂະແໜງການບໍ່ແຮ່, ການຂຸດຄົ້ນໄມ້ ແລະ ຂະແໜງພະລັງງານໄຟຟ້ານ້ຳຕົກ. ໃນຂະນະທີ່ພື້ນຖານເສດກິດ ໄດ້ມີການຫັນປ່ຽນໃຫ້ມີຄວາມຫຼາກຫຼາຍຢ່າງຊ້າໆ ໄປສູ່ຂະແໜງການບໍລິການຂາຍຍົກ-ຂາຍຍ່ອຍ, ຂະແໜງການທ່ອງທ່ຽວ ແລະ ຂະແໜງການກໍ່ສ້າງ ເຖິງແມ່ນວ່າ ປະເທດຍັງບໍ່ທັນໄດ້ມີການພັດທະນາທ່າແຮງດ້ານພະລັງງານໄຟຟ້ານ້ຳຕົກ ແລະ ຊັບພະຍາກອນບໍ່ແຮ່ ທີ່ມີຢູ່ຢ່າງຫຼວງຫຼາຍກໍ່ຕາມ ແຕ່ມີການຄາດຄະເນວ່າ ຂະແໜງຊັບພະຍາກອນທຳມະຊາດ ຈະຍັງສືບຕໍ່ ເປັນໂຕຂັບເຄື່ອນໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດຈົນຮອດຊຸມປີ 2030. ເຖິງຢ່າງໃດກໍ່ຕາມ ຕະຫຼາດພາຍໃນຈະມີຂະໜາດນ້ອຍ (ເຊິ່ງມີປະຊາກອນພຽງແຕ່ 6,5 ລ້ານຄົນ ແລະ ມີຄວາມໜາແໜ້ນຂອງປະຊາກອນຕໍ່າ) ແຕ່ສປປ ລາວ ແມ່ນມີໂອກາດສູງທີ່ຈະຂະຫຍາຍພື້ນຖານເສດຖະກິດຂອງຕົນ ໂດຍການຂະຫຍາຍການຄ້າກັບບັນດາປະເທດເພື່ອນບ້ານ ໃນອະນຸພາກພື້ນແມ່ນ້ຳຂອງ ທີ່ມີປະຊາກອນທີ່ໜາແໜ້ນ ແລະ ສົ່ງເສີມການລົງທຶນຂອງພາກເອກະຊົນ ໂດຍສະເພາະວິສາຫະກິດ ຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ.

6. **ສະພາບເສດຖະກິດມະຫາພາກ.** ສປປ ລາວ ມີ ສະຖິຕິທີ່ພົ້ນເດັ່ນໃນການຮັກສາສະເຖຍລະພາບການເຕີບໂຕ ທາງດ້ານເສດຖະກິດໃຫ້ຢູ່ໃນລະດັບສູງ ແລະ ການຄຸ້ມຄອງອັດຕາເງິນເຟີ້. ໃນລະຫວ່າງປີ 2011–2016, ອັດຕາການຂະຫຍາຍຕົວ ຂອງ GDP ສະເລ່ຍແມ່ນ 7,5% ແລະ ອັດຕາເງິນເຟີ້ສະເລ່ຍແມ່ນຢູ່ 4,0%. ເຖິງຢ່າງໃດກໍ່ຕາມ ສປປ ລາວ ຍັງປະເຊີນກັບ 3 ສິ່ງທ້າທາຍຫຼັກດັ່ງລຸ່ມນີ້:

ມີການສະສົມການຂາດດຸນງົບປະມານ ແລະ ໃນບັນຊີເດີນສະພັດສູງ. ການຂາດດຸນງົບປະມານ ແມ່ນເພີ່ມຂຶ້ນຈາກ 0,5% ຂອງ GDP ໃນປີ 2012 ເປັນ 5,9% ໃນປີ 2016. ລັດຖະບານພະຍາຍາມປັບປຸງຖານະທາງການເງິນງົບປະມານຂອງຕົນ ໂດຍການຫລຸດຂັ້ນຕອນພາຍໃນ ເພື່ອເພີ້ມປະສິດທິພາບໃນການເກັບລາຍຮັບ ແລະ ປັບປຸງການບໍລິຫານລາຍຈ່າຍຂອງລັດ. ການຂາດດຸນບັນຊີເດີນສະພັດໃນອັດຕາ 14,1% ຂອງ GDP ໃນປີ 2016 ສ່ວນໃຫຍ່ແມ່ນຍ້ອນການນໍາເຂົ້າອຸປະກອນການກໍ່ສ້າງ ເພື່ອຮັບໃຊ້ໂຄງການເຂື່ອນໄຟຟ້ານໍ້າຕົກທີ່ມາຈາກ ການລົງທຶນໂດຍກົງຈາກຕ່າງປະເທດ.

(i) ຂະໜາດຂອງໜີ້ສິນຂອງພາກລັດ ແລະ ໜີ້ສິນຈາກການຄໍ້າປະກັນຂອງພາກລັດ ແມ່ນເພີ່ມຈາກ 56,0% ຂອງ GDP ໃນປີ 2012 ເປັນ 67,8% ໃນປີ 2016.[4] ການວິເຄາະຄວາມຍືນຍົງທາງດ້ານໜີ້ສິນໃນປີ 2016 ຂອງກອງທຶນການເງິນສາກົນ – ທະນາຄານໂລກ ໄດ້ຈັດລະດັບຄວາມຫຍຸ້ງຫຍາກທາງດ້ານ ໜີ້ສິນຈາກຕ່າງປະເທດ ຂອງ ສປປ ລາວ ຈາກລະດັບຄວາມສ່ຽງປານກາງເປັນລະດັບທີ່ມີຄວາມສ່ຽງສູງ.[5]

(ii) ສປປ ລາວ ຈໍາເປັນຕ້ອງສຸມຄວາມພະຍາຍາມ ເພື່ອຈະຂະຫຍາຍພື້ນຖານເສດຖະກິດຂອງຕົນ ໃຫ້ມີຄວາມຫຼາກຫຼາຍ ເນື່ອງຈາກ ການຂະຫຍາຍໂຕທາງດ້ານເສດຖະກິດ ແລະ ການປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທໍາ ແລະ ການສົ່ງອອກ ແມ່ນກະຈຸກຢູ່ໃນບາງຂະແໜງການສະເພາະເທົ່ານັ້ນ (ວັກ 5). ຂະແໜງການກະສິກໍາ ເຊິ່ງມີອັດຕາສ່ວນ 23,5% ຂອງ GDP ໄດ້ສ້າງວຽກເຮັດງານທາໃຫ້ແຮງງານຈານວນ 70% ຂອງແຮງງານທັງໝົດໃນລະຫວ່າງປີ 2011–2016. ໃນການສົມທຽບຂະແໜງຊັບພະຍາກອນ ແລະ ຂະແໜງທີ່ບໍ່ກ່ຽວພັນກັບຊັບພະຍາກອນ, ຂະແໜງບໍລິການມີອັດຕາສ່ວນ 39,3% ຂອງ GDP (ເຊິ່ງສ້າງວຽກເຮັດງານທໍາໃຫ້ແກ່ແຮງງານ 20,6% ຂອງແຮງງານທັງໝົດ) ແລະ ຂະແໜງອຸດສະຫະກໍາ ເຊິ່ງມີອັດຕາສ່ວນ 31,3% ຂອງ GDP (ສ້າງວຽກເຮັດງານທໍາໃຫ້ແກ່ແຮງງານພຽງແຕ່ 6,1%[6] ຂອງແຮງງານທັງໝົດ).

7. **ຄວາມທຸກຍາກ.** ເຖິງແມ່ນວ່າເສດຖະກິດມີການຂະຫຍາຍຕົວສູງ ໄດ້ປະກອບສ່ວນເຂົ້າໃນການຫລຸດຜ່ອນອັດຕາຄວາມທຸກຍາກແຫ່ງຊາດຢ່າງສະໝໍ່າສະເໝີກໍ່ຕາມ ແຕ່ຄວາມທຸກຍາກ ກໍ່ຍັງມີຄວາມແຕກໂຕນກັນລະຫວ່າງຊົນເຜົ່າ ແລະ ທີ່ຕັ້ງທາງພູມສາດ ແລະ ຄວາມຄວາມແຕກໂຕນ ແມ່ນມີການຂະຫຍາຍຕົວກ້ວາງອອກ. ອີງຕາມການສໍາຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ ລ້າສຸດຂອງ ສປປ ລາວ ໄດ້ຊີ້ໃຫ້ເຫັນວ່າ ຄວາມທຸກຍາກແມ່ນຫຼຸດລົງຈາກ 33,5% ໃນປີ 2003 ເປັນ 23,2% ໃນປີ 2013. ເຖິງຢ່າງໃດກໍ່ຕາມ, ຕົວຊີ້ວັດ Gini ໄດ້ເພີ່ມຂຶ້ນຈາກ 0,31 ເປັນ 0,36 ໃນໄລຍະດຽວກັນ.[7] ຍັງມີ ຫຼາຍໆຄົວເຮືອນ ທີ່ຍັງຢູ່ໃກ້ເສັ້ນຄວາມທຸກຍາກ; ເຄິ່ງໜຶ່ງຂອງຜູ້ທຸກຍາກໃນປີ 2013 ແມ່ນບໍ່ທຸກຍາກ ໃນປີ 2008.[8] ໃນພື້ນທີ່ ທີ່ມີຊົນເຜົ່າ ນອກເໜືອຈາກຊົນເຜົ່າລາວ–ໄຕ ອາໄສຢູ່ຢ່າງເປັນຈໍານວນຫຼາຍ ແມ່ນມີອັດຕາຄວາມທຸກຍາກສູງກວ່າ 40% ເມື່ອສົມທຽບກັບອັດຕາຄວາມທຸກຍາກທີ່ຕໍ່າກວ່າ 20% ລະຫວ່າງກຸ່ມຊົນເຜົ່າລາວ–ໄຕ ອາໄສຢູ່. ເຊັ່ນຕົວຢ່າງ, ອັດຕາຄວາມທຸກຍາກ ທີ່ເກີດຂຶ້ນໃນ

---

[4] ມີໂຄງການກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ຈໍານວນໜຶ່ງທີ່ລັດຖະບານ ຈະສະເໜີຂໍເງິນກູ້ຢືມເພີ່ມເຕີມ.

[5] IMF. 2017. *ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບົດລາຍງານຂອງເຈົ້າໜ້າທີ່ ຂອງກອງທຶນສາກົນຕາມມາດຕາ IV ວ່າດ້ວຍການປຶກສາຫາລື - ການວິເຄາະຄວາມຍືນຍົງຂອງໜີ້ສິນ ໃນປີ 2016.* ນະຄອນຫຼວງ ວໍຊິງຕັນດີຊີ.

[6] ຕົວເລກການຈ້າງງານ ໃນປີ 2012.

[7] P. Warr, S. Rasphone, ແລະ J. Menon. 2015. ສອງທົດສະວັດການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ ແລະ ການຫຼຸດຜ່ອນຄວາມທຸກຍາກໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. *ເອກະສານວຽກງານດ້ານເສດຖະກິດຂອງເອດີບີ.* ສະບັບເລກທີ 461. ນະຄອນຫຼວງມະນິລາ: ເອດີບີ. ບົດລາຍງານ ໄດ້ປະເມີນວ່າຄວາມແຕກໂຕນ ໄດ້ຫລຸດຈໍານວນຄວາມທຸກຍາກລົງປະມານ 6% ຂອງ ປະຊາກອນ ໃນລະຫວ່າງ ປີ 1993–2013, ໂດຍປຽບທຽບກັບສົມມຸດນິຖານວ່າ ຖ້າຄວາມບໍ່ເທົ່າທຽມ ບໍ່ໄດ້ມີການເພີ້ມຂຶ້ນ.

[8] ລັດຖະບານແຫ່ງ ສປປ ລາວ, ກະຊວງແຜນການ ແລະ ການລົງທຶນ; ແລະ ລັດຖະບານ ແຫ່ງ ສປປ ລາວ, ສູນສະຖິຕິແຫ່ງຊາດ. 2014. *ການສໍາຫຼວດການບໍລິໂພກ ແລະ ຄ່າໃຊ້ຈ່າຍຂອງ ສປປ ລາວ 2012/13 (LECS 5).* ນະຄອນຫຼວງວຽງຈັນ.

ນະຄອນຫຼວງວຽງຈັນແມ່ນ 5,9% ໃນປີ 2013 ແຕ່ໃນເຂດຊົນນະບົດແລ້ວ ອັດຕາຄວາມທຸກຍາກແມ່ນຢູ່ລະຫວ່າງ 39,2% ຫາ 44,4% ໂດຍສະເພາະແມ່ນຢູ່ແຂວງບໍ່ແກ້ວ ແລະ ແຂວງຫົວພັນ ທີ່ມີຄວາມຫລາກຫລາຍໃນຊົນເຜົ່າ.

8. **ຄວາມບໍ່ສະເໝີພາບລະຫວ່າງ ຍິງ-ຊາຍ**. ຄວາມບໍ່ສະເໝີພາບລະຫວ່າງ ຍິງ-ຊາຍ ຍັງຄົງມີຢູ່ ລະຫວ່າງ ປະຊາຊົນທີ່ອາໄສໃນເຂດຕົວເມືອງ ແລະ ຊົນນະບົດ ແລະ ລະຫວ່າງບັນດາຊົນເຜົ່າ. ແມ່ຍິງຫຼາຍຄົນ ຍັງບໍ່ຄວາມເທົ່າທຽມໃນການເຂົ້າເຖິງໂອກາດທາງດ້ານເສດຖະກິດ, ຊັບພະຍາກອນ ແລະ ສະຖາບັນຕ່າງໆທີ່ຕັດສິນບັນຫາ. ໂດຍທົ່ວໄປແລ້ວແມ່ຍິງ ແມ່ນເຮັດວຽກທີ່ໄດ້ຮັບຄ່າແຮງງານຕໍ່າ, ວຽກທີ່ມີຄວາມສ່ຽງ ແລະ ການຄາດຫວັງຕາມວັດທະນະທຳແລ້ວ ແມ່ນແມ່ຍິງເຮັດວຽກບ້ານທີ່ບໍ່ໄດ້ຮັບຄ່າແຮງງານເຊິ່ງໄປຈຳກັດທ່າແຮງຂອງເຂົາເຈົ້າໃນການສ້າງລາຍຮັບ. ບັນຫາຫລັກໆ ແມ່ນລວມທັງຄວາມບໍ່ສະເໝີພາບ ລະຫວ່າງ ຍິງ-ຊາຍ ໃນການສຶກສາໃນຊັ້ນມັດທະຍົມຕອນປາຍ ແລະ ວິທະຍາໄລ; ຈຳກັດການເຂົ້າເຖິງອາຊີວະສຶກສາ, ການບໍລິການຈັດຫາງານ ແລະ ແຫຼ່ງເງິນທຶນທີ່ສາມາດຈັດຕັ້ງປະຕິບັດໄດ້; ແລະ ມີອັດຕາການເສຍຊີວິດ ຂອງແມ່ຍິງສູງ. ໃນຂະນະທີການລົງທະບຽນສຸດທິຂອງນັກຮຽນຍິງ ໃນການສຶກສາໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ຕອນຕົ້ນ ແມ່ນເທົ່າກັນກັບຈຳນວນນັກຮຽນຊາຍໃນປີ 2016, ແຕ່ຈຳນວນລວມທັງໝົດຂອງນັກຮຽນຍິງ ທີ່ເຂົ້າຮຽນ ໃນຊັ້ນມັດທະຍົມສຶກສາຕອນປາຍ ແມ່ນມີພຽງແຕ່ 45,2% ໃນຂະນະທີ່ຈຳນວນນັກຮຽນຊາຍແມ່ນມີ 50,4%. ຈຳນວນແມ່ຍິງທີ່ເຂົ້າຮຽນໃນຊັ້ນອະຊີວະສຶກສາ ມີຄວາມແຕກໂຕນກັນຢ່າງຫຼວງຫຼາຍໃນແຕ່ລະລະດັບ ແລະ ວິຊາຮຽນ.

9. **ໂອກາດການຮ່ວມມື ແລະ ບັນດາສິ່ງທ້າທາຍໃນພາກພື້ນ.** ການເປັນສະມາຊິກຂອງ ສປປ ລາວ ໃນແຜນງານການຮ່ວມມືທາງດ້ານເສດຖະກິດ, ຍຸດທະສາດການຮ່ວມມືທາງດ້ານເສດຖະກິດ ອີຣະວະດີ-ເຈົ້າພະຍາ–ແມ່ນໍ້າຂອງ, ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ ແລະ ອົງການການຄ້າໂລກເຮັດໃຫ້ ສປປ ລາວ ມີໂອກາດສູງ ໃນການເພີ້ມການຄ້າ, ດຶງດູດເອົາການລົງທຶນຈາກຕ່າງປະເທດ ແລະ ໃຫ້ມີການບໍລິຫານຄຸ້ມຄອງສາທາລະນະປະໂຫຍດຂອງພາກພື້ນຫລາຍຂຶ້ນກວ່າເກົ່າ. ໂດຍສອດຄ່ອງກັບຄວາມພະຍາຍາມຂອງປະເທດ ໃນການຫັນປ່ຽນປະເທດໃຫ້ເປັນບ່ອນເຊື່ອມໂຍງທາງບົກເພື່ອການຄ້າ ແລະ ສູນກາງການຂົນສົ່ງໃນພາກພື້ນ, ສປປ ລາວ ຮ່ວມມືຢ່າງໃກ້ຊິດກັບບັນດາປະເທດໃນອະນຸພາກພື້ນແມ່ນໍ້າຂອງກ່ຽວກັບ ການພັດທະນາແລວທາງເສດຖະກິດລະຫວ່າງປະເທດ. ບັນດາບຸລິມະສິດ ແມ່ນປັບປຸງການເຊື່ອມໂຍງທາງກາຍຍະພາບ, ການຂົນສົ່ງ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າ (ລວມເຖິງການສ້າງຂີດຄວາມສາມາດໃນການຮັບຮອງອາຫານ ແລະ ຜະລິດຕະພັນກະສິກຳ), ການພັດທະນາຕົວເມືອງ, ການພັດທະນາການທ່ອງທ່ຽວ, ສົ່ງເສີມການລົງທຶນຂອງພາກເອກະຊົນ ແລະ ການພັດທະນາວິສາຫະກິດ, ຄວາມໄພທາງດ້ານສຸຂະພາບ ແລະ ການອານຸລັກຊີວະນາໆພັນ.

## ຂ. ສິ່ງທ້າທາຍໃນການພັດທະນາ

10. **ການຜະລິດທີ່ຈຳກັດຫລາຍ ແລະ ໂຄງສ້າງການສົ່ງອອກ**. ຈານວນມີອຸດສະຫະກຳທີ່ໃຊ້ເງິນລົງທຶນສູງມີໜ້ອຍ ເຊັ່ນອຸດສະຫະກຳບໍ່ແຮ່ ແລະ ພະລັງງານ ເປັນອຸດສະຫະກຳທີ່ຂັບເຄື່ອນການຂະຫຍາຍຕົວໃຫ້ແກ່ເສດຖະກິດ. ໃນປີ 2016 ອຸດສະຫະກຳບໍ່ແຮ່ກວມເອົາ 34% ແລະ ໄຟຟ້າກວມເອົາ 21% ຂອງຜະລິດຕະພັນສົ່ງອອກທັງໝົດ. ປະເທດໄທ ແລະ ສາທາລະນະລັດປະຊາຊົນຈີນ ແມ່ນຄູ່ຄ້າຫຼັກຂອງສປປ ລາວ ແລະ ສິນຄ້າສົ່ງອອກໄປຍັງສອງປະເທດດັ່ງກ່າວ ກວມເອົາເກີນກວ່າເຄິ່ງໜຶ່ງຂອງສິນຄ້າສົ່ງອອກທັງໝົດ. ເຖິງແມ່ນວ່າ ຂະແໜງຊັບພະຍາກອນທຳມະຊາດທີ່ໃຊ້ເງິນລົງທຶນ ຈຳນວນຫຼາຍ ປະກອບສ່ວນປະມານ 20% ຂອງ ມູນຄ່າ GDP ທັງໝົດ ແລະ 50% ຂອງມູນຄ່າການສົ່ງອອກທັງໝົດກໍ່ຕາມ ແຕ່ຂະແໜງການດັ່ງກ່າວສ້າງວຽກເຮັດງານທຳພຽງແຕ່ 1% ຂອງການຈ້າງງານທັງໝົດ ແລະ ປະກອບສ່ວນຊຸກຍູ້ເຂົ້າໃນຂະແໜງເສດຖະກິດອື່ນໆບໍ່ຫລາຍເທົ່າທີຄວນ. ດັ່ງນັ້ນຈຶ່ງຈຳເປັນຕ້ອງມີການລົງທຶນ ຈາກພາກເອກະຊົນ ເຂົ້າໃນຂະແໜງການທີ່ບໍ່ແມ່ນຂະແໜງຊັບພະຍາກອນທຳມະຊາດ ເພື່ອເລັ່ງໃສ່ການພັດທະນາ ທາງດ້ານເສດຖະກິດ ໃຫ້ມີຄວາມຫຼາກຫຼາຍຂຶ້ນ ແລະ ສະໜັບສະໜູນການຂະຫຍາຍໂຕທາງດ້ານເສດຖະກິດແບບສົມສ່ວນ ແລະຍືນຍົງຂຶ້ນ. ການພັດທະນາເສດຖະກິດໃຫ້ມີຄວາມຫຼາກຫຼາຍຂຶ້ນ ແມ່ນຈຳເປັນເພື່ອຮອງຮັບການເພີ່ມຂຶ້ນ

ຂອງປະຊາກອນໃນໄວເຮັດວຽກ ທີ່ຄາດວ່າຈະມີສູງເຖິງ 69% ຂອງປະຊາກອນທັງໝົດພາຍໃນປີ 2050. ນອກຈາກນັ້ນ, ຍັງມີການຄາດການວ່າ ສປປ ລາວ ຈະນຳໃຊ້ທ່າແຮງທາງດ້ານພະລັງງານໄຟຟ້ານ້ຳຕົກທັງໝົດຂອງຕົນ ພາຍໃນປີ 2030. ອີງຕາມຜົນຂອງການສຶກສາທ່າແຮງຂອງ ສປປ ລາວ ທີ່ດຳເນີນຢູ່ ເຫັນວ່າທ່າແຮງຂອງບັນດາຂະແໜງການທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ ທີ່ຈະສ້າງຄວາມສົມດຸນ ແລະ ໃຫ້ຄ່າແຮງສູງກວ່າ ປະກອບມີ ຂະແໜງກະສິກຳ ແລະ ປຸງແຕ່ງອາຫານ (ໂດຍສະເພາະແມ່ນພືດເສດຖະກິດເຊັ່ນ: ກາເຟ, ອ້ອຍ ແລະ ຜະລິດຕະພັນກະສະກຳປອດສານພິດ), ການຜະລິດເຄື່ອງນຸ່ງຫົ່ມ ແລະ ສິ່ງທໍທີ່ມີຄຸນນະພາບສູງ ແລະ ການທ່ອງທ່ຽວ. ການເຊື່ອມຕໍ່ສາຍການຜະລິດໃນຂະແໜງຊັບພະຍາກອນ ຄວນໄດ້ຮັບການປັບປຸງ ແລະ ສົ່ງເສີມ ໂດຍເພີ່ມການລົງທຶນເຂົ້າໃນອຸດສະຫະກຳພາຍໃນ ໃຫ້ມີການປຸງແຕ່ງ ແລະ ເພີ່ມມູນຄ່າ ນອກເໜືອຈາກການສົ່ງອອກວັດຖຸດິບ.

11. **ຊ່ອງວ່າງທາງດ້ານພື້ນຖານໂຄງລ່າງ.** ພື້ນຖານໂຄງລ່າງທີ່ບໍ່ພຽງພໍ ແມ່ນອຸປະສັກສຳຄັນໃນການດຳເນີນທຸລະກິດ ໃນສປປ ລາວ.[9] ຄຸນນະພາບ ແລະ ການຄອບຄຸມຂອງພື້ນຖານໂຄງລ່າງ ເຊິ່ງລວມທັງການບໍລິການຕ່າງໆໃນຕົວເມືອງ, ຊົນລະປະທານ ແລະ ປະສິດທິຜົນຂອງພື້ນຖານໂຄງລ່າງໃນຊົນນະບົດ, ການສະໜອງກະແສໄຟຟ້າໃນເຂດຊົນນະບົດ ແລະ ການຂົນສົ່ງທາງບົກ ຕ້ອງໄດ້ຮັບການປັບປຸງ ເພື່ອກະຕຸ້ນການລົງທຶນຂອງພາກເອກະຊົນ ແລະ ເຮັດໃຫ້ການເຂົ້າເຖິງຕະຫຼາດ ແລະ ການບໍລິການທາງສັງຄົມກວ້າງຂຶ້ນ. ໃນປີ 2012 ການເຂົ້າເຖິງໄຟຟ້າໃນເຂດຕົວເມືອງ ແມ່ນກວມເອົາ 97,8% ແຕ່ວ່າເຂດພູດອຍ ແມ່ນມີພຽງ 54,7% ເທົ່ານັ້ນ. ຕາຂ່າຍໄຟຟ້າແຫ່ງຊາດ ບໍ່ສາມາດຕອບສະໜອງໄດ້ໃນຊ່ວງເວລາທີ່ມີຄວາມຕ້ອງການໄຟຟ້າສູງ ເຊິ່ງເປັນອຸປະສັກຕໍ່ການລົງທຶນຈາກພາກເອກະຊົນ ແລະ ການເຊື່ອມໂຍງຕາຂາຍໄຟຟ້າກັບພາກພື້ນ. ສ່ວນໃຫຍ່ຂອງເຂດຫ່າງໄກສອກຫຼີກ ແມ່ນຍັງບໍ່ມີຖະໜົນຫົນທາງເຂົ້າເຖິງ. ພື້ນຖານໂຄງລ່າງການຂົນສົ່ງທີ່ບໍ່ມີປະສິດທິພາບ ເປັນອຸປະສັກໃຫ້ແກ່ການເຂົ້າເຖິງການບໍລິການສາທາລະນະສຸກ ໂດຍສະເພາະແມ່ນຢູ່ໃນເຂດຊົນນະບົດ. ການຂາດແຄນຊົນລະປະທານ ເພື່ອສົ່ງເສີມຜະລິດຕະພາບການຜະລິດກະສິກຳ ແລະ ການປູກພືດຫລາຍໆປະເພດ, ຮ້າຍແຮງກວ່ານັ້ນ ແມ່ນສະພາບຖະໜົນ ຫົນທາງໃນຊົນນະບົດທີ່ບໍ່ສະດວກເຊິ່ງຈຳກັດໃຫ້ແກ່ການເຂົ້າເຖິງຕະຫຼາດ ຍັງຄົງເປັນອຸປະສັກໃນການປັບປຸງຊີວິດການເປັນຢູ່ ຂອງຊາວກະສິກອນ. ໃນເຂດຕົວເມືອງ ພື້ນຖານໂຄງລ່າງ ແລະ ການບໍລິການສາທາລະນະຂັ້ນພື້ນຖານ ກໍ່ຍັງຂາດແຄນ ເຖິງແມ່ນວ່າປະຊາກອນໃນເຂດຕົວເມືອງຈະເພີ່ມຂຶ້ນຈາກ 17,0% ຫາ 33,0% ຂອງປະຊາກອນທັງໝົດໃນໄລຍະແຕ່ປີ 1995 ຫາ 2015. ການບໍລິການໃນຕົວເມືອງ ເປັນຕົ້ນການບໍລິການເກັບສິ່ງເສດເຫຼືອ ແລະ ການລະບາຍນ້ຳເປື້ອນ ແລະ ທ່ອງລະບາຍນ້ຳ ແມ່ນມີຄວາມຄືບໜ້າໜ້ອຍຫລາຍ ເຊິ່ງເປັນຜົນໃຫ້ສິ່ງແວດລ້ອມ ມີການເສື່ອມໂຊມລົງ.

12. **ການປົກຄອງທີ່ຍັງຂາດປະສິດທິພາບ.** ການປົກຄອງ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຳເນີນ ທຸລະກິດ ຈະຕ້ອງໄດ້ຮັບການປັບປຸງ ເພື່ອດຶງດູດການລົງທຶນຈາກພາກເອກະຊົນໃຫ້ຫລາຍຂຶ້ນ. ຕາມການຈັດອັນອັນດັບໂດຍລວມຂອງ ສປປ ລາວ ວ່າດ້ວຍຄວາມສະດວກໃນການເລີ່ມທຸລະກິດແມ່ນຢູ່ອັນດັບທີ່ 160 ຈາກ 190 ປະເທດ[10] ໃນປີ 2016. ນອກຈາກນັ້ນ ສປປ ລາວ ຍັງຖືກຈັດຢູ່ອັນດັບທີ 112 ຈາກ 138 ປະເທດ ໃນການປະເມີນສິດຕໍ່ຊັບສິນ ຂອງພົນລະເມືອງ ແລະ ຖືກຈັດອັນດັບທີ່ 95 ສຳລັບຄວາມໂປ່ງໃສໃນການສ້າງນະໂຍບາຍຂອງລັດຖະບານ (ຄຳອະທິບາຍ ເພີ່ມເຕີມ 9).

13. **ການບໍລິຫານພາກລັດທີ່ຍັງຂາດປະສິດທິພາບ.** ນະໂຍບາຍທາງດ້ານການເງິນ-ງົບປະມານ ຈະຕ້ອງໄດ້ຮັບການບໍລິຫານຢ່າງລະມັດລະວັງ ເພື່ອຮັບປະກັນວ່າຊັບພະຍາກອນທຳມະຊາດ ຈະຖືກໝູນໃຊ້ຢ່າງມີປະສິດທິພາບ ເຂົ້າໃນການລົງທຶນຂອງລັດ ແລະ ການບໍລິການທາງສັງຄົມ. ລັດຖະບານ ໄດ້ເລີ່ມລວບລວມຖານະທາງການເງິນຂອງຕົນ ໂດຍການເພີ່ມທະວີການເກັບລາຍຮັບ ແລະ ຫລຸດລາຍຈ່າຍ ແຕ່ວ່າການມອບໝາຍໜ້າທີ່ຮັບຜິດຊອບ ແລະ ງົບປະມານ ໃຫ້ຂັ້ນທ້ອງຖິ່ນ ຈະຕ້ອງໄດ້ຮັບການປັບປຸງ. ການຂະຫຍາຍການເຂົ້າເຖິງການບໍລິການດ້ານສາທາລະນະສຸກ ແລະ ການສຶກສາ ຍັງຄົງຊັກຊ້າຢູ່ ເຊິ່ງກໍ່ໃຫ້ເກີດຜົນກະທົບທີ່ບໍ່ສົມ

---

[9] ກອງປະຊຸມເສດຖະກິດໂລກ. 2016. *ບົດລາຍງານ ກ່ຽວກັບ ຄວາມສາມາດໃນການແຂ່ງຂັນໃນລະດັບໂລກ 2016–2017.* ນະຄອນເຈນີວາ.

[10] ທະນາຄານໂລກ. 2016. *ການດຳເນີນທຸລະກິດ 2017: ໂອກາດເທົ່າທຽມກັນສຳລັບທຸກຄົນ.* ນະຄອນຫຼວງວໍຊິງຕັນດີຊີ.

ສ່ວນຕໍ່ປະຊາຊົນຜູ້ທຸກຍາກທີ່ອາໄສຢູ່ເຂດຊົນນະບົດ ແລະ ເຂດພູດອຍ. ຍັງມີປະຊາຊົນອີກຈໍານວນຫຼາຍ ທີ່ບໍ່ສາມາດເຂົ້າເຖິງການບໍລິການສາທາລະນະສຸກທີ່ມີຄຸນນະພາບ ເຊິ່ງມີພຽງແຕ່ 33% ຂອງປະຊາກອນທັງໝົດ ທີ່ໄດ້ຮັບການຄຸ້ມຄອງຈາກປະກັນສຸຂະພາບໃນປີ 2016. ການບໍລິຫານດ້ານການເງິນທີ່ບໍ່ເຂັ້ມແຂງ ແລະ ການຈັດສັນງົບປະມານໃຫ້ແກ່ວຽກງານສາທາລະນະສຸກທີ່ຍັງບໍ່ພຽງພໍ ເປັນອຸປະສັກອັນສໍາຄັນໃນການບັນລຸເປົ້າໝາຍ ໃຫ້ມີການປະກັນສຸຂະພາບຢ່າງທົ່ວໜ້າໃນປີ 2025.[11]

14. **ຊັບພະຍາກອນມະນຸດທີ່ຍັງມີຂໍ້ຈໍາກັດ.** ຊັບພະຍາກອນມະນຸດທີ່ຍັງບໍ່ໄດ້ຮັບການພັດທະນາ ຈໍາກັດການຂະຫຍາຍ ທຸລະກິດ ແລະ ຜະລິດຕະພາບ. ໄດ້ມີການລະບຸວ່າ ແຮງງານທີ່ ບໍ່ມີສີມື ແລະ ບໍ່ໄດ້ຮັບການສຶກສາພຽງພໍ ແມ່ນອຸປະສັກອັນໜຶ່ງທີ່ສໍາຄັນຕໍ່ການດໍາເນີນທຸລະກິດ (ຄໍາອະທິບາຍເພີ່ມເຕີມ 9). ຄຸນນະພາບຂອງແຮງງານໂດຍລວມ ແລະ ອັດຕາການຮຽນຈົບຊັ້ນຂອງນັກຮຽນໃນຊັ້ນມັດທະຍົມຕອນປາຍ, ຊັ້ນສູງ ແລະ ອາຊີວະສຶກສາ ຈໍາເປັນ ຈະຕ້ອງໄດ້ຮັບການປັບປຸງ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານ. ນອກນັ້ນ ການທີ່ບໍ່ສາມາດເຂົ້າເຖິງ ການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບ ຍັງສົ່ງຜົນກະທົບຕໍ່ຜະລິດຕະພາບຂອງແຮງງານນໍາອີກ.

15. **ການເສື່ອມໂຊມທາງດ້ານສິ່ງແວດລ້ອມ.** ເນື່ອງຈາກປະຊາກອນຫຼາຍກວ່າ 60% ແມ່ນອາໄສຢູ່ເຂດຊົນນະບົດ ແລະ ເພິ່ງພາຊັບພະຍາກອນທໍາມະຊາດເພື່ອການດໍາລົງຊີວິດ ການຫລຸດລົງຂອງຊັບພະຍາກອນທໍາມະຊາດ ແລະ ລະບົບນິເວດ ຕ້ອງໄດ້ຮັບການແກ້ໄຂ. ຮັບປະກັນການຖືຄອງທີ່ດິນ ແມ່ນເປັນສິ່ງຈໍາເປັນ ເພື່ອເຮັດໃຫ້ມີການເພີ່ມການລົງທຶນເຂົ້າໃນກະສິກໍາ ແລະ ການອະນຸລັກຮັກສາຊັບພະຍາກອນທໍາມະຊາດ. ໃນຂະນະທີ່ ລັດຖະບານໄດ້ອອກຄໍາສັ່ງຢຸດການສົ່ງອອກໄມ້ທ່ອນຊົ່ວຄາວ ໃນເດືອນເມສາ 2016 ກໍ່ຕາມ ແຕ່ຈະຕ້ອງມີການຈັດຕັ້ງປະຕິບັດຢ່າງເຄັ່ງຄັດກວ່າເກົ່າ ເພື່ອສະກັດກັ້ນການລັກລອບ ຕັດໄມ້ທໍາລາຍປ່າທີ່ຜິດກົດໝາຍ ແລະ ການເຊື່ອມໂຊມຂອງປ່າ. ສາເຫດອື່ນໆທີ່ພາໃຫ້ເກີດການເສື່ອມໂຊມ ທາງດ້ານສິ່ງແວດລ້ອມ ແມ່ນການວາງແຜນນໍາໃຊ້ທີ່ດິນ ທີ່ບໍ່ມີປະສິດທິພາບ, ໄພພິບັດທີ່ເກີດຈາກໄພທໍາມະຊາດ, ບໍ່ມີຂອບວຽກດ້ານນິຕິກໍາ ແລະ ນະໂຍບາຍສໍາລັບການຄຸ້ມຄອງສິ່ງແວດລ້ອມທີ່ບໍ່ພຽງພໍ ແລະ ຈໍາກັດຂີດຄວາມສາມາດ ໃນການຄຸ້ມຄອງ ຊັບພະຍາກອນທໍາມະຊາດ.

16. **ການປ່ຽນແປງດິນຟ້າອາກາດ ແລະ ຄວາມສ່ຽງທາງດ້ານໄພພິບັດ.** ການຂະຫຍາຍຕົວທາງດ້ານເສດຖະກິດ ທີ່ຂຶ້ນກັບຂະ ແໜງຊັບພະຍາກອນທໍາມະຊາດເປັນຫຼັກ ແລະ ມີຂໍ້ຈໍາກັດດ້ານຂີດຄວາມສາມາດໃນການປັບຕົວ ພາໃຫ້ສປປ ລາວ ມີຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ. ຄາດວ່າຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ລວມມີເຊັ່ນ: ອຸນນະພູມທີ່ສູງຂຶ້ນ, ລະດູແລ້ງດົນຂຶ້ນກວ່າເກົ່າ, ມີຝົນຕົກແຮງ ແລະ ຖີ່ຂຶ້ນ, ໄພແຫ້ງແລ້ງ ແລະ ນໍ້າຖ້ວມ. ໄດ້ມີການຄາດການວ່າໄພແຫ້ງແລ້ງ ຈະສົ່ງຜົນກະທົບໃນທາງລົບຢ່າງຮ້າຍແຮງຕໍ່ການຜະລິດກະສິກໍາ ແລະ ເພີ່ມຄວາມສ່ຽງໃຫ້ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ແລະ ການສູນເສຍທາງດ້ານກະສິກໍາ. ເກີດໄພນໍ້າຖ້ວມຖີ່ຂຶ້ນ ຈະທໍາລາຍນາເຂົ້າ, ລະບົບຊົນລະປະທານ, ຖະໜົນຫົນທາງ ແລະ ຂົວຕ່າງໆ. ນອກຈາກຄວາມຈໍາເປັນ ໃນການປັບປຸງຄວາມພ້ອມຕໍ່ຄວາມສ່ຽງທາງດ້ານໄພພິບັດ ແລະ ການຮັບມືກັບໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງແລ້ວ ເຂດພາກເໜືອຂອງສປປ ລາວ ຍັງອາດຈະເກີດມີແຜ່ນດິນໄຫວນໍາອີກ. ການຮ່ວມມືກັບພາກພື້ນລະຫວ່າງປະເທດໃກ້ຄຽງ ແມ່ນມີຄວາມຈໍາເປັນໃນການແກ້ໄຂບັນຫາຄວາມເສື່ອມໂຊມທາງດ້ານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ.

## III. ຂອບເຂດວຽກງານຍຸດທະສາດ

### ກ. ບົດຮຽນທີ່ຖອດຖອນໄດ້ຈາກຍຸດທະສາດສະບັບກ່ອນ

[11] ເປົ້າໝາຍ 2020 ສໍາລັບການເຮັດໃຫ້ປະຊາຊົນມີປະກັນສຸຂະພາບແມ່ນ 80%.

17. ຈຸດປະສົງລວມຂອງຍຸດທະສາດການຮ່ວມມືຂອງເອດີບີ 2012–2016 ແມ່ນເພື່ອການຂະຫຍາຍຕົວ ທາງດ້ານເສດຖະກິດສົມສ່ວນ ແລະ ແບບຍືນຍົງແລະ ເພື່ອການຫລຸດຜ່ອນຄວາມທຸກຍາກ ໂດຍເນັ້ນໜັກໃສ່ (i) ຂະແໜງກະສິກຳ, ຊັບພະຍາກອນທຳມະຊາດ ແລະ ການພັດທະນາຊົນນະບົດ; (ii) ການສຶກສາ; (iii) ພະລັງງານ; ແລະ (iv) ນ້ຳປາປາ ແລະ ການພັດທະນາພື້ນຖານໂຄງລ່າງ ແລະ ການບໍລິການໃນເຂດເທດສະບານອື່ນໆ. ການບໍລິຫານຂອງພາກລັດ ແມ່ນວຽກທີ່ກ່ຽວພັນກັນກັບຫລາຍຂະແໜງການ. ສີ່ຂົງເຂດໜ້າວຽກທີ່ພົວພັນກັນ ແມ່ນມີບົດບາດຕໍ່ການອອກແບບກິດຈະກຳ ແລະ ຈຸດສຸມຂອງໂຄງການເຊັ່ນ: ການພັດທະນາພາກເອກະຊົນ, ການປົກຄອງ, ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ. ບົດສະຫລຸບການທົບທວນຜົນການດຳເນີນງານຂອງຍຸດທະສາດເພື່ອການຮ່ວມມື 2012–2016 ໄດ້ກຳນົດວ່າການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ *ໂດຍລວມແມ່ນປະສົບຜົນສຳເລັດ,* ໂດຍແນະນຳໃຫ້ມີສືບຕໍ່ (i) ເພີ້ມການການມີສ່ວນຮ່ວມກັບພາກເອກະຊົນໃຫ້ຫລາຍຂຶ້ນເພື່ອໃຫ້ມີການເຕີບໂຕຢ່າງສົມສ່ວນ; (ii) ສືບຕໍ່ໃຫ້ການສະໜັບສະໜ ຸນການສຶກສາຊັ້ນສູງ ແລະ ອາຊີວະສຶກສາ; (iii) ສືບຕໍ່ການຊ່ວຍເຫລືອຂະແໜງສາທາລະນະສຸກ ເພື່ອໃຫ້ບັນລຸເປົ້າໝາຍ ການພັດທະນາທີ່ກ່ຽວຂ້ອງກັບຂະແໜງສາທາລະນະສຸກ; ແລະ (iv) ສືບຕໍ່ໃຫ້ການສະໜັບສະໜູນການພັດທະນາ ວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ແລະ ການເຊື່ອມໂຍງເຂົ້າໃນປະຊາຄົມເສດຖະກິດອາຊຽນ (AEC) (ເບິ່ງຄຳອະທິບາຍ 3).

## ຂ. ຍຸດທະສາດການພັດທະນາແຫ່ງຊາດ

18. ເປົ້າໝາຍລວມຂອງແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII, 2016–2020, ທີ່ໄດ້ຮັບຮອງໂດຍສະພາແຫ່ງຊາດ ໃນເດືອນເມສາ 2016 ແມ່ນການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດ ດ້ອຍພັດທະນາພາຍໃນປີ 2020. ແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດດັ່ງກ່າວ ປະກອບດ້ວຍສາມໝາກຜົນຄື: (i) ການຂະຫຍາຍຕົວທາງດ້ານເສດຖະກິດຢ່າງສົມສ່ວນ, ໝັ້ນຄົງ ແລະ ຕໍ່ເນື່ອງ; (ii) ການພັດທະນາຊັບພະຍາກອນມະນຸດ ແລະ ການເສີມສ້າງຂີດຄວາມສາມາດຂອງພາກລັດ ແລະ ພາກເອກະຊົນ, ຫລຸດຜ່ອນຄວາມທຸກຍາກໃນທຸກກຸ່ມຊົນເຜົ່າ, ການເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກ ທີ່ມີຄຸນນະພາບສຳລັບທຸກກຸ່ມຊົນເຜົ່າ ແລະ ທຸກເພດທຸກໄວ, ພ້ອມດ້ວຍຄວາມຍຸຕິທຳ ແລະ ຄວາມໂປ່ງໃສ; ແລະ (iii) ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນຕາມຫຼັກການຍືນຍົງ ແລະ ການພັດທະນາຕາມທິດສີຂຽວ ແລະ ຄວາມພ້ອມ ໃນການຮັບມືກັບໄພພິບັດ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ລັດຖະບານໄດ້ແນ່ໃສ່ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດຢ່າງຮອບດ້ານ ເພື່ອບັນລຸເປົ້າໝາຍສະຫະສະວັດແຫ່ງການພັດທະນາທີ່ຍັງຄົງຄ້າງຢູ່ ແລະ ເພື່ອຄວາມຄືບໜ້າໃນເປົ້າໝາຍການພັດທະນາແບບຍືນຍົງ. ສປປ ລາວ ແມ່ນໜຶ່ງໃນຫົກປະເທດ ທີ່ໄດ້ມີການຈັດຕັ້ງປະຕິບັດແຜນງານ ທີ່ໄດ້ຮັບການດັດປັບເປົ້າໝາຍພັດທະນາແບບຍືນຍົງ ໃຫ້ແທດເໝາະກັບປະເທດ.

## ຄ. ພາລະບົດບາດຂອງຄູ່ຮ່ວມພັດທະນາ

19. ການໄຫລເຂົ້າທຶນຊ່ວຍເຫລືອທາງການສຸດທິເພື່ອການພັດທະນາ ໄດ້ເພີ່ມຂຶ້ນຈາກ 297 ລ້ານໂດລາສະຫະລັດ ໃນປີ 2005 ເປັນ 471 ລ້ານໂດລາສະຫະລັດ ໃນປີ 2015 ໂດຍສະເພາະ ແມ່ນໃຫ້ການສະໜັບສະໜູນເຂົ້າໃນການກໍ່ສ້າງ ພື້ນຖານໂຄງລ່າງ, ການສຶກສາ, ສາທາລະນະສຸກ, ການບໍລິຫານຄຸ້ມຄອງ ແລະ ຊຸມຊົນ (civil society). ໄດ້ມີການຄາດໝາຍວ່າ

ສະມາຄົມທີ່ບໍ່ຫວັງຜົນກຳໄລໃນປະເທດ ຊ່ວຍລັດຖະບານໃນຂົງເຂດດັ່ງຕໍ່ໄປນີ້ (i) ແກ້ໄຂບັນຫາທາງສັງຄົມ ແລະ ສິ່ງແວດລ້ອມສຳຄັນໆ ທີ່ສົ່ງຜົນກະທົບຕໍ່ປະຊາຊົນທີ່ມີຄວາມສ່ຽງ, (ii) ສ້າງເຄືອຄ່າຍກັບຊຸມຊົນ ແລະ ໝູນໃຊ້ປະສົບການຈາກທ້ອງຖິ່ນ ແລະ (iii) ອຳນວຍຄວາມສະດວກໃຫ້ແກ່ການສົນທະນາ-ປຶກສາຫາລື ຂອງຫລາຍພາກສ່ວນທີ່ກ່ຽວຂ້ອງ ແລະ ການສ້າງຄວາມເປັນເອກະພາບກັນກ່ຽວກັບບັນຫາດ້ານນະໂຍບາຍ. ຖະແຫຼງການວຽງຈັນວ່າດ້ວຍການພັດທະນາທີ່ມີປະສິດທິຜົນ ທີ່ໄດ້ຮັບຮອງໃນປີ 2006 ໄດ້ ຖືກຜັນຂະຫຍາຍໃນປີ 2015 ມາເປັນຖະແຫລງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມງານເພື່ອການພັດທະນາ ແລະ ຮ່ວມມືທີ່ມີປະສິດທິຜົນ ເຊິ່ງເນັ້ນໜັກໃສ່ການເປັນຄູ່ຮ່ວມງານເພື່ອການຮ່ວມມືໃນການພັດທະນາທີ່ມີປະສິດທິຜົນຫລາຍຂຶ້ນກວ່າເກົ່າ.[12] ດັ່ງນັ້ນ, ການສ້າງຍຸດທະສາດ ເພື່ອການຮ່ວມມື ແມ່ນໄດ້ມີການປະສານສົມທົບຢ່າງໃກ້ຊິດກັບລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ ພາຍໃຕ້ຂອບວຽກ ຂອງຖະແຫລງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມງານເພື່ອການພັດທະນາ ຮ່ວມມືທີ່ມີປະສິດທິຜົນ.

## ງ. ຈຸດປະສົງດ້ານຍຸດທະສາດ ແລະ ຂະແໜງການທີ່ສຳຄັນ ແລະ ບູລິມະສິດຂອງການດຳເນີນງານຂອງເອດີບີ

20. **ບູລິມະສິດທາງດ້ານຍຸດທະສາດ.** ເພື່ອໃຫ້ສອດຄ່ອງກັບເປົ້າໝາຍຂອງແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII, ຈຸດປະສົງຂອງຍຸດທະສາດເພື່ອການຮ່ວມມື ແມ່ນເພື່ອການຂະຫຍາຍຕົວທາງດ້ານເສດຖະກິດແບບສົມສ່ວນ ແລະຍືນຍົງໃຫ້ຫລາຍຂຶ້ນກວ່າເກົ່າ. ບູລິມະສິດທາງດ້ານຍຸດທະສາດຂອງເອດີບີ ຄື: (i) ການພັດທະນາພື້ນຖານໂຄງລ່າງ ແລະ ພາກເອກະຊົນ ເພື່ອໃຫ້ການສະໜັບສະໜູນການສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້, (ii) ການພັດທະນາ ຊັບພະຍາກອນມະນຸດ, ແລະ (iii) ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປັບຕົວເພື່ອຮັບມືກັບ ການປ່ຽນແປງດິນຟ້າອາກາດ. ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ການປົກຄອງ ແມ່ນວຽກຕິດພັນກັບຫລາຍຂະແໜງການ. ຕາຕະລາງຂ້າງລຸ່ມນີ້ໄດ້ສະແດງໃຫ້ເຫັນເຖິງຄວາມສອດຄ່ອງ ລະຫວ່າງ ບຸລິມະສິດ ຂອງຍຸດທະສາດການຮ່ວມ ແລະ ໝາກຜົນຂອງແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII. ບຸລິມະສິດດ້ານຍຸດທະສາດທີ່ໜຶ່ງ ແມ່ນຈະຊ່ວຍໃນການອຳນວຍຄວາມສະດວກໃຫ້ແກ່ການພັດທະນາພາກເອກະຊົນ ເຊິ່ງເອົາວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງເປັນຕົວນຳ. ບຸລິມະສິດດ້ານຍຸດທະສາດທີ່ສອງ ແມ່ນຈະປັບປຸງການສຶກສາ ແລະ ການບໍລິການສາທາລະນະສຸກ ຕາມຄຳແນະນຳບົດຫລຸບຂອງການທົບທວນຍຸດທະສາດເພື່ອການຮ່ວມມື (ຄຳອະທິບາຍ ທີ່ 3). ບຸລິມະສິດດ້ານຍຸດທະສາດທີ່ສາມ ແມ່ນສອດຄ່ອງກັບພັນທະຂອງເອດີບີ ໃນການເພີ່ມທຶນສະໜັບສະໜູນການປ່ຽນແປງດິນຟ້າອາກາດ ແລະ ພັນທະຂອງລັດຖະບານຕໍ່ຂໍ້ຕົກລົງປາຣີສ. ເອດີບີ ຈະຮ່ວມມືກັບຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ ລວມທັງອົງການບໍ່ສັງກັດລັດຖະບານ ໂດຍຜ່ານຂອບເຂດວຽກຂອງຖະແຫລງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມງານ ເພື່ອການພັດທະນາ ແລະ ຮ່ວມມືທີ່ມີປະສິດທິຜົນ.

---

[12] ລັດຖະບານ ແລະ ຄູ່ຮ່ວມພັດທະນາສຳຄັນໆ ລວມທັງເອດີບີ ໄດ້ຮັບຮອງເອົາຖະແຫລງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມງານ ເພື່ອການພັດທະນາ ແລະ ຮ່ວມມືທີ່ມີປະສິດທິຜົນ ໃນເດືອນພະຈິກ 2015 ຢູ່ກອງປະຊຸມໂຕະມົນຂັ້ນສູງ ຄັ້ງທີ່ 12. ເຊິ່ງຖະແຫລງການດັ່ງກ່າວໄດ້ຖືກປະກາດໃຊ້ຢູ່ກອງປະຊຸມໂຕະມົນປະຈຳປີ ໃນເດືອນພະຈິກ 2016.

## ຍຸດທະສາດການຮ່ວມມື 2017–2020 ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ແຜນພັດທະນາເສດຖະກິດ–ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016–2020)**

ເປົ້າໝາຍ: ສາມາດຫລຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາໃນປີ 2020 ໂດຍຜ່ານການຂະຫຍາຍຕົວແບບສົມສ່ວນ, ຍືນຍົງ ແລະ ຕໍ່ເນື່ອງ

| | | |
|---|---|---|
| ໝາກຜົນທີ 1: ການຂະຫຍາຍຕົວສົມສົມສ່ວນ, ໝັ້ນຄົງ ແລະ ຕໍ່ເນື່ອງ | ໝາກຜົນທີ 2: ການພັດທະນາຊັບພະຍາກອນມະນຸດ ແລະ ຂີດຄວາມສາມາດຂອງລັດ ແລະ ເອກະຊົນ | ໝາກຜົນທີ 3: ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ |

**ຍຸດທະສາດການຮ່ວມມືຂອງເອດີບີ 2017–2020**

ເປົ້າໝາຍ: ການຂະຫຍາຍຕົວທາງດ້ານເສດຖະກິດແບບຍືນຍົງ ແລະ ສົມດຸນຍິ່ງຂຶ້ນ

| | | |
|---|---|---|
| **ບຸລິມະສິດດ້ານຍຸດທະສາດທີ 1: ການພັດທະນາພື້ນຖານໂຄງລ່າງ ແລະ ພາກເອກະຊົນ ເພື່ອສະໜັບສະໜູນ ການສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້**<br>1) ການພັດທະນາພື້ນຖານໂຄງ ລ່າງ ແລະ ພ້ອມທັງການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ<br>2) ເສີມສ້າງການພັດທະນາວິສາ ຫະກິດເອກະຊົນ<br>3) ເພີ່ມທະວີຜະລິດຕະພາບ ແລະ ການສົ່ງເສີມການຜະລິດກະສິກຳໃຫ້ ເປັນສິນຄ້າ<br>4) ປັບປຸງການເຂົ້າເຖິງນໍ້າປະປາ ແລະ ສຸຂາພິບານທີ່ຍືນຍົງ | **ບຸລິມະສິດດ້ານຍຸດທະສາດທີ 2: ການພັດທະນາຊັບພະຍາກອນມະນຸດ**<br>1) ສ້າງຄວາມສາມາດຂອງຊັບພະຍາກອນມະນຸດທີ່ມີສີມືອັນແທດເໝາະ<br>2) ປັບປຸງການບໍລິການດ້ານສາທາລະນະສຸກ | **ບຸລິມະສິດດ້ານຍຸດທະສາດທີ 3: ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ**<br>1) ການປະເມີນ ແລະ ຕອບໂຕ້ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ<br>2) ປັບປຸງສະພາບແວດລ້ອມໃນຕົວເມືອງ<br>3) ຮັກສາໝາກຜົນຈາກການຜະລິດກະສິກຳໂດຍບໍ່ທຳລາຍຊັບພະຍາກອນທຳມະຊາດ |

ວຽກງານຕິດພົວພັນຫລາຍຂະແໜງການ: ການປົກຄອງ ແລະ ຄວາມສະເໝີພາບບົດບາດ ຍິງ-ຊາຍ

**ສິ່ງທ້າທາຍໃນການພັດທະນາ**

| | | |
|---|---|---|
| • ໂຄງສ້າງການສົ່ງອອກ ແລະ ການຜະລິດທີ່ຈຳກັດຫລາຍ<br>• ຊ່ອງວ່າງທາງດ້ານພື້ນຖານໂຄງລ່າງ | • ຈຳກັດດ້ານຊັບພະຍາກອນມະນຸດ | • ການເສື່ອມໂຊມທາງດ້ານສິ່ງແວດລ້ອມ |

• ການປົກຄອງ ແລະ ການບໍລິຫານຂອງພາກລັດທີ່ຂາດປະສິດທິພາບ

**ຄຳແນະນຳຜ່ານການຮັບຮອງຜົນການທົບທວນຄືນຍຸດທະສາດເພື່ອການຮ່ວມມື**

| | |
|---|---|
| • ເພີ່ມທະວີການເຮັດວຽກກັບພາກເອກະຊົນ<br>• ແກ້ໄຂອຸປະສັກການພັດທະນາວິສາຫະກິດ ຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃຕ້ການແຂ່ງຂັນໃນປະຊາຄົມເສດຖະກິດອາຊຽນ | • ສືບຕໍ່ການສະໜັບສະໜູນການສຶກສາຊັ້ນສູງ ແລະ ອາຊີວະສຶກສາ<br>• ມີສ່ວນຮ່ວມໃນຂະແໜງສາທາ ລະນະສຸກຫລາຍຂຶ້ນ |

ເອດີບີ = ທະນາຄານພັດທະນາອາຊີ; ເອອີຊີ = ປະຊາຄົມເສດຖະກິດອາຊຽນ; ອາຊຽນ = ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້; CPS = ຍຸດທະສາດເພື່ອການຮ່ວມມື; ສປປ ລາວ = ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; MSMEs = ວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ; NSEDP = ແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII; TVET = ອາຊີວະສຶກສາ.

ແຫລ່ງຂໍ້ມູນ: ເອດີບີ.

21. **ການເພີ່ມມູນຄ່າຂອງເອດີບີ.** ຍຸດທະສາດເພື່ອການຮ່ວມມື ໄດ້ນຳເອົາປະສົບການທາງດ້ານສະຖາບັນຂອງເອດີບີພໍສົມຄວນ ແລະ ການສະໜັບສະໜູນ ເຂົ້າໃສ່ແຜນງານການຮ່ວມມືທາງດ້ານເສດຖະກິດໃນອະນຸພາກພື້ນແມ່ນ້ຳຂອງ. ຈຸດສຸມທາງດ້ານພູມສາດຂອງແຂວງທີ່ທຸກຍາກຢູ່ຕາມແລວທາງເສດຖະກິດຂອງອະນຸພາກພື້ນແມ່ນ້ຳຂອງ ຈະເພີ່ມທະວີຜົນ ປະໂຫຍດຈາກການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ຊ່ວຍສົ່ງເສີມໃຫ້ມີການຂະຫຍາຍຕົວ ທີ່ມີຄວາມດຸ່ນດ່ຽງຫຼາຍຂຶ້ນ. ເອດີບີ ຈະເຮັດວຽກຮ່ວມກັນຢ່າງກົມກຽວຕະຫລອດຮອດການດຳເນີນງານ ແລະ ເສີມກັບການຊ່ວຍເຫລືອຂອງຄູ່ຮ່ວມພັດທະນາອື່ນໆ ໂດຍໃຫ້ການສະໜັບສະໜູນການປຶກສາຫາລືທາງດ້ານນະໂຍບາຍລະຫວ່າງກັນພາຍໃນ ແລະ ຈັດລຳດັບການລົງທຶນໃຫ້ເໝາະສົມ ເພື່ອປັບປຸງພື້ນຖານໂຄງລ່າງ, ການພັດທະນາຊັບພະຍາກອນມະນຸດ, ການຄຸ້ມຄອງສິ່ງ ແວດລ້ອມ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ. ເຊິ່ງວຽກດັ່ງກ່າວ ຈະຊ່ວຍແກ້ໄຂຂໍ້ຈຳກັດ ທີ່ມີຕໍ່ສະພາບແວດລ້ອມທີ່ເອື້ອອຳນວຍໃນການດຳເນີນທຸລະກິດ ໂດຍການຂະຫຍາຍການເຂົ້າເຖິງຕະຫຼາດ ທັງພາຍໃນ ແລະ ພາກພື້ນ ແລະ ພ້ອມທັງສະໜັບສະໜູນການພັດທະນາສີມືແຮງງານທີ່ແທດເໝາະກັບການຜະລິດອຸດສະຫະກຳ. ວິທີການແບບປະສົມປະສານ ຈະຊ່ວຍສ້າງຄວາມຫລາກຫລາຍໃຫ້ແກ່ເສດຖະກິດ ແລະ ແກ້ໄຂຜົນກະທົບທາງດ້ານສິ່ງແວດລ້ອມ ຈາກການພັດທະນາພື້ນຖານໂຄງລ່າງ ແລະ ການລົງທຶນຂອງພາກເອກະຊົນ. ການເຮັດວຽກຮ່ວມກັນ ຈະໄດ້ຮັບການຕິດຕາມກວດກາ ໃນລະຫວ່າງການປຶກສາຫາລືແຜນງານການຊ່ວຍເຫລືອ ແລະ ການທົບທວນຄືນການດຳເນີນງານ ຂອງໂຄງການຕ່າງໆປະຈຳປີ ແລະ ຈະໄດ້ສະທ້ອນເຂົ້າໃນການອອກແບບແຜນງານ ແລະ ໂຄງການ. ແຜນຍຸດທະສາດການຮ່ວມມື ຈະຕອບສະໜອງຕໍ່ບຸລິມະສິດຕ່າງໆຂອງລັດຖະບານຕາມການປ່ຽນແປງທີ່ເກີດຂຶ້ນ.

1. **ບຸລິມະສິດດ້ານຍຸດທະສາດທີ່ 1: ການພັດທະນາພື້ນຖານໂຄງລ່າງ ແລະ ພາກເອກະຊົນ ເພື່ອສະນັບສະໜຸນການສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້**

22. ການດຳເນີນງານຂອງເອດີບີ ຈະປັບປຸງການເຊື່ອມຈອດດ້ານໂຄງລ່າງ ແລະ ສົ່ງເສີມການລົງທຶນຂອງພາກເອກະຊົນ ທີ່ສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້ ໂດຍສະເພາະແມ່ນໃນຂະແໜງການທີ່ບໍ່ຂຶ້ນກັບຂະແໜງຊັບພະຍາກອນທຳມະຊາດ. ເອດີບີ ຈະສືບຕໍ່ໃຫ້ການສະໜັບສະໜູນຂະແໜງກະສິກຳເພື່ອການຄ້າ ໂດຍການສະໜອງທຶນໃຫ້ແກ່ການສ້າງພື້ນຖານໂຄງລ່າງ ໃນເຂດຊົນນະບົດທີ່ມີປະສິດທິຜົນ ເພື່ອນຳໃຊ້ທ່າແຮງທາງດ້ານກະສິກຳຂອງປະເທດ ໃຫ້ໄດ້ຮັບໝາກຜົນຫຼາຍຂຶ້ນກວ່າເກົ່າ. ການສະໜັບສະໜູນການພັດທະນາຕົວເມືອງຕາມທິດສີຂຽວ ຈະຍົກລະດັບມາດຕະຖານຊີວິດການເປັນຢູ່ ແລະ ພ້ອມທັງສົ່ງເສີມ ເສດຖະກິດຢູ່ພາຍໃນທ້ອງຖິ່ນ. ບຸລິມະສິດດ້ານຍຸດທະສາດທີ່ 1 ຈະຊ່ວຍໃຫ້ລັດຖະບານ ບັນລຸເປົ້າໝາຍ ການພັດທະນາແບບຍືນຍົງທີ່ 1, 2 ແລະ 6–11.

23. **ການພັດທະນາພື້ນຖານໂຄງລ່າງ ແລະ ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ.** ການລົງທຶນກໍ່ສ້າງພື້ນຖານໂຄງລ່າງຂອງເອດີບີ ຈະເປັນການເປີດກວ້າງການເຂົ້າເຖິງຕະຫຼາດ, ການບໍລິການທາງດ້ານສັງຄົມ ແລະ ໂອກາດທາງດ້ານເສດຖະກິດ ໃນຂະນະດຽວກັນ ມີການຫລຸດຜ່ອນຕົ້ນທຶນການຂົນສົ່ງ. ການພັດທະນາເຫລົ່ານີ້ ຈະສົ່ງເສີມການຄ້າ ແລະ ການລົງທຶນພາຍໃນພາກພື້ນ ໂດຍການສະໜັບສະໜູນຂອງໂຄງການຊ່ວຍເຫລືອທາງດ້ານວິຊາການ ວ່າດ້ວຍການອຳນວຍ ຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງໃນພາກພື້ນ. ການສະໜັບສະໜູນຂະແໜງພະລັງງານ ແມ່ນຈະສຸມໃສ່ການຕິດຕັ້ງໄຟຟ້າໃນເຂດຊົນນະບົດໃນບັນດາແຂວງພາກເໜືອທີ່ທຸກຍາກ ເພື່ອສົ່ງເສີມມູນຄ່າເພີ່ມເຂົ້າໃນການຜະລິດກະສິກຳ, ຂະຫຍາຍການບໍລິການທາງດ້ານສັງຄົມ ແລະ ຊ່ວຍເພີ່ມທະວີການສົ່ງອອກໄຟຟ້າໃຫ້ກັບບັນດາປະເທດອ້ອມຂ້າງ. ການດຳເນີນງານໃນຂະແໜງຂົນສົ່ງ ຈະປັບປຸງການບຳລຸງຮັກສາຖະໜົນຫົນທາງ ແລະ ລົງເລິກຕາໜ່າງເສັ້ນທາງຊົນນະບົດ ຕາມແລວທາງເສດຖະກິດ. ການສະໜັບສະໜູນການພັດທະນາຕົວເມືອງຕາມແລວທາງເສດຖະກິດ ແລະ ການທ່ອງທ່ຽວ ແບບຍືນຍົງ ຈະເພີ່ມທະວີໃຫ້ແກ່ການເຂົ້າເຖິງລະຫວ່າງເຂດຕົວເມືອງ ແລະ ເຂດຊົນນະບົດ, ອຳນວຍຄວາມສະດວກໃນການລົງທຶນເຂົ້າໃນທຸລະກິດກະສິກຳ ແລະ ເຮັດໃຫ້ຊາວກະສິກອນ

ແລະ ວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ໃນການເຂົ້າເຖິງຕ່ອງໂສ້ການສ້າງມູນຄ່າເພີ່ມໃນລະດັບແຫ່ງຊາດ ແລະ ພາກພື້ນ ໂດຍຜ່ານການໂຄສະນາເຜີຍແຜ່ໂອກາດ ການພັດທະນາທຸລະກິດ ແລະ ຄວາມຮູ້.

24. **ການສົ່ງເສີມການພັດທະນາວິສາຫະກິດເອກະຊົນ.** ເອດີບີ ຈະຊ່ວຍລັດຖະບານໃນການນໍາໃຊ້ທ່າແຮງຂອງພາກເອກະຊົນເປັນເຄື່ອງຈັກໃນການສ້າງວຽກເຮັດງານທໍາ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນ. ການດໍາເນີນການ ເພີ່ມເຕີມລວມມີ (i) ສົ່ງເສີມການພັດທະນາວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ໂດຍການປັບປຸງຂອບວຽກນະໂຍບາຍເພື່ອການລົງທຶນຂອງພາກເອກະຊົນ, ການພັດທະນາສີມືແຮງງານ ແລະ ການບໍລິການຈັດຫາງານ; (ii) ສືບຕໍ່ການສະໜັບສະໜູນຊ່ວຍເຫຼືອດ້ານວິຊາການເພື່ອຂະຫຍາຍການເຂົ້າເຖິງແຫຼ່ງທຶນ ແລະ ການບໍລິການການເງິນທີ່ສາມາດຈ່າຍໄດ້ ແລະ ເໝາະສົມຂອງວິສາຫະກິດຈຸລະພາກ , ຂະໜາດນ້ອຍ ແລະ ຂະໜາດກາງ; ແລະ (iii) ສະໜັບສະໜູນຄວາມພະຍາຍາມຂອງລັດຖະບານໃນການຈັດຕັ້ງປະຕິບັດ ບັນດາພັນທະຂອງປະຊາຄົມເສດຖະກິດອາຊຽນ ແລະອື່ນເຊັ່ນ: ການເພີ່ມທະວີການເຊື່ອມໂຍງທາງດ້ານການຄ້າ, ການສົ່ງເສີມການລົງທຶນໂດຍກົງຈາກຕ່າງປະເທດ ແລະ ການປັບປຸງແບບວິທີການດໍາເນີນການດ້ານລະບຽບການ. ກົມດໍາເນີນງານພາກເອກະຊົນຂອງເອດີບີ ຈະຊອກຫາໂອກາດໃນຂະແໜງໃດກໍ່ໄດ້ທີ່ມີທ່າແຮງ ລວມເຖິງໂຄງການພະລັງງານລົມທີ່ໄດ້ມີການນໍາສະເໜີ. ໂຄງການພະລັງງານຂອງພາກເອກະຊົນ ເຊິ່ງລວມ ເຖິງໂຄງການພະລັງງານທົດແທນ ຈະໄດ້ຮັບການສ້າງໂຄງສ້າງເພື່ອຂາຍໄຟຟ້າໃຫ້ແກ່ຜູ້ຊື້ທີ່ມີຄວາມໜ້າເຊື່ອຖືໃນບັນດາ ປະເທດໃກ້ຄຽງ. ກົມອາຊີຕາເວັນອອກສຽງໃຕ້ຂອງເອດີບີ, ຫ້ອງການຮ່ວມມື ລະຫວ່າງ ພາກລັດ-ເອກະຊົນ ແລະ ກົມດໍາເນີນງານພາກເອກະຊົນ ຈະຊ່ວຍລັດຖະບານໃນການກະກຽມກອບລະບຽບການຕ່າງໆ ສໍາລັບການຮ່ວມມືພາກລັດ-ເອກະຊົນ ແລະ ຊອກຫາໂອກາດສໍາລັບການຮ່ວມມືລະຫວ່າງພາກລັດ-ເອກະຊົນ ໃນຂະແໜງກະສິກໍາ, ຂະແໜງສຶກສາ, ການພັດທະນາຕົວເມືອງ, ນໍ້າປະປາ ແລະ ສຸຂາພິບານ, ສາທາລະນະສຸກ, ພະລັງງານ ແລະ ການທ່ອງທ່ຽວ.

25. **ເພີ່ມຜະລິດຕະພາບ ແລະ ສົ່ງເສີມການຜະລິດກະສິກໍາເພື່ອການຄ້າ.** ເພີ່ມຜະລິດຕະພາບດ້ານກະສິກໍາ ແລະ ສົ່ງເສີມກະສິກໍາເພື່ອການຄ້າ ຈະສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນຜູ້ທຸກຍາກ, ແມ່ຍິງ ແລະ ບັນດາຊົນເຜົ່າໃນເຂດຊົນນະບົດ. ໂຄງການທີ່ເອດີບີໃຫ້ການສະໜັບສະໜູນ ຈະ (i) ໃຫ້ການສະໜັບສະໜູນການປັບປຸງພື້ນຖານໂຄງລ່າງໃນເຂດຊົນນະບົດ ທີ່ມີປະສິດທິຜົນ, (ii) ສົ່ງເສີມການຂະຫຍາຍຕົວ ແລະ ການພັດທະນາທາງດ້ານກະສິກໍາ ໃຫ້ມີຄວາມຫຼາກຫຼາຍຂຶ້ນ ແລະ (iii) ປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການພັດທະນາທຸລະກິດດ້ານກະສິກໍາ. ບັນດາໂຄງການຢູ່ທາງແຂວງພາກເໜືອ ທີ່ທຸກຍາກ ແລະ ຕາມແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກຂອງອະນຸພາກພື້ນແມ່ນໍ້າຂອງ ຈະເພີ່ມໃຫ້ແກ່ ຊາວກະສິກອນ ເຂົ້າເຖິງພື້ນຖານໂຄງລ່າງໃນເຂດຊົນນະບົດທີ່ມີປະສິດທິຜົນ, ເພີ່ມການສະໜອງອາຫານ ທີ່ມີຄຸນຄ່າທາງ ໂພຊະນາການໃຫ້ແກ່ການບໍລິໂພກພາຍໃນ, ສົ່ງເສີມການສົ່ງອອກສິນຄ້າປອດສານພິດ ແລະ ສົ່ງເສີມວຽກເຮັດງານທໍາ ທີ່ນໍາໂດຍແມ່ຍິງ ຕະຫຼອດຮອດຕ່ອງໂສ້ການສ້າງມູນຄ່າເພີ່ມໃນການຜະລິດອາຫານ ແລະ ກະສິກໍາ. ໂຄງການຂອງພາກພື້ນວ່າດ້ວຍການປັບປຸງມາດຕະຖານທາງດ້ານສຸຂານາໄມ ແລະ ສຸຂານາໄມພືດ ຈະຊ່ວຍເພີ່ມທະວີການສົ່ງອອກຜະລິດຕະພັນກະສິກໍາ.

26. **ປັບປຸງການເຂົ້າເຖິງນໍ້າປະປາ ແລະ ສຸຂາພິບານ.** ການປັບປຸງພື້ນຖານໂຄງລ່າງໃນເທດສະບານ ແລະ ການບໍລິ ການທີ່ກ່ຽວຂ້ອງ ຈະຊ່ວຍການພັດທະນາອຸດສະຫະກໍາໃໝ່ ແລະ ຕອບໂຕ້ກັບບັນດາສິ່ງທ້າທາຍໃນການຂະຫຍາຍ ຕົວເມືອງຢ່າງໄວວາ. ການຊ່ວຍເຫຼືອຂອງເອດີບີ ຈະແນໃສ່ (i) ສ້າງຄວາມເຂັ້ມແຂງດ້ານການປົກຄອງ, ການວາງຜັງເມືອງ ແລະ ຂີດຄວາມສາມາດຂອງສະຖາບັນ; (ii) ປັບປຸງປະສິດທິພາບທາງດ້ານການເງິນ ແລະ ການດໍາເນີນງານ ຂອງໜ່ວຍງານນໍ້າປະປາຂັ້ນແຂວງ; (iii) ຍົກລະດັບວຽກງານກົດໝາຍ ແລະ ສະຖາບັນ ເພື່ອຄຸ້ມຄອງການພັດທະນາຕົວເມືອງ ຕາມທິດສີຂຽວ; (iv) ເພີ່ມຄຸນນະພາບ ແລະ ເຄືອຂ່າຍການບໍລິການນໍ້າປະປາ ແລະ ສຸຂາພິບານ; ແລະ (v) ສົ່ງເສີມການມີສ່ວນຮ່ວມຂອງພາກເອກະຊົນ. ນອກຈາກນັ້ນ ໂຄງການການປັບປຸງການເກັບສິ່ງເສດເຫຼືອ ແລະ ການເກັບນໍ້າເສຍ, ກັກເກັບ ແລະ ບໍາບັດນໍ້າເສຍໃນແຂວງຫຼວງພະບາງ ຈະໄດ້ມີການພິຈາລະນາ.

## 2. ບູລິມະສິດດ້ານຍຸດທະສາດທີ່ 2: ເພີ່ມທະວີການພັດທະນາຊັບພະຍາກອນມະນຸດ

27. ເພື່ອສ້າງເສດຖະກິດໃຫ້ມີຄວາມຫລາກຫຼາຍດ້ານ ແລະ ຊ່ວຍການຂະຫຍາຍຕົວທາງເສດຖະກິດແບບສົມສ່ວນ ເອດີບີ ຈະສະໜັບສະໜູນໃນການສ້າງສີມືແຮງງານ ແລະ ການພັດທະນາທາງດ້ານຄວາມຮູ້ ໃນຂະແໜງການທີ່ບໍ່ແມ່ນຂະແໜງຊັບພະຍາກອນທຳມະຊາດ. ເຊິ່ງປະກອບດ້ວຍການສ້າງຂີດຄວາມສາມາດໃຫ້ແກ່ລັດຖະບານ ໃນການອອກແບບ ແລະ ການບໍລິຫານການສຶກສາ ແລະ ສາທາລະນະສຸກ ແລະ ເພື່ອສ້າງຄວາມເຂັ້ມແຂງການປົກປ້ອງທາງດ້ານສັງຄົມ. ປັບປຸງການເຂົ້າເຖິງການບໍລິການສາທາລະນະສຸກທີ່ມີຄຸນນະພາບ ຈະສາມາດເຮັດໃຫ້ການດຳລົງຊີວິດດີຂຶ້ນ ແລະ ປະສິດທິພາບຂອງແຮງງານສູງຂຶ້ນ. ບຸລິມະສິດດ້ານຍຸດທະສາດທີ່ 2 ຈະຊ່ວຍລັດຖະບານ ບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ 3 ແລະ 4.

28. **ການສ້າງຊັບພະຍາກອນມະນຸດທີ່ສາມາດປັບໂຕໄວ ແລະ ມີສີມືແຮງງານທີ່ແທດເໝາະ.** ການສະໜອງແຮງງານທີ່ຍົກລະດັບສີມືແຮງງານ ແລະ ຄວາມຮູ້ ຕ້ອງການຄຸນນະພາບການສຶກສາຂັ້ນມັດທະຍົມສຶກສາຕອນປາຍ, ການສຶກສາຊັ້ນສູງ ແລະ ອາຊີວະສຶກສາ ທີ່ເໝາະສົມກັບອຸດສາຫະກຳ. ເອດີບີ ຈະຍັງສືບຕໍ່ໃຫ້ການສະໜັບສະໜູນທັງສາມຂະແໜງການຍ່ອຍນີ້ ໂດຍຈະສຸມໃສ່ການປະຕິຮູບທີ່ຕິດພັນກັນ ເຊິ່ງຊ່ວຍໃຫ້ບັນດາໂຮງຮຽນ ຜະລິດນັກສຶກສາທີ່ພ້ອມເຮັດວຽກ ແລະ ຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານ. ການປະຕິບັດງານ ຈະແນ່ໃສ່ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ເສີມໃຫ້ບັນດາໂຄງການທີ່ບັນດາຄູ່ຮ່ວມພັດທະນາກຳລັງດຳເນີນຢູ່ໃນຊັ້ນປະຖົມ, ມັດທະຍົມຕອນຕົ້ນ ແລະ ອາຊີວະສຶກສາ. ທຶນການສຶກສາສຳລັບຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ຈະຍັງສືບຕໍ່ຢູ່ໃນການອອກແບບໂຄງການ ແລະ ແຜນງານ.

29. **ປັບປຸງການບໍລິການສາທາລະນະສຸກ.** ເພື່ອໃຫ້ການປົກປ້ອງດ້ານສັງຄົມແກ່ປະຊາຊົນຜູ້ທຸກຍາກ, ຜູ້ຍ້າຍຖິ່ນຖານ ແລະ ກຸ່ມຜູ້ມີຄວາມສ່ຽງອື່ນໆ ແລະ ເພື່ອຍົກລະດັບຄວາມສົມດຸນ ແລະ ຜະລິດຕະພາບ ເອດີບີ ຈະສືບຕໍ່ໃຫ້ການສະໜັບສະໜູນວຽກງານການປົກຄຸມສຸຂະພາບທຸກທົ່ວໜ້າ. ການຊ່ວຍເຫລືອໃນຂະແໜງສາທາລະນະສຸກ ຈະສຸມໃສ່ (i) ປັບປຸງສະຖາບັນຝຶກອົບຮົມທາງການແພດ; (ii) ປັບປຸງວຽກງານການເງິນ ແລະ ການປົກຄອງຂອງຂະແໜງສາທາລະນະສຸກ ເຊິ່ງລວມເຖິງການປະກັນສຸຂະພາບ; (iii) ເພີ່ມຄວາມເຂັ້ມແຂງໃຫ້ແກ່ຄວາມປອດໄພດ້ານສຸຂະພາບ ແລະ ພື້ນຖານໂຄງລ່າງທາງດ້ານສາທາລະນະສຸກໃນພາກພື້ນ ໂດຍສະເພາະໃນເຂດຊາຍແດນ; ແລະ (v) ສົ່ງເສີມ ການລົງທຶນຂອງພາກເອກະຊົນເຂົ້າໃນພື້ນຖານໂຄງລ່າງ ແລະ ການບໍລິການສາທາລະນາສຸກ.

## 3. ບຸລິມະສິດດ້ານຍຸດທະສາດທີ່ 3: ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ

30. ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ຈະສົ່ງເສີມການຂະຫຍາຍຕົວທາງເສດກິດຕາມທິດສີຂຽວ ແລະ ເພີ່ມຜົນຕອບແທນຈາກຊັບພະຍາກອນທຳມະຊາດ. ການປະກອບສ່ວນແຫ່ງຊາດຂອງປະເທດທີ່ກຳນົດໄວ້ຂອງ ສປປ ລາວ ໄດ້ວາງກອບການຫຼຸດຜ່ອນການປ່ຽນແປນດິນຟ້າອາກາດ ແລະ ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ ໃນຂະແໜງກະສິກຳ, ປ່າໄມ້ ແລະ ການນຳໃຊ້ທີ່ດິນ, ຊັບພະຍາກອນນໍ້າ, ພະລັງງານ, ການຂົນສົ່ງ, ການພັດທະນາຕົວເມືອງ ແລະ ສາທາລະນະສຸກ. ມາດຕະການເຫລົ່ານີ້ ຈະໄດ້ລວມເຂົ້າແບບຄັດເລືອກຂອງການດຳເນີນງານຂອງ ເອດີບີ. ການບໍລິຫານຄວາມສ່ຽງດ້ານໄພພິບັດກໍ່ຈະຖືກລວມເຂົ້າແບບຄັດເລືອກຂອງການດຳເນີນງານຂອງເອດີບີ ຕາມຄວາມເໝາະສົມ. ບຸລິມະສິດດ້ານຍຸດທະສາດທີ່ 3 ຈະຊ່ວຍລັດຖະບານ ບັນລຸເປົ້າໝາຍພັດທະນາແບບຍືນຍົງທີ່ 12, 13 ແລະ 15.

31. ໂຄງການທີ່ເອດີບີ ຈະຊ່ວຍຍົກລະດັບການຄຸ້ມຄອງຮັກສາແຫລ່ງນໍ້າ ຜ່ານການສົ່ງເສີມການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ແນວທາງປະຕິບັດທາງດ້ານກະສິກຳທີ່ດີກວ່າເກົ່າ. ນອກນັ້ນ ເອດີບີ ຈະເພີ່ມຄວາມສາມາດໃນການປັບຕົວຕໍ່ການປ່ຽນແປງດິນ

ຟ້າອາກາດຂອງພື້ນຖານໂຄງລ່າງໃນເຂດຊົນນະບົດທີ່ມີປະສິດທິຜົນ ແລະ ການສ້າງທາງຜ່ານຂອງປາເພື່ອອານຸລັກພັນປາ, ການຄອບຄອງທີ່ດິນ, ການວາງແຜນທີ່ດິນ, ການຄຸ້ມຄອງຄຸນນະພາບນ້ຳ, ການອານຸລັກຮັກສາລະບົບນິເວດ, ວິຖີ ການຜະລິດກະສິກຳທີ່ປັບຕົວເຂົ້າກັບສະພາບອາກາດ ແລະ ການຄຸ້ມຄອງສິ່ງເສດເຫຼືອ ຈາກເຂດຜະລິດກະສິກຳ. ການສະໜັບສະໜູນການຊ່ວຍເຫຼືອດ້ານວິຊາການ ຈະຊ່ວຍລັດຖະບານໃນການກະກຽມກົດໝາຍວ່າດ້ວຍ ການບໍລິຫານ ຄວາມສ່ຽງທາງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ. ຈະມີການພິຈາລະນາໃຫ້ການຊ່ວຍເຫຼືອສໍາລັບການປັບຕົວຂອງລະບົບນິເວດ ແລະ ການປົກປັກຮັກສາຊັບພະຍາ ກອນທຳມະຊາດ ເຊິ່ງລວມທັງປ່າໄມ້.

## 4. ຄວາມສະເໝີພາບ ບົດບາດ ຍິງ-ຊາຍ ແລະ ການປົກຄອງຖືເປັນວຽກປົ່ນອ້ອມທີ່ພົວພັນກັນ

32. ຄວາມສະເໝີພາບ ບົດບາດ ຍິງ-ຊາຍ ຈະມີການນຳສະເໜີຢູ່ໃນໂຄງການ ແລະ ແຜນງານຢ່າງພົ້ນເດັ່ນ. ການຊ່ວຍເຫຼືອໃນຂະແໜງການສຶກສາຂອງເອດີບີ ຈະໃຫ້ການສະໜັບສະໜູນແມ່ຍິງ ໃຫ້ໄດ້ເຂົ້າຢູ່ໃນແຮງງານປົກະຕິ ແລະ ການເຂົ້າເຖິງການຝຶກອົບໃນວິຊາທີ່ບໍ່ແມ່ນຂອງຜູ້ຍິງ. ການເງິນຂອງຂະແໜງສາທາລະນະສຸກ ຈະຊ່ວຍໃຫ້ແມ່ຍິງ ແລະ ເດັກຍິງຈາກຊຸມຊົນຊົນເຜົ່າໃນເຂດຫ່າງໄກສອກຫລີກຕ່າງໆ ເຂົ້າເຖິງ ການບໍລິການສາທາລະນາສຸກທີ່ມີຄຸນນະພາບຢ່າງເທົ່າທຽມກັນ ເຊິ່ງລວມທັງສຸຂະພາບທາງເພດ ແລະ ການຈະເລີນພັນ. ໂຄງການທັງໝົດ ຈະສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ ໃນການຕັດສິນບັນຫາ ແລະ ມີຄວາມເທົ່າທຽມກັນໃນເຂົ້າເຖິງວຽກເຮັດງານທຳ ແລະ ຊັບພະຍາກອນອື່ນໆ. ການເຂົ້າໄປມີສ່ວນຮ່ວມໃນຂະແໜງການທ່ອງທ່ຽວ ແລະ ກະສິກຳຈະເພີ່ມໃຫ້ແມ່ຍິງ ເຂົ້າເຖິງການຝຶກອົບຮົມດ້ານວິຊາການ ແລະ ການພັດທະນາທາງທຸລະກິດ, ການຂະຫຍາຍວຽກງານສົ່ງເສີມການບໍລິການ, ແຫລ່ງທຶນທີ່ສາມາດຊຳລະຄືນໄດ້ແລະ ເຂົ້າເຖິງຕະຫລາດ. ການຈະຊ່ວຍເຫລືອນີ້ ຈະຊ່ວຍໃຫ້ລັດຖະບານບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ່ 5 ແລະ 10.

33. ການສະໜັບສະໜູນການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ໄປພ້ອມກັນກັບການສະໜັບສະໜູນເງິນກູ້ທາງວິຊາການ ວ່າດ້ວຍການປະເມີນຜົນກະທົບທາງດ້ານນິຕິກຳ ແລະ ລະບົບການຂຶ້ນທະບຽນວິສາຫະກິດແຫ່ງຊາດ ທີ່ກຳລັງດຳເນີນຢູ່ ຈະຊ່ວຍເຮັດໃຫ້ສະພາບແວດລ້ອມທີ່ເອື້ອອຳນວຍຫຼາຍຂຶ້ນແກ່ທຸລະກິດຂອງພາກເອກະຊົນ. ຊັບພະຍາກອນທີ່ບໍ່ພຽງພໍໃນລະດັບຊາດ ແລະ ຄວາມບໍ່ເທົ່າທຽມກັນໃນການບໍລິການດ້ານການສຶກສາ ແລະ ສາທາລະນະສຸກ ຈະໄດ້ຮັບການແກ້ໄຂ ໂດຍການປັບປຸງການສ້າງແຜນງົບປະມານໃນໄລຍະກາງ, ຂັ້ນຕອນໃນການຈັດສັນງົບປະມານ ແລະ ຍົກລະດັບຂີດຄວາມສາມາດໃນການບໍລິຫານລາຍຈ່າຍ. ອີງໃສ່ຜົນໄດ້ຮັບໃນບັນດາຂະແໜງການເຫລົ່ານີ້ ແລະ ການຊ່ວຍເຫຼືອ ຂອງບັນດາຄູ່ຮ່ວມພັດທະນາອື່ນໆ ອາດຈະມີການເພີ່ມການສະໜັບສະໜູນການຄຸ້ມຄອງລາຍຈ່າຍພາກລັດຫລາຍຂຶ້ນ.

## ຈ. ບັນດາບຸລິມະສິດໃນການສະໜັບສະໜູນດ້ານຄວາມຮູ້

34. ຄວາມຮູ້ກ່ຽວກັບປະເທດ, ຂະແໜງການ, ໂຄງການ ແລະ ພາກພື້ນ ຈະຖືກລວບລວມໄວ້ຢ່າງຕໍ່ເນື່ອງ ແລະ ຖືກເຜີຍແຜ່ຜ່ານກອງປະຊຸມສຳມະນາ, ກອງປະຊຸມສົນທະນາ, ກອງປະຊຸມກັບພາກສ່ວນກ່ຽວຂ້ອງ, ເອກະສານຄົ້ນຄວ້າ ແລະ ສື່ສັງຄົມອອນລາຍ ເຊິ່ງລວມທັງເວບໄຊສຂອງເອດີບີ ແລະ ເວັບໄຊສສຳນັກງານປະຈຳ ສປປ ລາວ. ຄວາມຮູ້ໃໝ່ໆ ແລະ ແນວຄິດປະດິດສ້າງໃໝ່ຈະສອດຄ່ອງກັບບຸລິມະສິດດ້ານຍຸດທະສາດຂອງຍຸດທະສາດການຮ່ວມມື.[13] ຈະໃຫ້ການຊ່ວຍເຫລືອດ້ານຄວາມຮູ້ ຂອງການຂະຫຍາຍການຜະລິດຂອງເສດຖະກິດ, ການບໍລິຫານຄຸ້ມຄອງຂະແໜງການ, ການປ່ຽນແປງດິນຟ້າອາກາດ, ການຂະຫຍາຍຕົວຕາມທິດສີຂຽວ, ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ, ຄວາມສະເໝີພາບ ບົດບາດ ຍິງ-ຊາຍ ແລະ ສ້າງຂີດຄວາມສາມາດໃນ

[13] ແຜນວຽກກ່ຽວກັບຄວາມຮູ້ຂອງປະເທດແມ່ນຢູ່ໃນເອກະສານຊ້ອນທ້າຍທີ່ 2.

ການປົກປ້ອງ. ເອດີບີ ຈະອຳນວຍຄວາມສະດວກໃນການຖ່າຍທອດຄວາມຮູ້ ແລະ ປະສົບການໃນພາກພື້ນໃຫ້ແກ່ ສປປ ລາວ, ສ້າງຂົວຕໍ່ດ້ານຄວາມຮູ້ກັບສະຖາບັນຕ່າງໆໃນພາກພື້ນ ແລະ ສົ່ງເສີມການຮ່ວມມື ລະຫວ່າງ ບັນດາປະເທດກຳລັງພັດທະນາ.

## IV. ການຈັດຕັ້ງປະຕິບັດຍຸດທະສາດ

### ກ. ຂະໜາດຂອງທຶນຊ່ວຍເຫລືອ

35. ການປ່ອຍກູ້ຂອງ ເອດີບີ ຈະສອດຄ່ອງກັບສະພາບໜີ້ສິນພາກລັດຂອງ ສປປ ລາວ ແລະ ຄູ່ມືແນະນຳການກູ້ຢືມ. ເອດີບີ ຈັດປະເພດໃຫ້ ສປປ ລາວ ຢູ່ໃນປະເທດກຸ່ມ A ເຊິ່ງສາມາດເຂົ້າເຖິງແຫລ່ງທຶນທົ່ວໄປແບບຜ່ອນຜັນ ແລະ ທຶນຊ່ວຍເຫຼືອລ້າຈາກກອງທຶນພັດທະນາອາຊີ.[14] ການຈັດສັນແຫລ່ງທຶນກູ້ຢືມຈາກແຫລ່ງທຶນທົ່ວໄປແບບຜ່ອນຜັນ ແລະ ປະລິມານທຶນຊ່ວຍເຫລືອຈາກກອງທຶນພັດທະນາອາຊີ ໃຫ້ແກ່ ສປປ ລາວ ສຳລັບ ປີ 2017-2020 ແມ່ນມີມູນຄ່າປະມານ 421 ລ້ານໂດລາສະຫະລັດ ເຊິ່ງລວມທັງບັນດາໂຄງການຂອງພາກພື້ນ.[15] ເອດີບີ ຈະຊອກຫາທຶນສົມທົບ ແລະ ການສະໜອງທຶນຈາກແຫລ່ງທຶນອື່ນໆ ໃນຊ່ວງໄລຍະການຈັດຕັ້ງປະຕິບັດຍຸດທະສາດເພື່ອການຮ່ວມມື ເຊິ່ງລວມທັງເງິນກູ້ຢືມຈາກແຫລ່ງທຶນທົ່ວໄປແບບຜ່ອນຜັນ ແລະ ທຶນຊ່ວຍເຫລືອລ້າຈາກກອງທຶນພັດທະນາອາຊີຂອງອະນຸພາກພື້ນ, ກອງທຶນໂລກ, ກອງທຶນພັດທະນາພື້ນຖານໂຄງລ່າງອາຊຽນ ແລະ ກອງທຶນທີ່ກ່ຽວກັບການປ່ຽນແປງດິນຟ້າອາກາດ.[16] ເອດີບີ ຈະເພີ່ມການດຳເນີນງານພາກເອກະຊົນຂອງຕົນ ແລະ ລະດົມຊັບພະຍາກອນຕ່າງໆຈາກພາກເອກະຊົນ ເພື່ອຊ່ວຍລັດຖະບານ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII. ຄາດຄະເນວ່າການລົງທຶນໂດຍກົງຈາກຕ່າງປະເທດ ຈະກວມເອົາ 56% ຂອງຄວາມຕ້ອງການການລົງທຶນທັງໝົດ ໃນລະຫວ່າງປີ 2016-2020.

36. ການ**ປະກອບສ່ວນທຶນຮ່ວມ.** ອີງໃສ່ຂໍ້ຈຳກັດທາງດ້ານງົບປະມານ ແລະ ຂີດຄວາມສາມາດໃນການບໍລິຫານ ການເງິນພາກລັດທີ່ຈຳກັດ, ເອດີບີ ແລະ ລັດຖະບານໄດ້ຕົກລົງເປັນເອກະພາບກັນວ່າ ເພດານການຮ່ວມທຶນຂອງປະເທດ ສຳລັບການຈັດຕັ້ງປະຕິບັດໂຄງການທຶນກູ້ຢືມ, ທຶນຊ່ວຍເຫລືອລ້າ ແລະ ທຶນຊ່ວຍເຫລືອທາງດ້ານວິຊາການ ແມ່ນໄດ້ຖືກກຳນົດຢູ່ທີ່ 99% ຂອງມູນຄ່າທັງໝົດຂອງໂຄງການ. ສຳລັບບັນດາໂຄງການສະເພາະໃດໜຶ່ງ ການສະໜອງທຶນຈະສູງເຖິງ 99% ຂອງມູນຄ່າທັງໝົດຂອງໂຄງການ ເຊິ່ງລວມທັງພັນທະພາສີ ແລະ ອາກອນຕ່າງໆ.

37. **ບຸກຄະລາກອນ.** ຄວາມຕ້ອງການດ້ານບຸກຄະລາກອນຂອງເອດີບີ ຈະຕ້ອງສະທ້ອນຕາມບຸລິມະສິດ ການທົບທວນກາງສະໄໝຂອງຍຸດທະສາດ 2020.[17] ເນື່ອງຈາກມີການເພີ່ມຂຶ້ນຂອງສັດສ່ວນໂຄງການ ແລະ ວຽກງານດ້ານຄວາມຮູ້ ທີ່ຖືກມອບໝາຍໃຫ້ສຳນັກງານປະຈຳ ສປປ ລາວ, ຈຶ່ງຕ້ອງການພະນັກງານເພີ່ມ ເພື່ອຊ່ວຍສະໜັບສະໜູນການຂະຫຍາຍການດຳເນີນງານໃນຂະແໜງນ້ຳ ແລະ ພື້ນຖານໂຄງລ່າງ ແລະ ການບໍລິການອື່ນໆໃນເຂດຕົວເມືອງ, ການບໍລິຫານພາກລັດ ແລະ ສາທາລະນະສຸກ ລວມທັງການຈັດຊື້-ຈັດຈ້າງ ແລະ ການປະຕິບັດຕາມນະໂຍບາຍການປົກປ້ອງ. ຄວາມຕ້ອງການດ້ານບຸກຄະລາກອນ ຈະໄດ້ຮັບການປະເມີນເປັນປະຈຳ ແລະ ດັດປັບຕາມຄວາມເໝາະສົມ.

---

[14] ເນື່ອງຈາກ ການປຶກສາຫາລື ຕາມມາດຕາ IV ຂອງ IMF ກ່ຽວກັບການຈັດລຳດັບຄວາມສ່ຽງຂອງໜີ້ສິນຕ່າງປະເທດຂອງ ສປປ ລາວ; ການດຳເນີນງານໃນປີ 2017 ແລະ 2018 ແມ່ນເງິນຊ່ວຍເຫລືອລ້າເທົ່ານັ້ນ. ສປປ ລາວ ຈະບໍ່ໄດ້ຮັບເງິນຊ່ວຍເຫລືອລ້າໃນປີ 2019 ເນື່ອງຈາກລາຍໄດ້ລວມແຫ່ງຊາດ ກາຍລະດັບຕໍ່າສຸດໃນການກຳນົດຂອງສະມາຄົມພັດທະນາສາກົນ.

[15] ການຈັດສັນທຶນຊ່ວຍເຫລືອໃຫ້ປະເທດ ຈະຂຶ້ນກັບເງິນກູ້ຢືມຈາກແຫລ່ງທຶນທົ່ວໄປແບບຜ່ອນຜັນ ແລະ ກອງທຶນພັດທະນາອາຊີ ແລະ ຜົນໄດ້ຮັບຈາກການປະເມີນຜົນການປະຕິບັດງານຂອງປະເທດ.

[16] ສປປ ລາວ ມີສິດໄດ້ຮັບເງິນຊ່ວຍເຫລືອ ພາຍໃຕ້ກົນໄກການສະໜອງທຶນເພື່ອຫລຸດຜ່ອນຄວາມສ່ຽງທາງດ້ານໄພພິບັດແບບໃໝ່ ສຳລັບ 2017–2019.

[17] ເອດີບີ. 2014. *ການທົບທວນຄືນຍຸດທະສາດ 2020 ໃນໄລຍະກາງ: ການປະເຊີນກັບບັນດາສິ່ງທ້າທາຍໃນການປະຕິຮູບອາຊີ ແລະ ປາຊີຟິກ*. ມະນີລາ.

## ຂ. ບຸລິມະສິດໃນການຈັດຕັ້ງປະຕິບັດ

38. **ຈຸດສຸມການດຳເນີນງານ.** ຈະຍັງສືບຕໍ່ແນວໂນ້ມທີ່ໄປສູ່ການມີຈຳນວນໂຄງການ ແລະ ແຜນງານໜ້ອຍລົງ ແຕ່ ມີຂະໜາດໃຫຍ່ຂຶ້ນກວ່າເກົ່າ. ໂດຍສະເລ່ຍຈະມີການຮັບຮອງສາມໂຄງການໃນແຕ່ລະປີ ແລະ ການດຳເນີນງານຈະໃຫຍ່ພຽງພໍ ທີ່ຈະເຮັດໃຫ້ການປະກອບສ່ວນເຂົ້າໃນຈຸດປະສົງການພັດທະນາ ແລະ ວາລະການປະຕິຮູບຂອງລັດຖະບານ.[18] ການອອກແບບໂຄງການ ຈະມີການພິຈາລະນາຢ່າງລະອຽດເຖິງຂີດຄວາມສາມາດຂອງໜ່ວຍງານຄຸ້ມຄອງ ແລະ ໜ່ວຍງານຈັດຕັ້ງປະຕິບັດ ໂຄງການຕາມແຜນງານການກະຈາຍອຳນາດຈາກສູນກາງຫາທ້ອງຖິ່ນຂອງລັດຖະບານ. ການສະໜອງເງິນກູ້ ອີງໃສ່ໂນຍະບາຍເປັນຫຼັກ ຈະຖືກນຳໃຊ້ຢ່າງຮອບຄອບ ເພື່ອແກ້ໄຂຂໍ້ຈຳກັດທາງດ້ານນະໂຍບາຍ ແລະ ສະຖາບັນທີ່ມີມາຍາວນານ.

39. **ຜົນການປະຕິບັດງານດ້ານການຄຸ້ມຄອງໂຄງການ.** ຍຸດທະສາດການຮ່ວມມື ຈະຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂອງປະເທດ ເພື່ອຍົກລະດັບການປະຕິບັດງານ ເຊິ່ງລວມທັງຄວາມພ້ອມໃນການຈັດຕັ້ງປະຕິບັດໂຄງການ ແລະ ການຈັດຊື້-ຈັດຈ້າງ. ເອດີບີ ຈະ (i) ເພີ່ມໃຫ້ການສະໜັບສະໜູນທາງດ້ານວິຊາການ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ຂອບວຽກນິຕິກຳສຳລັບການຄຸ້ມຄອງການຈັດຊື້-ຈັດຈ້າງ ແລະ ການເງິນ, (ii) ສ້າງຂີດຄວາມສາມາດໃນການຕິດຕາມການຈັດຊື້-ຈັດຈ້າງ ແລະ ການບໍລິຫານການເງິນ, (iii) ໃຫ້ການສະໜັບສະໜູນການສ້າງຕັ້ງລະບົບການຈັດຊື້-ຈັດຈ້າງແຫ່ງຊາດທີ່ເປັນທາງການ ແລະ (iv) ໃຫ້ການສະໜັບສະໜູນການເຜີຍແຜ່ ແລະ ນຳໃຊ້ມາດຕະຖານຂັ້ນຕອນ ການດຳເນີນງານຂອງລັດສຳລັບໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກພາຍນອກ. ຮັບປະກັນການອອກແບບໂຄງການທີ່ສາມາດ ປະຕິບັດໄດ້ ແລະ ຂັ້ນຕອນຄວາມພ້ອມຂອງການຈັດຕັ້ງປະຕິບັດໂຄງການໂຄງການ ຈະເລັ່ງໃຫ້ການຈັດຕັ້ງປະຕິບັດໂຄງການໄປຕາມກອບເວລາ ແລະ ເພີ່ມປະສິດທິຜົນ. ເອດີບີ ຈະສືບຕໍ່ທົບທວນຜົນການດຳເນີນງານຂອງໂຄງການໃນແຕ່ລະໄຕມາດ ແລະ ຮ່ວມກັນທົບທວນຜົນການດຳເນີນງານໂຄງການປະຈຳປີກັບຄູ່ຮ່ວມພັດທະນາອື່ນໆ ເພື່ອຈຳແນກບັນຫາ ແລະ ຫາວິທີແກ້ໄຂບັນຫາດັ່ງກ່າວຢ່າງເປັນລະບົບ. ເອດີບີ ຈະນຳສະເໜີນະໂຍບາຍການຈັດຊື້-ຈັດຈ້າງ 2017 ໃຫມ່ ແລະ ຄູ່ມືແນະນາການຈັດຕັ້ງປະຕິບັດຂອງຕົນ ເພື່ອເພີ່ມຄວາມມີປະສິດທິພາບໃນການນຳໃຊ້ທຶນໃນບັນດາໂຄງການ ທີ່ເອດີບີ ໃຫ້ການສະໜັບສະໜູນທຶນ.

## ຄ. ການຕິດຕາມຜົນໄດ້ຮັບ

40. ການຕິດຕາມການຈັດຕັ້ງປະຕິບັດຍຸດທະສາດເພື່ອການຮ່ວມມື ແລະ ຜົນໄດ້ຮັບ ຈະໄດ້ດຳເນີນການຮ່ວມກັນ ກັບລັດຖະບານ ຕາມກອບວຽກຂອງຍຸດທະສາດການຮ່ວມມື ແລະ ຜົນໄດ້ຮັບຂອງຂະແໜງການ ໄປພ້ອມກັນກັບກອບວຽກຂອງການຕິດຕາມ ແລະ ປະເມີນຜົນຂອງແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII. ກອງປະຊຸມທົບທວນການດຳເນີນງານຂອງໂຄງການ ປະຈຳໄຕມາດ, ການທົບທວນການດຳເນີນງານໂຄງການຮ່ວມ ປະຈຳປີ ແລະ ການປຶກສາຫາລືແຜນງານຂອງປະເທດ ແມ່ນກົນໄກການຕິດຕາມອັນສຳຄັນ.

## ງ. ຄວາມສ່ຽງ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງ

41. **ຄວາມສ່ຽງຄວາມຄາດເຄື່ອນ.** ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານ (2016) ຢ່າງມີປະສິດທິຜົນ ແມ່ນຍັງເປັນບັນຫາ. ຂໍ້ກຳນົດທີ່ສຳຄັນສ່ວນໃຫຍ່ຂອງກົດໝາຍດັ່ງກ່າວ ໂດຍສະເພາະຂໍ້ຮຽກຮ້ອງໃຫ້ສະພາປະຊາຊົນຂັ້ນແຂວງ ຮັບຮອງ ແລະ ຄວບຄຸມຄ່າໃຊ້ຈ່າຍຂອງທ້ອງຖິ່ນ ແລະ ການສ້າງແຜນງົບປະມານໄລຍະກາງ ແມ່ນຫຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດ. ການຂາດຍຸດທະສາດການເງິນໄລຍະກາງ ເຮັດໃຫ້ບໍ່ສາມາດຄາດຄະເນງົບປະມານ ແລະ ການຈັດສັນງົບປະມານຢ່າງມີຍຸດທະສາດ ໂດຍ

[18] ການສະໜອງທຶນເພີ່ມເຕີມຈະໄດ້ຮັບການພິຈາລະນາ ສຳລັບການໃຫ້ເງິນກູ້ຢືມທີ່ມີການບໍລິຫານຢ່າງມີປະສິດທິຜົນ ແລະ ມີຜົນໄດ້ຮັບທີ່ດີ.

ຜ່ານກອບວຽກງົບປະມານລາຍຈ່າຍໄລຍະກາງ. ການຄາດຄະເນທາງດ້ານງົບປະມານທີ່ບໍ່ສົມເຫດສົມຜົນ ແລະ ຂັ້ນຕອນການຂຶ້ນແຜນງົບປະມານທີ່ກະແຈກກະຈາຍ ລະຫວ່າງ ໂຄງການການລົງທຶນ ແລະ ລາຍຈ່າຍປະຈຳ ເປັນອຸປະສັກໃນການບັນລຸເປົ້າໝາຍຈຸດປະສົງຂອງງົບປະມານ. ການຂາດບົດລາຍງານການເງິນທີ່ເຊື່ອຖືໄດ້ ແລະ ຖືກຕ້ອງຕາມເວລາ ຍັງສ້າງຄວາມຫຍຸ້ງຫຍາກໃນການຕິດຕາມກວດກາການນຳໃຊ້ງົບປະມານ ແລະ ເພີ່ມຄວາມສ່ຽງວ່າເງິນງົບປະມານ ບໍ່ໄດ້ຖືກນຳໃຊ້ຕາມຈຸດປະສົງທີ່ໄດ້ວາງໄວ້. ການສະໜັບສະໜູນຂອງ ເອດີບີ (ວັກ 33) ສຸມໃສ່ຂົງເຂດການຄຸ້ມຄອງການເງິນ ແລະ ພາກລັດ ໂດຍເສີມໃສ່ການສະໜັບສະໜູນທາງດ້ານວິຊາການຈາກຄູ່ຮ່ວມພັດທະນາອື່ນ ເຊິ່ງລວມທັງກອງທຶນ ການເງິນສາກົນ (IMF).

42. **ຄວາມສ່ຽງດ້ານການຈັດຊື້-ຈັດຈ້າງ.** ປະຈຸບັນ ສປປ ລາວ ຍັງບໍ່ທັນມີກົດໝາຍຄຸ້ມຄອງການຈັດຊື້-ຈັດຈ້າງເທື່ອ. ການຈັດຊື້-ຈັດຈ້າງ ແມ່ນໄດ້ຮັບການຄຸ້ມຄອງໂດຍດຳລັດ ແລະ ລະບຽບການ ພາຍໃຕ້ການຄຸ້ມຄອງ ຂອງຫ້ອງການຕິດຕາມການຈັດຊື້-ຈັດຈ້າງຂອງກະຊວງການເງິນ. ຄວາມສ່ຽງດ້ານການຈັດຊື້-ຈັດຈ້າງໃນລະດັບປະເທດ ແລະ ລະດັບໜ່ວຍງານ ແມ່ນຖືກປະເມີນວ່າມີສູງຫຼາຍ ຍ້ອນການຂາດເຂີນກອບວຽກນິຕິກຳ ແລະ ລະບຽບການຄຸ້ມຄອງ, ການຕິດຕາມກວດກາທີ່ບໍ່ພຽງພໍ, ການບັນທຶກຂໍ້ມູນທີ່ບໍ່ມີປະສິດທິພາບ ແລະ ການຂາດແຜນງານຄວາມເປັນມືອາຊີບ ດ້ານການຈັດຊື້-ຈັດຈ້າງ. ຂໍ້ຈຳກັດຈຳນວນຜູ້ຊ່ຽວຊານການຈັດຊື້-ຈັດຈ້າງພາຍໃນ, ຂາດການມີຄະນະກຳມະການຄຸ້ມຄອງການຈັດຊື້-ຈັດຈ້າງຖາວອນ ແລະ ການຕິດຕາມກວດກາການຈັດຊື້-ຈັດຈ້າງທີ່ບໍ່ພຽງພໍ ແມ່ນເປັນບັນຫາຫຼັກ. ເອດີບີ ຈະສືບຕໍ່ດຳເນີນການຝຶກອົບຮົມໄລຍະສັ້ນກ່ຽວກັບວຽກງານການຈັດຊື້-ຈັດຈ້າງ ພ້ອມທັງໃຫ້ທີ່ປຶກສາ ເພື່ອມາແກ້ໄຂບັນຫາຄວາມຊັກຊ້າດ້ານການຈັດຊື້-ຈັດຈ້າງ ແລະ ຮ່ວມມືກັບຄູ່ຮ່ວມພັດທະນາອື່ນໆ ເພື່ອສະໜັບສະໜູນການປະຕິຮູບກົດໝາຍ ແລະ ລະບຽບການ ໄປພ້ອມໆກັນກັບການສ້າງຂີດຄວາມສາມາດຢ່າງເປັນລະບົບໃນໄລຍະຍາວ.

43. **ຄວາມສ່ຽງຕໍ່ການສໍ້ລາດບັງຫຼວງ.** ລັດຖະບານໄດ້ອອກດຳລັດວ່າດ້ວຍການຕ້ານການສໍ້ລາດບັງຫລວງໃນເດືອນພະຈິກ ປີ 1999, ແຕ່ຄວາມສ່ຽງຕໍ່ການສໍ້ລາດບັງຫລວງ ຍັງຄົງມີຢູ່. ໃນປີ 2016 ສປປ ລາວ ໄດ້ຖືກຈັດອັນດັບທີ 123 ຈາກ 176 ປະເທດ ວ່າດ້ວຍທັດສະນະຕໍ່ການສໍ້ລາດບັງຫລວງ.[19] ຄວາມສ່ຽງຕໍ່ການສໍ້ລາດບັງຫຼວງໃນການດຳເນີນງານຂອງເອດີບີ ຈະໄດ້ຮັບການປະເມີນຢ່າງໃກ້ຊິດ ໂດຍຜ່ານການລົງກວດການດຳເນີນງານ, ການຈັດຕັ້ງປະຕິບັດໂຄງການ ແລະ ກວດກາເອກະສານການຈັດຊື້-ຈັດຈ້າງ ແລະ ບົດລາຍງານການກວດສອບ.

[19] ອົງການເພື່ອຄວາມໂປ່ງໃສສາກົນ. 2017. *ດັດສະນີວັດແທກທັດສະນະຕໍ່ການສໍ້ລາດບັງຫຼວງ 2016*. ນະຄອນຫຼວງ ເບີລິນ.

# ຂອບຜົນໄດ້ຮັບຂອງຍຸດທະສາດເພື່ອການຮ່ວມມື, 2017–2020

**ຕົວຊີ້ບອກຜົນຕໍ່ການພັດທະນາປະເທດ** ຕາມແນວທາງຂອງ**ຍຸດທະສາດການຮ່ວມມື**

1. ສັດສ່ວນປະຊາກອນທີ່ຢູ່ຕໍ່າກວ່າເສັ້ນແບ່ງຄວາມທຸກຍາກແຫ່ງຊາດ ແມ່ນຈະໃຫ້ຫລຸດລົງຈາກ 23,2% ໃນປີ 2013 ເປັນ 10% ໃນປີ 2021
2. ການຫລຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາໃນປີ 2020: ເພີ່ມຈາກຍອດລວມລາຍຮັບແຫ່ງຊາດຕໍ່ຫົວຄົນ $1.232, ດັດສະນີຊັບສິນດ້ານບຸກຄະລາກອນ 60,8, ແລະ ດັດສະນີຄວາມສ່ຽງທາງດ້ານ ເສດຖະກິດ 36,2 ໃນປີ 2015 ເປັນ ຍອດລວມລາຍຮັບແຫ່ງຊາດຕໍ່ຫົວຄົນ $1.242, ດັດສະນີຊັບສິນດ້ານບຸກຄະລາກອນ 66,0 ແລະ ດັດສະນີຄວາມສ່ຽງທາງດ້ານເສດຖະກິດ 32,0 ໃນປີ 2020

| **ເປົ້າໝາຍຂອງຍຸດທະສາດການຮ່ວມ ແລະ ຜົນກະທົບທີ່ກ່ຽວຂ້ອງ** | **ຂົງເຂດບຸລິມະສິດຂອງຍຸດທະສາດເພື່ອການຮ່ວມມື** | **ບັນດາຫມາກຜົນທີ່ເອດີບີປະກອບສ່ວນ** | **ຕົວຊີ້ວັດຫມາກຜົນ** | **ປະລິມານທຶນຂອງຍຸດທະສາດເພື່ອການຮ່ວມມື** |
|---|---|---|---|---|
| (i) ການພັດທະນາພື້ນຖານໂຄງລ່າງ ແລະ ພາກເອກະຊົນ ເພື່ອສະໜັບສະໜູນການສ້າງວຽກເຮັດງານທໍາ ແລະ ສ້າງລາຍໄດ້ | ການພັດທະນາພື້ນຖານໂຄງລ່າງ ແລະ ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ | ການຂະຫຍາຍໄຟຟ້າໃນເຂດຊົນນະບົດໄດ້ຮັບການປັບປຸງ ແລະ ເພີ່ມການຄ້າພະລັງງານໄຟຟ້າ | ໄຟຟ້າຄົວເຮືອນຈະເພີ່ມຂຶ້ນເຖິງ 100% ໃນປີ 2020 (2016 ຕາມຂໍ້ມູນແມ່ນ ກວມເອົາ: 91%) | **ໂຄງການທີ່ພວມດໍາເນີນ**<br>ໂຄງການເງິນກູ້ຢືມຂອງລັດຖະບານ (ຄັ້ງວັນທີ 31 ທັນວາ 2016):<br>ຈໍານວນ: 16<br>ມູນຄ່າ: $339 ລ້ານ<br><br>**ການດໍາເນີນງານ ແລະ ການປະກອບສ່ວນຕາມແຜນທີ່ວາງໄວ້:**<br><br>**ສໍາລັບລັດຖະບານ**<br>ການສະໜອງທຶນ: ທຶນກູ້ຢືມຈາກແຫຼ່ງທຶນທົ່ວໄປແບບມີເງື່ອນໄຂຜ່ອນຜັນ ແລະທຶນຊ່ວຍເຫຼືອຈາກກອງທຶນພັດທະນາອາຊີມູນຄ່າ $421 ລ້ານ ແລະ ທຶນສົມທົບມູນຄ່າ $40 ລ້ານ ສໍາລັບ 2017–2020<br><br>**ການຊ່ວຍເຫຼືອທາງດ້ານວິຊາການ**<br><br>ການສະໜອງທຶນຊ່ວຍເຫຼືອ: $6,5 ລ້ານ ຈາກກອງທຶນພິເສດເພື່ອການ ຊ່ວຍເຫຼືອທາງດ້ານວິຊາການ ສໍາລັບ 2017–2020 |
| | | ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນໄດ້ຮັບການສົ່ງເສີມໂດຍຜ່ານການທ່ອງທ່ຽວ | ຈໍານວນນັກທ່ອງທ່ຽວຕ່າງປະເທດເພີ່ມຂຶ້ນຮອດ 6,8 ລ້ານຄົນໃນປີ 2020 (2015 ຕາມຂໍ້ມູນ ແມ່ນມີ 4,7 ລ້ານຄົນ) | |
| | | ຕົວເມືອງຕາມແລວທາງເສດຖະກິດໄດ້ຮັບການພັດທະນາ | ການບໍລິການຕົວເມືອງໄດ້ຮັບການປັບປຸງເຊິ່ງລວມທັງຄວາມປອດໄພ ແລະ ການເຄື່ອນສັນຈອນ | |
| | ສົ່ງເສີມການພັດທະນາວິສາຫະກິດເອກະຊົນ | ນະໂຍບາຍສົ່ງເສີມການຂະຫຍາຍຕົວຂອງວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ໄດ້ຮັບການປັບປຸງ | ຈໍານວນມື້ທັງໝົດທີ່ຕ້ອງການໃນການເລີ່ມທຸລະກິດຈະຫຼຸດລົງເຫລືອ 62 ມື້ ໃນປີ 2020 (ຈາກ 72 ມື້ ຕາມຂໍ້ມູນປີ 2015) | |
| | ເພີ່ມຜະລິດຕະພາບ ແລະ ສົ່ງເສີມການຜະລິດກະສິກໍາເປັນສິນຄ້າ | ພື້ນຖານໂຄງລ່າງໃນເຂດຊົນນະບົດທີ່ມີປະສິດທິຜົນ ແລະ ການຂະຫຍາຍ ການຜະລິດກະສິກໍາເປັນສິນຄ້າ ໄດ້ຮັບການຍົກລະດັບ | ການຂະຫຍາຍຊົນລະປະທານເພື່ອການຜະລິດໃນລະດູແລ້ງ ໃຫ້ຮອດ 315.000 ເຮັກຕ້າໃນປີ 2020 (ຈາກ 103.000 ເຮັກຕ້າ ຕາມຂໍ້ມູນໃນປີ 2015)<br>ການສົ່ງອອກເຂົ້າຈະເພີ່ມຂຶ້ນ 0,60 ລ້ານໂຕນ ໃນປີ 2020 (ຈາກ 0,45 ລ້ານໂຕ້ນ ຕາມຂໍ້ ມູນໃນປີ 2012) | |
| | ປັບປຸງການເຂົ້າເຖິງນໍ້າປະປາ ແລະ ສຸຂາພິບານແບບຍືນຍົງ | ການເຂົ້າເຖິງນໍ້າປະປາ ແລະ ການບໍລິການສຸຂາພິບານໄດ້ຮັບການປັບປຸງ | ປະຊາກອນ 90% ຈະໄດ້ນໍາໃຊ້ນໍ້າສະອາດໃນປີ 2020 (ຈາກ 84% ຕາມຂໍ້ມູນໃນປີ 2014)<br>ປະຊາກອນ 75% ໄດ້ນໍາໃຊ້ສຸຂາພິບານທີ່ໄດ້ຮັບການປັບປຸງໃນປີ 2020 (ຈາກ 67% ຕາມຂໍ້ມູນໃນປີ 2012) | |

| ເປົ້າໝາຍຂອງຍຸດທະສາດການຮ່ວມ ແລະ ຜົນກະທົບທີ່ກ່ຽວຂ້ອງ | ຂົງເຂດບູລິມະສິດຂອງຍຸດທະສາດເພື່ອການຮ່ວມມື | ບັນດາໝາກຜົນທີ່ເອດີບີປະກອບສ່ວນ | ຕົວຊີ້ວັດໝາກຜົນ | ປະລິມານທຶນຂອງຍຸດທະສາດເພື່ອການຮ່ວມມື |
|---|---|---|---|---|
| | | | | |
| (ii) ເພີ່ມການພັດທະນາຊັບພະຍາກອນມະນຸດ | ສ້າງຊັບພະຍາກອນມະນຸດໃຫ້ມີສີມື | ເລັ່ງການເຄື່ອນຍ້າຍຕະຫລາດແຮງງານໄປຫາ ອຸດສະຫະກຳ ແລະ ການບໍລິການ ທີ່ຕ້ອງການແຮງງານຈຳນວນຫລາຍທີ່ມີສີມື ແລະ ຄວາມຮູ້ | ນັກຮຽນ 60% ທີ່ຈົບຊັ້ນມັດທະຍົມຕອນປາຍ ຈະສະໝັກເຂົ້າຮຽນຢູ່ໃນອະຊີວະສຶກສາ ໃນປີ 2020 (ຈາກ 56% ຕາມຂໍ້ມູນໃນປີ 2015)<br>ການສະໝັກເຂົ້າຮຽນຢູ່ໃນຂະແໜງອະຊີວະສຶກສາ ຈະເພີ່ມຂຶ້ນເກີນ 105.000 ຄົນໃນປີ 2020 (ຈາກ 65.000 ຄົນຕາມຂໍ້ມູນໃນປີ 2015)<br>ດັດສະນີຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ຂອງການສະໝັກເຂົ້າຮຽນທັງໝົດໃນມັດທະຍົມຕອນປາຍ ເພີ່ມຂຶ້ນເປັນ 0,97 ແລະ ສັດສ່ວນການຈົບຊັ້ນເພີ່ມຂຶ້ນ ເປັນ 1,03 | |
| | | | ໃນປີ 2020 (ຈາກ 0,87 ສຳລັບ ນັກຮຽນທີ່ເຂົ້າຮຽນ ແລະ 0,84 ສຳລັບ ນັກຮຽນທີ່ຈົບຊັ້ນ ຕາມຂໍ້ມູນໃນປີ 2015) | |
| | ປັບປຸງການບໍລິການດ້ານສາທາລະນະສຸກ | ການປົກຄຸມສຸຂະພາບທຸກທົ່ວໜ້າ ແລະ ການສະໜອງເງິນ ແລະ ການປະຕິຮູບການຄຸ້ມຄອງ ໄດ້ຮັບການສ້າງຕັ້ງຂຶ້ນ | ໃນປີ 2020, 80% ຂອງປະຊາກອນ ໄດ້ຮັບ ການຄຸ້ມຄອງພາຍໃຕ້ແຜນງານການຄຸ້ມຄອງສຸຂະພາບຂອງສັງຄົມ (ຈາກ 30,36% ຕາມຂໍ້ມູນໃນປີ 2015)<br>ອັດຕາສ່ວນການເສຍຊີວິດຂອງແມ່ ຕໍ່ 100.000 ຄົນຫຼຸດລົງເຫຼືອ 200 ຄົນ ໃນປີ 2020 (ຫຼຸດ ຈາກ 357 ຄົນຕາມຂໍ້ມູນໃນປີ 2011)<br>ອັດຕາສ່ວນການເກີດທີ່ມີໝໍປະສູດ ໄດ້ຮັບການຝຶກອົບຮົມເຂົ້າຮ່ວມ ເພີ່ມ ຂຶ້ນເປັນ 70% ໃນປີ 2020 (ຈາກ 58% ຕາມຂໍ້ມູນໃນປີ 2011) | |

| | | | | |
|---|---|---|---|---|
| (iii) ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປັບຕົວໃຫ້ເຂົ້າກັບການປ່ຽນແປງ ດິນຟ້າອາກາດ | ປັບປຸງສະພາບຂອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | ການອະນຸລັກແຫລ່ງນໍ້າ ໄດ້ຮັບ ການປັບປຸງ ເຊິ່ງ ລວມທັງ ການຄຸ້ມຄອງການນຳໃຊ້ທີ່ດິນ ກໍ່ໄດ້ຮັບການປັບປຸງ | ອອກໃບຕາດິນ 400.000 ສະບັບ ໃນເຂດຊົນນະບົດ ແລະ ຕົວເມືອງ ລະຫວ່າງ ປີ 2016−2020<br>ເຂດປ່າໄມ້ປົກຄຸມຈະເພີ່ມຂຶ້ນເປັນ 70% ໃນປີ 2020 (ຈາກ 42% ຕາມຂໍ້ມູນໃນປີ 2010) | |
| | ຮັກສາຜົນຮັບຈາກຈະແໜງກະສິກຳໂດຍປັດສະຈາກການລາຍຊັບພະຍາກອນທຳມະຊາດ | ການປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ ຂອງພື້ນຖານໂຄງລ່າງໃນເຂດຊົນນະບົດທີ່ມີປະສິດທິຜົນ, ການຄຸ້ມຄອງຄຸນນະພາບນໍ້າ ແລະ ແບບວິທີປະຕິບັດທາງດ້ານການຜະລິດກະສິກຳທີ່ສາມາດປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ ໄດ້ຮັບການປັບປຸງ | ຮັບຮອງເອົາຍຸດທະສາດທຸລະກິດກະສິກຳ ແລະ ກະສິກຳແບບຮັບມືກັບການປ່ຽນແປງສະພາບອາກາດ ໃນປີ 2020 (ຍັງບໍ່ທັນມີໃນປີ 2016)<br><br>ພື້ນທີ່ທີ່ສາມາດປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດໃນການປູກເຂົ້າ ແລະ ພືດຜັກເພີ່ມຂຶ້ນ 5.000 ເຮັກຕ້າໃນປີ 2023 | |
| | ປັບປຸງການປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການບໍລິຫານຄວາມສ່ຽງທາງດ້ານໄພພິບັດ | ປ່າໄມ້ ແລະ ລະບົບນິເວດອື່ນໆ ໄດ້ຮັບການເພີ່ມທະວີ ໂດຍເຮັດໃຫ້ປະຊາຊົນໄດ້ຮັບຜົນກະທົບຈາກ ໄພພິບັດ ແລະ ເຫດການທີ່ກ່ຽວກັບສະພາບການປ່ຽນແປງດິນຟ້າອາກາດໜ້ອຍລົງ | ແຜນງານການພື້ນຖານໂຄງລ່າງໃນເຂດຊົນນະບົດທີ່ ມີປະສິດທິຜົນ ໄດ້ຮັບການຍົກລະດັບໃຫ້ທັນສະໄໝ ເພື່ອປັບປຸງ ການປັບຕົວໃຫ້ເຂົ້າກັບ ການປ່ຽນແປງດິນຟ້າອາກາດ (ຂໍ້ມູນສຳລັບປີ 2017 ແມ່ນຍັງບໍ່ມີ )<br>ການສັງລວມຂໍ້ມູນທີ່ແຍກຕາມເພດ ໄດ້ຮັບການກະກຽມໃນປີ 2020 (ບໍ່ມີຂໍ້ມູນໃນປີ 2015) | |

ADB = ທະນາຄານພັດທະນາອາຊີ, CPS = ຍຸດທະສາດເພື່ອການຮ່ວມມື, EVI = ດັດສະນີຄວາມສ່ຽງທາງດ້ານເສດຖະກິດ, GNI = ຍອດລວມລາຍຮັບແຫ່ງຊາດ, HAI = ດັດສະນີຊັບສິນດ້ານບຸກຄະລາກອນ, PRI = ພື້ນຖານໂຄງລ່າງໃນເຂດຊົນນະບົດທີ່ມີປະສິດທິຜົນ, TVET = ອາຊີວະສຶກສາ.

ແຫຼ່ງຂໍ້ມູນ: ເອດີບີ; ແລະ ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກະຊວງແຜນການ ແລະ ການລົງທຶນ. 2016. *ແຜນພັດທະນາເສດຖະກິດ–ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII, 2016–2020. ນະຄອນຫຼວງວຽງຈັນ.*

## ແຜນການຄຸ້ມຄອງ ແລະ ນຳໃຊ້ຄວາມຮູ້ຂອງປະເທດ

### ກ. ຄວາມຕ້ອງການດ້ານຄວາມຮູ້

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ (ສປປ ລາວ) ຕ້ອງການຄວາມຊ່ວຍເຫຼືອໃນການພັດທະນາຂີດຄວາມສາມາດ ແລະ ຄຳປຶກສາເພື່ອກຳນົດນະໂຍບາຍ ແລະ ຍຸດທະສາດ, ປັບປຸງການບໍລິຫານຄຸ້ມຄອງເສດຖະກິດມະຫາພາກ ແລະ ຂະແໜງການໂດຍອີງໃສ່ຄວາມຮູ້ເປັນຫລັກ ແລະ ເພີ່ມຂີດຄວາມສາມາດໃຫ້ແກ່ພາກລັດ ໃນການສະໜັບສະໜູນ ການຂະຫຍາຍຄວາມຫລາກຫລາຍຂອງຂະແໜງການຜະລິດ. ຍັງຕ້ອງການຜະລິດຕະພັນທາງດ້ານຄວາມຮູ້ ແລະ ການບໍລິການ ເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ຊ່ວຍການຂະຫຍາຍຕົວທາງດ້ານເສດຖະກິດຕາມທິດສີຂຽວ, ຄວາມສະເໝີພາບບົດບາດຍິງ-ຊາຍ, ການຮ່ວມມືພາກລັດ–ເອກະຊົນ ແລະ ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ – ໂດຍສະເພາະແມ່ນການຈັດຕັ້ງປະຕິບັດພັນທະຕໍ່ປະຊາຄົມເສດຖະກິດອາຊຽນ ແລະ ການອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງ ແລະ ການຄ້າ.

2. **ລຳດັບຄວາມສຳຄັນຂອງຂະແໜງການ ແລະ ເນື້ອໃນວຽກທີ່ສຳຄັນ.** ຍຸດທະສາດເພື່ອການຮ່ວມມື, 2017–2020 ຂອງທະນາຄານພັດທະນາອາຊີ (ເອດີບີ) ສຳລັບ ສປປ ລາວ ຈະສົ່ງເສີມການລົງທຶນ, ການປະຕິຮູບດ້ານນະໂຍບາຍ ແລະ ການພັດທະນາຂີດຄວາມສາມາດ ເພື່ອສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດແບບສົມສ່ວນ ແລະ ຍືນຍົງ ຫລາຍຂຶ້ນ. ການດຳເນີນງານແມ່ນໄປຕາມໝາກຜົນຂອງແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII, 2016–2020 ແລະ ບູລິມະສິດຂອງຍຸດທະສາດເພື່ອການຮ່ວມມື: (i) ການພັດທະນາພາກເອກະຊົນ ແລະ ພື້ນຖານໂຄງລ່າງເພື່ອສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້; (ii) ການພັດທະນາຊັບພະຍາກອນມະນຸດ; ແລະ (iii) ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍຖືເອົາວຽກຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ການປົກຄອງເປັນວຽກປົ່ນອ້ອມທີ່ພົວພັນກັບຂະແໜງການອື່ນ.

3. **ຂໍ້ຈຳກັດທາງດ້ານຄວາມຮູ້ຕໍ່ກັບການຂະຫຍາຍຕົວເສດຖະກິດແບບສົມສ່ວນ ແລະ ຍືນຍົງ.** ສປປ ລາວ ຈຳເປັນຕ້ອງຂະຫຍາຍຄວາມຫລາກຫລາຍຂອງຂະແໜງການຜະລິດທາງດ້ານເສດຖະກິດຂອງຕົນ ຈາກການເອື່ອຍອີງສູງ ຕໍ່ຂະແໜງຊັບພະຍາ ກອນທຳມະຊາດ ແລະ ການຂະຫຍາຍຜະລິດຕະພັນ ແລະ ແລະຕະຫລາດເພື່ອການສົ່ງອອກ. ການພັດທະນາຊັບພະຍາກອນມະນຸດທີ່ບໍ່ພຽງພໍ ພາໃຫ້ເກີດມີຜະລິດຕະພາບແຮງງານຕ່ຳ ແລະ ບໍ່ສອດຄ່ອງກັນ ລະຫວ່າງ ຄວາມຕ້ອງການ ແລະ ການສະໜອງແຮງງານ. ຈຳກັດຂີດຄວາມສາມາດໃນການບໍລິຫານຊັບພະຍາກອນທຳມະຊາດ ແມ່ນຂໍ້ຈຳກັດຫຼັກ ໃນການຍົກລະດັບຜະລິດຕະພາບການຜະລິດກະສິກຳ, ການປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການກະກຽມຄວາມພ້ອມໃນການຮັບມືກັບໄພພິບັດທາງທຳມະຊາດ. ການປົກຄອງ ແລະ ການບໍລິຫານລັດ ແມ່ນຍັງບໍ່ພຽງພໍ ເຊິ່ງພາໃຫ້ເກີດມີສະພາບແວດລ້ອມ ທີ່ບໍ່ເອື້ອອຳນວຍໃຫ້ແກ່ການລົງທຶນຂອງພາກເອກະຊົນ ແລະ ເພີ່ມຄວາມບໍ່ເທົ່າທຽມກັນຫລາຍຂຶ້ນ.

4. **ບົດຮຽນທີ່ຖອດຖອນໄດ້ຈາກປະສົບການທີ່ຜ່ານມາ.** ຜະລິດຕະພັນທາງດ້ານຄວາມຮູ້ ແລະ ການບໍລິການ ຂອງ ເອດີບີ ໃນ ສປປ ລາວ ບາງຄັ້ງແມ່ນຂຶ້ນກັບການສະໜອງ ໂດຍການປະສານງານ ລະຫວ່າງ ພະແນກການຕ່າງໆ ແລະ ບັນດາຄູ່ຮ່ວມພັດທະນາອື່ນໆຍັງມີຂໍ້ຈຳກັດ. ຈຳເປັນຕ້ອງມີວິທີການຢ່າງມີຍຸດທະສາດ ເພື່ອຮັບປະກັນການຮ່ວມມືປະສານງານກັນລະຫວ່າງການປະຕິບັດງານຕ່າງໆ, ແຜນງານດ້ານຄວາມຮູ້ທີ່ແນໃສ່ການເພີ່ມມູນຄ່າ, ການລວບລວມຄວາມຮູ້ຢ່າງເປັນລະບົບຕະຫຼອດວົງຈອນຂອງການດຳເນີນງານ ແລະ ການສ້າງຂີດຄວາມສາມາດທີ່ອີງໃສ່ການປະເມີນສະຖາບັນທີ່ເປັນເປົ້າໝາຍຢ່າງມີປະສິດທິຜົນ.

## ຂ. ຂອບເຂດຂອງການດຳເນີນວຽກງານຄວາມຮູ້ຕາມແຜນທີ່ໄດ້ກຳໜົດຂອງ ເອດີບີ

5. ແຜນການຄຸ້ມຄອງແລະນຳໃຊ້ຄວາມຮູ້ຂອງປະເທດ ສປປ ລາວ ກຳນົດບຸລິມະສິດສຳລັບຜະລິດຕະພັນ ແລະ ການບໍລິການທາງດ້ານຄວາມຮູ້ ໂດຍອີງຕາມສາມລິມະສິດຍຸດທະສາດຂອງຍຸດທະສາດເພື່ອການຮ່ວມມືກັບ ປະເທດ ພ້ອມດ້ວຍສອງວຽກຫຼັກທີ່ກ່ຽວພັນເຖິງວຽກຂະແໜງອື່ນ. ໂດຍມີການຮັບຮູ້ວ່າ ຜະລິດຕະພັນແລະ ການບໍລິການທາງດ້ານຄວາມຮູ້ທີ່ເກີດຈາກວົງຈອນການດຳເນີນງານໃນແຕ່ລະຂັ້ນ, ຄວາມຮູ້ທີ່ໄດ້ຮັບຈະສືບຕໍ່ໄດ້ຮັບການກັ່ນຕອງແລະເຮັດໃຫ້ເປັນລະບົບເພື່ອເຜີຍແຜ່ຢ່າງທັນການ ໂດຍມີຈຸດສຸມໃສ່ວິທີການໃນການບັນລຸການຂະຫຍາຍຕົວທາງດ້ານເສດຖະກິດແບບສົມສ່ວນ ແລະ ຍືນຍົງ ພ້ອມທັງການຫຼຸດຜ່ອນຄວາມທຸກຍາກ. ຄວາມຕ້ອງການເຖິງຜະລິດຕະພັນ ແລະ ການບໍລິການທາງດ້ານຄວາມຮູ້ ຈະຖືກກຳນົດໂດຍຜ່ານການລົງທົບທວນແຜນງານ ແລະ ທົບທວນການດຳເນີນງານໂຄງການຂອງປະເທດ; ການປະເມີນຂະແໜງການ, ຍຸດທະສາດ ແລະແຜນການດຳເນີນງານຕ່າງໆ; ການທົບທວນບົດລາຍງານການເຮັດສຳເລັດໂຄງການຊ່ວຍເຫຼືອທາງດ້ານວິຊາການ ແລະ ໂຄງການ; ແລະ ເປັນສ່ວນໜຶ່ງຂອງການທົບທວນຍຸດທະສາດເພື່ອການຮ່ວມມືກັບປະເທດກາງສະໄໝ ແລະ ໄລຍະສຸດທ້າຍ. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະໄດ້ຮັບການສ້າງຂຶ້ນໂດຍຜ່ານບັນດາໂຄງການຕ່າງໆ ແລະ ໂຄງການຊ່ວຍເຫຼືອທາງດ້ານວິຊາການ, ລວມທັງບັນດາຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຕ່າງໆທີ່ໄດ້ຮັບການຜະລິດແລະເຜີຍແຜ່ໂດຍບັນດາກົມຄຸ້ມຄອງຄວາມຮູ້ຂອງ ເອດີບີ ແລະ ສະຖາບັນຂອງເອດີບີ[1].

6. ຄວາມສ່ຽງພາຍນອກ, ເປັນຕົ້ນແມ່ນເຫດການກະທົບຢ່າງກະທັນຫັນໃນພາກພື້ນຫຼືໃນໂລກ ແລະ ການປ່ຽນແປງຂອງຕະຫຼາດການສົ່ງອອກ ແລະ ວາລະບຸລິມະສິດຂອງລັດຖະບານ, ອາດຈະເປັນສິ່ງທີ່ກະຕຸ້ນຄວາມຕ້ອງການອັນຮີບດ່ວນໃນການປັບປຸງຄວາມຮູ້ຢ່າງທັນການ. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ແມ່ນທີ່ບໍ່ໄດ້ລະບຸໄວ້ຢ່າງລະອຽດໃນບັນຊີລາຍຊື່ສິ່ງພິມແລະງານຫລືເຫດການກ່ຽວກັບຄວາມຮູ້ທີ່ລະບຸປະຈຳປີ ອາດຈະຕ້ອງການໃຫ້ລະບຸໃນບັນຊີລາຍຊື່ດັ່ງກ່າວກໍ່ໄດ້. ບັນດາຜູ້ຊ່ຽວຊານໃນກົມອາຊີຕາເວັນອອກສ່ຽງໃຕ້ ແລະ ກົມຄຸ້ມຄອງຄວາມຮູ້ຂອງ ເອດີບີ ຈະໄດ້ຮັບການຮ້ອງຂໍເພື່ອໃຫ້ຊ່ວຍແກ້ໄຂບັນຫາຄວາມຕ້ອງການທາງດ້ານຄວາມຮູ້ທີ່ລະອຽດອ່ອນຕໍ່ເວລາແລະບໍ່ສາມາດຄາດການໄດ້, ແລະ ສະໜອງຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ໃຫ້ໄດ້ທັນກັບເວລາ. ໂຄງການຊ່ວຍເຫຼືອທາງດ້ານວິຊາການພາກພື້ນຂອງ ເອດີບີ ທີ່ພວມດຳເນີນການຢູ່ ແມ່ນສາມາດດັດປັບໃຫ້ເໝາະສົມກັບຄວາມຕ້ອງການສະເພາະ, ໂດຍມີການສະໜອງຊັບພະຍາກອນຕ່າງໆເພື່ອຊ່ວຍໃນການແຈ້ງຕອບຕໍ່ຄຳສະເໜີຢ່າງທັນການ[2]. ການບໍລິການ "myQuery" ທີ່ໄດ້ເປີດໂຕໃນເດືອນ ເມສາ 2017 ໂດຍກົມການພັດທະນາແບບຍືນຍົງແລະການປ່ຽນແປງດິນຟ້າອາກາດ ສາມາດສະໜອງຂໍ້ມູນ, ຂ່າວສານ ແລະ ການວິເຄາະທີ່ໜ້າເຊື່ອຖືໄດ້ຢ່າງໄວວາ ເພື່ອແຈ້ງຕອບຂໍ້ສອບຖາມ ເພື່ອສະໜັບສະໜູນໃຫ້ແກ່ວຽກເສດຖະກິດ, ຂະແໜງການ ແລະ ຄວາມຮູ້ໃນວຽກສະເພາະຂະແໜງການ.[3]

7. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະປະກອບດ້ວຍດ້ານ (i) ເສດຖະກິດ, ຂະແໜງການ ແລະ ວຽກສະເພາະຂະແໜງການ; (ii) ການບໍລິການໃຫ້ຄຳປຶກສາທາງດ້ານນະໂຍບາຍ; (iii) ການຊ່ວຍເຫລືອທາງດ້ານວິຊາການສຳລັບ ການຖ່າຍໂອນ ແລະ ການສົ່ງເສີມຄວາມຮູ້; (iv) ການບໍລິການສົ່ງເສີມການພັດທະນາຂີດຄວາມສາມາດ; (v) ການລອບລວມວິທີ

---

[1] ກົມຄຸ້ມຄອງຄວາມຮູ້ ໂດຍຫຼັກແລ້ວປະກອບດ້ວຍ ກົມ ການພັດທະນາແບບຍືນຍົງແລະການປ່ຽນແປງດິນຟ້າອາກາດ, ກົມຄົ້ນຄວ້າເສດຖະກິດແລະການຮ່ວມມືພາກພື້ນ ແລະ ກົມປະເມີນຜົນອິດສະຫຼະ.

[2] ເອດີບີ. 2015. *ຄວາມຊ່ວຍເຫຼືອທາງດ້ານວິຊາການໃນພາກພື້ນ ສຳລັບ ການສົ່ງເສີມການພັດທະນາຄວາມຮູ້ໃນອາຊີຕາເວັນອອກສ່ຽງໃຕ້*. ນະຄອນຫຼວງມະນິລາ.

[3] ເຖິງແມ່ນວ່າ ສາທາລະນະຊົນຈະສາມາດເຂົ້າເຖິງການບໍລິການດັ່ງກ່າວກໍ່ຕາມ, ແຕ່ການບໍລິການແມ່ນພວມໄດ້ຮັບການສ້າງຂຶ້ນເພື່ອແຈ້ງຕອບຕໍ່ຂໍ້ສອບຖາມທີ່ຍົກຂຶ້ນໂດຍພະນັກງານຂອງ ເອດີບີ.

8. ປະຕິບັດທີ່ດີທີ່ສຸດ, ການສຶກສາທົດລອງ, ເທັກໂນໂລຊີ ແລະ ນະວັດຕະກຳ ແລະພ້ອມດ້ວຍ ນະໂຍບາຍໃໝ່ທີ່ຈະປັບປຸງຂອດບໍລິການຂອງພາກລັດ; (vi) ບົດລາຍງານການປະເມີນຜົນ; ແລະ (vii) ການພັດທະນາເຄືອຂ່າຍການແບ່ງປັນຄວາມຮູ້. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະໄດ້ຮັບການເຜີຍແຜ່ໂດຍຜ່ານແຜນງານການຝຶກອົບຮົມ, ການສຳມະນາ, ກອງປະຊຸມປະຕິບັດການ ແລະ ສື່ສັງຄົມອອນລາຍ; ແລະ ໂດຍຜ່ານເວບໄຊສຂອງ ເອດີບີ ແລະ ສຳນັກງານປະຈຳປະເທດ, ຫ້ອງສະມຸດ ແລະພ້ອມທັງ ບົດລາຍງານຂອງສື່ມວນຊົນ.[1] ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະຖືກແປເປັນພາສາລາວ. ເອດີບີ ຈະສົ່ງເສີມການນຳໃຊ້ຄວາມຮູ້ໃນພາກພື້ນ ຕໍ່ກັບບັນຫາທາງດ້ານການພັດທະນາໃນ ສປປ ລາວ, ເສີມສ້າງຈຸດເຊື່ອມໂຍງກັບສະຖາບັນຄວາມຮູ້ໃນພາກພື້ນ ແລະ ສົ່ງເສີມການຮ່ວມມື – ເຊິ່ງລວມເຖິງການຮ່ວມມື ລະຫວ່າງ ບັນດາປະເທດກຳລັງພັດທະນາພາຍໃຕ້ແຜນງານການຮ່ວມມືທາງດ້ານເສດຖະກິດອະນຸພາກພື້ນແມ່ນ້ຳຂອງ ແລະ ປະຊາຄົມເສດຖະກິດອາຊຽນ. ແຜນການເສີມສ້າງຄວາມຮູ້ຂັ້ນປະເທດຈະຖືກດັດປັບໃຫ້ໃຊ້ງານໄດ້ໃນຂະແໜງການດັ່ງຕໍ່ໄປນີ້ ໂດຍສອດຄ່ອງກັບບູລິມະສິດຍຸດທະສາດຂອງ ຍຸດທະສາດເພື່ອການຮ່ວມກັບປະເທດ.

### 1. ການພັດທະນາພາກເອກະຊົນ ແລະ ພື້ນຖານໂຄງລ່າງເພື່ອສົ່ງເສີມການສ້າງວຽກເຮັດງານທຳແລະສ້າງລາຍໄດ້

9. **ການພັດທະນາພື້ນຖານໂຄງລ່າງ ແລະ ການຮ່ວມມືແລະເຊື່ອມໂຍງກັບພາກພື້ນ.** ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະຊ່ວຍ ສປປ ລາວ ໃນການສົ່ງເສີມການພັດທະນາພື້ນຖານໂຄງລ່າງ ໂດຍສຸມໃສ່ຂະແໜງພະລັງງານ, ນ້ຳປະປາ ແລະສຸຂາພິບານ, ການບໍລິການໃນຕົວເມືອງ, ກະສິກຳ, ສາທາລະນະສຸກ, ການທ່ອງທ່ຽວ ແລະ ການຂົນສົ່ງ. ກ່ຽວກັບນ້ຳປະປາ ແລະສຸຂາພິບານ, ເອດີບີ ຈະສືບຕໍ່ດຳເນີນແຜນງານການສ້າງຂີດຄວາມສາມາດໃນການອອກແບບໂຄງການໃຫ້ແກ່ອົງການກໍ່ຄືໜ່ວຍງານທີ່ດຳເນີນການແລະຈັດຕັ້ງປະຕິບັດໂຄງການ, ການບໍລິຫານ, ການດຳເນີນການ ແລະ ການບຳລຸງຮັກສາ, ການຕິດຕາມກວດກາແລະການປະເມີນຜົນ ແລະ ບັນຫາຕ່າງໆກ່ຽວກັບຄວາມປອດໄພ. ໃນຂະແໜງຂົນສົ່ງ, ເອດີບີ ຈະສຸມໃສ່ວຽກງານການປົກຄອງ, ການບໍລິຫານທາງດ້ານການເງິນ, ແບບວິທີປະຕິບັດທີ່ດີເພື່ອສ້າງຄວາມເຂັ້ມແຂງໃນການດຳເນີນງານແລະການບຳລຸງຮັກສາ, ໂຄງສ້າງທາງດ້ານການບໍລິຫານເພື່ອສົ່ງເສີມການພັດທະນາລະບົບຂົນສົ່ງໃນຕົວເມືອງໃຫ້ຍືນຍົງ ແລະ ມີຄວາມປອດໄພທາງດ້ານການຈາລະຈອນ.

10. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະແນໃສ່ຄວາມຮູ້ກ່ຽວກັບ ການເຊື່ອມໂຍງ ແລະ ການຮ່ວມມືກັບພາກພື້ນ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກແບບວິທີປະຕິບັດທີ່ດີໃນພາກພື້ນ. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ກ່ຽວກັບການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ; ເຂດເສດຖະກິດພິເສດ; ການພັດທະນາ ຕົວເມືອງຕາມແລວເສດຖະກິດ; ແລະ ການເຊື່ອມໂຍງຂອງວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ກັບເຄືອຂ່າຍການຜະລິດໃນພາກພື້ນແລະທົ່ວໂລກ ຈະເພີ່ມຄວາມຫຼາກຫຼາຍໃຫ້ແກ່ເສດຖະກິດ, ການຄ້າ ແລະ ທຸລະກິດທາງດ້ານກະສິກຳລະຫວ່າງປະເທດ ແລະ ການທ່ອງທ່ຽວ. ການສົ່ງເສີມການຈັດຕັ້ງປະຕິບັດພັນທະສັນຍາຂອງປະຊາຄົມເສດຖະກິດອາຊຽນໃນຂົງເຂດບູລິມະສິດຈະສົ່ງເສີມໃຫ້ພາກພື້ນເປັນເຂດທີ່ມີການແຂ່ງຂັນ ແລະ ມີຄວາມຕື່ນຕົວຫຼາຍຂຶ້ນ ໂດຍມີຕະຫຼາດແລະຖານການຜະລິດ

---

[1] ສຳລັບການເຜີຍແຜ່ ແລະ ແບ່ງປັນຄວາມຮູ້, ຊັບພະຍາກອນປະກອບດ້ວຍ: (i) K-Nexus, ເຊິ່ງເປັນຖານຂໍ້ມູນອອນລາຍຂອງຜະລິດຕະພັນ ແລະ ການບໍລິການທາງດ້ານຄວາມຮູ້ທີ່ສ້າງຂຶ້ນແລະກະກຽມໂດຍທຸກພະແນກ; (ii) ເອດີບີ. 2016. *ການເລີ່ມນຳໃຊ້ຄວາມຮູ້ດ້ານການດຳເນີນງານຢ່າງເປັນປະໂຫຍດ: ຊ່ອງຫວ່າງ, ໂອກາດ ແລະ ທາງເລືອກ ເພື່ອຍົກລະດັບການຮຽນຮູ້ຂ້າມໂຄງການຢູ່ ເອດີບີ.* ນະຄອນຫຼວງ ມະນີລາ; ແລະ (iii) ການພັດທະນາອາຊີ, ຊຸມຊົນຊ່ຽວຊານດ້ານ ການພັດທະນາທີ່ເອດີບີໃຫ້ການສະໜັບສະໜູນ, ລັດຖະກອນ, ອົງການຈັດຕັ້ງທາງສັງຄົມ, ນັກຄົ້ນຄວ້າ, ນັກສຶກສາ ແລະ ພາກສ່ວນອື່ນທີ່ໃຫ້ຄວາມສົນໃຈໃນການພັດທະນາສາກົນ ທີ່ໄດ້ຮັບການສະໜັບສະໜູນຈາກ ເອດີບີ. ເອດີບີ, ໂດຍຜ່ານວິທີການ "ຍຸກດີຈີຕອນ" (ເປັນຕົ້ນແມ່ນແບບຟອມສັ້ນກະທັດຮັດ, ເນື້ອໃນອອນລາຍທີ່ສາມາດເຜີຍແຜ່ໄດ້ທຸກຊ່ອງທາງ, ເປັນຕົ້ນມີຖີ່, ສື່ສັງຄົມອອນລາຍ ແລະ ເວບໄຊ້ ແລະ ບໍ່ໄດ້ຢູ່ໃນຮູບແບບເອກະສານ PDF) ເພື່ອແບ່ງປັນຄວາມຮູ້, ໄດ້ສະໜອງຊ່ອງທາງໃນການຄົ້ນຫາ ແລະ ແບ່ງປັນເນື້ອໃນໄດ້ຢ່າງງ່າຍດາຍ ແລະ ເຮັດໃຫ້ສາມາດຕັດສິນໃຈໄດ້ຢ່າງໄວວາ.

11. ອັນດຽວ. ການສຶກສາຈະແນະນຳກ່ຽວກັບວິທີການທີ່ຈະເຮັດໃຫ້ ສປປ ລາວ ສາມາດໄດ້ຮັບຜົນປະໂຫຍດເພີ່ມເຕີມຈາກແຜນງານອະນຸພາກພື້ນແມ່ນ້ຳຂອງ.

12. **ສ້າງຄວາມເຂັ້ມແຂງໃນການພັດທະນາພາກເອກະຊົນ.** ເອດີບີ ຈະສືບຕໍ່ສະໜັບສະໜູນການປຶກສາຫາລືທາງດ້ານນະໂຍບາຍກັບລັດຖະບານກ່ຽວກັບການບໍລິຫານເສດຖະກິດມະຫາພາກ ແລະ ພື້ນຖານໂຄງລ່າງ. ຜະລິດຕະພັນແລະ ການບໍລິການທາງດ້ານຄວາມຮູ້ ຈະຊ່ວຍສົ່ງເສີມຄວາມມີສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ແລະ ການເງິນ ແລະພ້ອມທັງການພັດທະນາພາກເອກະຊົນ, ໂດຍສະເພາະແມ່ນວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະປັບປຸງສະພາບທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ ແລະ ຈະໃຫ້ການຊ່ວຍເຫຼືອທາງດ້ານຄວາມຮູ້ສຳລັບການຮ່ວມມືລະຫວ່າງພາກລັດແລະເອກະຊົນ ເພື່ອເພີ່ມການລົງທຶນໃຫ້ແກ່ຂະແໜງກະສິກຳ, ສຶກສາ, ສາທາລະນະສຸກ, ນ້ຳປະປາແລະສຸຂາພິບານ, ພະລັງງານ ແລະ ທ່ອງທ່ຽວ.

13. **ການພັດທະນາກະສິກຳ.** ແຜນງານການສຶກສາແລະການສ້າງຂີດຄວາມສາມາດກ່ຽວກັບເຕັກນິກວິທີການທາງດ້ານກະ ສິກຳ, ຕ່ອງໂສ້ມູນຄ່າຂອງທຸລະກິດທາງດ້ານກະສິກຳ, ຊ່ອງຫວ່າງ ລະຫວ່າງ ສັກກະຍະພາບຕົວຈິງ ແລະ ສັກກະຍະພາບທີ່ເປັນປະໂຫຍດ, ປັດໄຈພື້ນຖານຂອງປະເທດ ແລະ ການພັດທະນາຕະຫຼາດ ໂດຍຄຳນຶງເຖິງຄວາມສະເໝີພາບບົດບາດ ຍິງ-ຊາຍ ຈະເປັນສິ່ງທີ່ສົ່ງເສີມຜະລິດຕະພາບທາງດ້ານກະສິກຳ ແລະ ການຫັນປ່ຽນໃຫ້ເປັນການຄ້າ. ຜະລິດຕະພັນທາງດ້ານການເງິນແບບໃໝ່ ຈະຖືກສ້າງຂຶ້ນເພື່ອສົ່ງເສີມການພັດທະນາວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ແລະ ການຊ່ວຍເຫຼືອເງິນກູ້ຢືມແກ່ທຸລະກິດທາງດ້ານກະສິກຳ. ຜະລິດຕະພັນທີ່ບໍ່ແມ່ນການກູ້ຢືມເພື່ອເພີ່ມອັດຕາຜົນຜະລິດ ແລະ ສົ່ງເສີມການຜະລິດໃຫ້ເປັນການຄ້າ ແລະ ການລົງທຶນກໍ່ຈະໄດ້ຮັບການພິຈາລະນາເຊັ່ນດຽວກັນ.

## 2. ການພັດທະນາຊັບພະຍາກອນມະນຸດ

14. **ການພັດທະນາທັກສະ.** ສປປ ລາວ ໄດ້ຖືກຈັດອັນດັບທີ 138 ຈາກ 188 ປະເທດ ໃນດັດສະນີການພັດທະນາຊັບພະຍາກອນມະນຸດ.[1] ເອດີບີ ຈະຊ່ວຍສະຖາບັນການສຶກສາຊັ້ນມັດທະຍົມຕອນປາຍ, ການສຶກສາຊັ້ນສູງ ແລະ ການຝຶກອົບຮົມ ແລະ ການສຶກສາທາງດ້ານວິຊາຊີບໃຫ້ມີປະສິດທິຜົນຍິ່ງຂຶ້ນ ແລະ ສອດຄ່ອງກັບຄວາມຕ້ອງການຂອງພາກອຸດສະຫະກຳໃຫ້ຫຼາຍຂຶ້ນໂດຍມີຈຸດເຊື່ອມຈອດທີ່ເຂັ້ມແຂງຂຶ້ນ ລະຫວ່າງ ການສຶກສາ ແລະ ການຈ້າງງານເຊິ່ງອີງຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ. ເພື່ອດັດປັບແລະປັບປຸງຄຸນນະພາບຂອງຂະແໜງການຍ່ອຍດັ່ງກ່າວ, ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະສົ່ງເສີມແຜນງານການຝຶກອົບຮົມ ແລະ ການສຳມະນາ, ການກະກຽມຫຼັກສູດ, ເຄື່ອງມືການສິດສອນ ແລະ ປຶ້ມຄູ່ມືທີ່ທັນສະໄໝ ແລະ ການບໍລິການຈັດຫາງານ.

15. **ການປິ່ນປົວທີ່ມີຄຸນນະພາບ.** ການຊ່ວຍເຫຼືອຂອງ ເອດີບີ ຈະປັບປຸງສະຖາບັນການຝຶກອົບຮົມທາງດ້ານການແພດແລະໃຫ້ຄວາມຮູ້ທີ່ຈຳເປັນໃນການຂະຫຍາຍລະບົບປະກັນສຸຂະພາບແຫ່ງຊາດ. ການປະເມີນຂະແໜງສາທາລະນະສຸກ, ຍຸດທະສາດແລະທິດທາງແຜນການຈະໄດ້ຮັບການປັບປຸງເພື່ອເປັນທິດຊີ້ນຳໃຫ້ແກ່ວຽກງານດັ່ງກ່າວ ແລະ ການລົງທຶນໃນຂະແໜງການອື່ນໆ.

## 3. ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ

---

[1] ໂຄງການພັດທະນາຂອງສະຫະປະຊາຊາດ. 2016. *ບົດລາຍງານການພັດທະນາຊັບພະຍາກອນມະນຸດ 2016*. ນະຄອນນິວຢອກ.

16. ເອດີບີ ຈະຊ່ວຍສ້າງຂີດຄວາມສາມາດໃນການວາງແຜນ ແລະ ການຄຸ້ມຄອງຂອງ ສປປ ລາວ ສຳລັບການປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ ເພື່ອໃຫ້ບັນລຸການຂະຫຍາຍຕົວຕາມທິດສີຂຽວ. ແຜນງານການສຶກສາ ແລະ ການສ້າງຂີດຄວາມສາມາດຈະຖືກສ້າງຂຶ້ນສຳລັບ ການບໍລິຫານພ້ອມທັງການວາງແຜນນຳໃຊ້ແລະການຄອບຄອງທີ່ດິນ, ການຄຸ້ມຄອງແລະການຟື້ນຟູຊັບພະຍາກອນທຳມະຊາດ, ການປັບຕົວໂດຍອີງຕາມລະບົບນິເວດແລະການເສີມສ້າງຄວາມສາມາດໃນການປັບຕົວ, ຄວາມປອດໄພກ່ຽວກັບນ້ຳ ແລະ ການນຳໃຊ້ຂໍ້ມູນຈາກການສຳຫຼວດໄລຍະໄກ ເພື່ອເພີ່ມ ຄວາມເຂົ້າໃຈໃນການໃຊ້ຊັບພະຍາກອນ. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ຈະສົ່ງເສີມການຄວບຄຸມຄຸນນະພາບນ້ຳ, ການຈັດການສິ່ງເສດເຫຼືອ, ການຄວບຄຸມມົນລະພິດ, ການສົ່ງເສີມວຽກງານທາງດ້ານລະບຽບການ ແລະ ການຮັກສາຄວາມປອດໄພ ແລະ ການເສີມສ້າງຂີດຄວາມສາມາດ ສຳລັບການສ້າງຄວາມອາດສາມາດເພື່ອການຄຸ້ມຄອງດ້ານການເງິນເພື່ອການປ່ຽນແປງດິນຟ້າອາກາດ.

### 4. ຄວາມສະເໝີພາບບົດບາດ ຍິງ-ຊາຍ ແລະ ການປົກຄອງ

17. ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ທັງໝົດຈະສອດແຊກວຽກດ້ານຄວາມສະເໝີພາບ ບົດບາດ ຍິງ-ຊາຍ. ຜະລິດຕະພັນແລະການບໍລິການດັ່ງກ່າວຈະສົ່ງເສີມທຸລະກິດຮອບດ້ານສຳລັບ ນັກທຸລະກິດຍິງ, ລວມເຖິງການປະເມີນທາງດ້ານບົດບາດຍິງ-ຊາຍ ແລະ ການລົງທຶນທີ່ປະສົບຜົນສຳເລັດທາງດ້ານການຄ້າ ໂດຍມີຫຼັກການການປະຕິບັດທາງສັງຄົມ. ການສ້າງຄວາມສາມາດໃນການປັບຕົວຂອງແມ່ຍິງໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຄວາມສ່ຽງທາງດ້ານໄພພິບັດຈະສ້າງຜົນປະໂຫຍດໃຫ້ແກ່ແມ່ຍິງ, ໂດຍສະເພາະແມ່ນຜູ້ທີ່ດຳເນີນທຸລະກິດກ່ຽວກັບກະສິກຳ.

## ຄ. ຂົງເຂດການຮ່ວມມືກັບຄູ່ຮ່ວມງານ

18. ສຳນັກງານປະຈຳປະເທດຈະຮ່ວມມືກັບສະຖາບັນການສຶກສາທັງໃນທ້ອງຖິ່ນແລະພາກພື້ນເພື່ອສ້າງ ແລະ ເຜີຍແຜ່ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້. ສະຖາບັນດັ່ງກ່າວປະກອບດ້ວຍ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ; ມະຫາວິທະຍາໄລແຫ່ງຊາດລາວ; ບັນດາກະຊວງທີ່ກ່ຽວຂ້ອງ, ຄະນະເຮັດວຽກ ແລະ ສະຖາບັນທາງດ້ານນະໂຍບາຍ; ສະມາຄົມເອກະຊົນ; ອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ; ແລະ ສະຖາບັນຄົ້ນຄວ້າອິດສະລະ. ນອກຈາກການເສີມສ້າງຄວາມຮ່ວມມືກັບກົມຄວາມຮູ້ ຂອງ ເອດີບີ ແລະ ສະຖາບັນຂອງເອດີບີ, ສຳນັກງານປະຈຳປະເທດຈະຊອກຫາໂອກາດເພື່ອເຮັດວຽກຢ່າງໃກ້ຊິດຂຶ້ນກັບບັນດາຄູ່ຮ່ວມພັດທະນາອື່ນເພື່ອປະສານສົມທົບໃນການສ້າງ, ການເຜີຍແຜ່ ແລະ ການນຳໃຊ້ຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ ທີ່ກ່ຽວພັນເຖິງດ້ານນະໂຍບາຍໃຫ້ຫຼາຍຂຶ້ນ. ການຜະລິດຜະລິດຕະພັນຄວາມຮູ້ ຈະໄດ້ເອົາເພີ່ມເຂົ້າເປັນວຽກໃໝ່ໃນ ກຸ່ມປະຕິບັດງານກ່ຽວກັບພື້ນຖານໂຄງລ່າງ ແລະ ເສດຖະກິດມະຫາພາກ ຊຶ່ງຮ່ວມນຳພາໂດຍ ເອດີບີ.[1]

19. **ການປະເມີນຜົນແລະຕິດຕາມກວດກາການສົ່ງເສີມຄວາມຮູ້.** ການເພີ່ມມູນຄ່າຂອງຜະລິດຕະພັນແລະການບໍລິການ ທາງດ້ານຄວາມຮູ້ຈະໄດ້ຮັບການຕິດຕາມກວດກາ ແລະ ປະເມີນຜົນໂດຍຜ່ານການນຳໃຊ້ທັງພາຍໃນແລະພາຍນອກ. ແຜນການເສີມສ້າງຄວາມຮູ້ຂັ້ນປະເທດຈະໄດ້ຮັບການຕິດຕາມກວດກາໂດຍຜ່ານ (i) ການທົບທວນແຜນຄຸ້ມຄອງແລະນຳໃຊ້ຄວາມຮູ້ ຂອງປະເທດປະຈຳປີ ເຊິ່ງເປັນສ່ວນໜຶ່ງຂອງວຽກໃນການລົງວາງແຜນງານຂອງປະເທດ, ວຽກການຮ່ວມທົບທວນການດຳເນີນງານ

---

[1] ມີກຸ່ມເຮັດວຽກສິບກຸ່ມເປັນເວທີປະສານສົມທົບທີ່ສຳຄັນ ສຳລັບ ແຕ່ລະຂົງເຂດພັດທະນາ ໃນຂັ້ນຕອນຂອງກອງປະຊຸມໂຕະມົນ ຂອງ ສປປ ລາວ. ລັດຖະບານເປັນຜູ້ນຳພາກຸ່ມເຮັດວຽກດັ່ງກ່າວ ເຊິ່ງປະກອບມີຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຜູ້ຕາງໜ້າຈາກພາກເອກະຊົນ. ກຸ່ມເຮັດວຽກກ່ຽວກັບເສດຖະກິດມະຫາພາກ ໄດ້ຈັດກອງປະຊຸມປະຕິບັດການຂຶ້ນໃນວັນທີ 5 ກໍລະກົດ 2017 ເພື່ອປຶກສາຫາລື ກ່ຽວກັບ ຮ່າງ *ບົດສຶກສາຄົ້ນຄວ້າປະເທດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ* ທີ່ໄດ້ຖືກກະກຽມໂດຍກົມຮ່ວມມື ເສດຖະກິດ ແລະ ພາກພື້ນ.

20. ໂຄງການຂອງປະເທດ ແລະ ປັບປຸງໃຫ້ແກ່ການປະເມີນຂະແໜງການ, ຍຸດທະສາດແລະທິດທາງແຜນການຕ່າງໆ; (ii) ບົດລາຍງານການເຮັດສຳເລັດໂຄງການ ແລະ ການປະເມີນບົດລາຍງານການເຮັດສຳເລັດ; (iii) ການທົບທວນໂຄງການທີ່ນອນໃນແຜນຊ່ວຍເຫຼືອ ແລະ ການເກັບກຳຂໍ້ມູນຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ທີ່ພວມດຳເນີນ ຂອງກົມອາຊີຕາເວັນອອກສ່ຽງໃຕ້ຢ່າງເປັນປະຈຳ; ແລະ (iv) ການທົບທວນຍຸດທະສາດການເພື່ອການຮ່ວມມືກັບປະເທດກາງສະໄໝ ແລະ ໄລຍະສຸດທ້າຍ.

**ງ. ການຈັດສັນທຶນ**

21. ຜູ້ຕາງໜ້າສຳນັກງານປະຈຳປະເທດສປປ ລາວຈະເປັນຜູ້ຮັບຜິດຊອບໃນການຄຸ້ມຄອງຄວາມຮູ້ຂອງປະເທດ. ເອດີບີ ມີແຜນທີ່ຈະສະໜອງທຶນມູນຄ່າປະມານ 2 ລ້ານໂດລາສະຫະລັດຕໍ່ປີ ສຳລັບ ໂຄງການຊ່ວຍເຫຼືອທາງດ້ານວິຊາການ, ໃນນັ້ນລວມມີອົງປະກອບໃນການສົ່ງເສີມການສ້າງຜະລິດຕະພັນ ແລະການບໍລິການທາງດ້ານຄວາມຮູ້. ຈຳນວນມູນຄ່າດັ່ງກ່າວແມ່ນຈະປະກອບສ່ວນເພີ່ມເຕີມໂດຍໂຄງການພາກພື້ນ, ກອງທຶນ, ການລົມທົບທຶນ ແລະ ກອງທຶນທີ່ສຳຮອງ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານຄວາມຮູ້ຢ່າງທັນການ. ໂຄງການລົງທຶນຈະມີອົງປະກອບຜະລິດຕະພັນ ແລະ ການບໍລິການທາງດ້ານຄວາມຮູ້ເຊັ່ນດຽວກັນ. ນອກຈາກການຊ່ວຍເຫຼືອສະເພາະປະເທດແລ້ວ, ສປປ ລາວ ຈະໄດ້ຮັບຜົນປະໂຫຍດຈາກຜະລິດຕະພັນແລະການບໍລິການທາງດ້ານຄວາມຮູ້ທີ່ກ່ຽວຂ້ອງກັບການດຳເນີນງານຂັ້ນປະເທດຈາກພະແນກການຕ່າງໆແລະສະຖາບັນຂອງ ເອດີບີ. ເອດີບີຈະສະໜອງຜູ້ຊ່ຽວຊານເພື່ອນຳໃຊ້ປະສົບການດ້ານການພັດທະນາທີ່ສຳຄັນຂອງ ເອດີບີ (ວັກ 6–7).

**ຈ. ຄວາມຮູ້ສະເພາະ ຫຼື ຄວາມຊ່ຽວຊານສະເພາະ**

22. ສປປ ລາວ ໄດ້ສະສົມປະສົບການ ແລະ ບົດຮຽນ ເພື່ອຈະແບ່ງປັນກັບປະເທດກຳລັງພັດທະນາອື່ນໆກ່ຽວກັບ ການບໍລິຫານເສດຖະກິດມະຫາພາກ, ການຄຸ້ມຄອງຊັບພະຍາກອນນ້ຳ, ການພັດທະນາຕົວເມືອງ ແລະ ການປະຕິຮູບຂະແໜງພະລັງງານ. ສະມາຊິກສະພາຂອງປະເທດເນປານໄດ້ມາຢ້ຽມຢາມ ສປປ ລາວ ໃນເດືອນກັນຍາ 2016 ເພື່ອແລກປ່ຽນບົດຮຽນກ່ຽວກັບການດຳເນີນງານພັດທະນາແລະການຮ່ວມມືພາກລັດ–ເອກະຊົນ ໃນຂະແໜງພະລັງງານ ແລະ ນ້ຳປະປາ ແລະ ສຸຂາພິບານ. ການແບ່ງປັນແລະເຜີຍແຜ່ຄວາມຮູ້ກັບພາກພື້ນຈະສືບຕໍ່ນັບມື້ນັບເພີ່ມຂຶ້ນພາຍໃຕ້ແຜນງານອະນຸພາກພື້ນແມ່ນ້ຳຂອງ, ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ ແລະ ເວທີອື່ນໆ. ລັດຖະກອນ ແລະ ສະຖາບັນຕ່າງໆຂອງ ສປປ ລາວ ຈະເຊື່ອມໂຍງກັບພາກສ່ວນອື່ນໃນພາກພື້ນ ເພື່ອສົ່ງເສີມການຮ່ວມມື ລະຫວ່າງ ປະເທດກຳລັງພັດທະນາ ກ່ຽວກັບ ການແບ່ງປັນຄວາມຮູ້ ແລະ ການໂອນຖ່າຍເທັກໂນໂລຊີນະວັດຕະກຳໃໝ່ຕາມແຕ່ລະກາລະແລະໂອກາດທີ່ເໝາະສົມ.

## ເອກະສານທີ່ກ່ຽວຂ້ອງ

http://www.adb.org/Documents/CPS/?id=LAO-2017

1. ການປະເມີນການຂະຫຍາຍຕົວແບບສົມສ່ວນ ແລະ ຍືນຍົງ
2. ຕາຕະລາງການປະສານສົມທົບທາງດ້ານການພັດທະນາ
3. ແຜນດຳເນີນທຸລະກິດຂອງປະເທດ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, 2018–2020